ສາລະບານ

ກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ ........ 6
ພາກທີ I ບົດບັນຍັດທົ່ວໄປ ........ 6
ມາດຕາ 1 ຈຸດປະສົງ ........ 6
ມາດຕາ 2 ການດຳເນີນຄະດີອາຍາ ........ 6
ມາດຕາ 3 ຄວາມຈຳເປັນຕ້ອງດຳເນີນຄະດີອາຍາ ........ 6
ມາດຕາ 4 ສາເຫດທີ່ພາໃຫ້ການດຳເນີນຄະດີອາຍາຕົກໄປ ........ 7
ມາດຕາ 5 ການບໍ່ໃຫ້ລ່ວງລະເມີດ ສິດ ແລະເສລີພາບຂອງພົນລະເມືອງ ........ 7
ມາດຕາ 6 ຄວາມສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ແລະສານ ........ 7
ມາດຕາ 7 ການຮັບປະກັນສິດໃນການຕໍ່ສູ້ຄະດີໃຫ້ແກ່ຜູ້ຖືກຫາ ........ 8
ມາດຕາ 8 ການສັນນິຖານວ່າເປັນຜູ້ບໍລິສຸດ ........ 8
ມາດຕາ 9 ສິດຂອງສານໃນການຕັດສິນຄະດີ ........ 8
ມາດຕາ 10 ການພິຈາລະນາຄະດີເປັນໝູ່ຄະນະ ........ 8
ມາດຕາ 11 ຄວາມເປັນເອກະລາດຂອງຜູ້ພິພາກສາ ........ 9
ມາດຕາ 12 ພາສາທີ່ໃຊ້ໃນການດຳເນີນຄະດີ ........ 9
ມາດຕາ 13 ການໄຕ່ສວນຄະດີຢູ່ທີ່ປະຊຸມສານຢ່າງເປີດເຜີຍ ........ 9
ມາດຕາ 14 ຜົນສັກສິດຂອງຄຳຕັດສິນຂອງສານ ........ 9
ມາດຕາ 15 ການຂໍຖອນຕົວ ແລະການຄ້ານຕົວ ........ 9
ມາດຕາ 16 ການບໍ່ອະນຸຍາດໃຫ້ເຂົ້າຮ່ວມໃນການພິຈາລະນາຄະດີດຽວກັນ ເປັນຄັ້ງທີສອງ ........ 10
ມາດຕາ 17 ການດຳເນີນຄະດີຮອບດ້ານ, ຄົບຖ້ວນ ແລະພາວະວິໄສ ........ 10
ມາດຕາ 18 ການຮັບປະກັນສິດ ຮ້ອງທຸກ ຫລືຮ້ອງຟ້ອງຂອງພົນລະເມືອງ ........ 10
ພາກທີ II ຫລັກຖານໃນຄະດີອາຍາ ........ 10
ມາດຕາ 19 ຫລັກຖານ ........ 10
ມາດຕາ 20 ປະເພດຫລັກຖານ ........ 11
ມາດຕາ 21 ການກວດກາ ແລະຕີລາຄາຫລັກຖານ ........ 11
ພາກທີ III ອົງການດຳເນີນຄະດີ ແລະຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາ ........ 12
ໝວດທີ 1 ອົງການດຳເນີນຄະດີອາຍາ ........ 12
ມາດຕາ 22 ອົງການດຳເນີນຄະດີອາຍາ ........ 12
ມາດຕາ 23 ອົງການສືບສວນ-ສອບສວນ ........ 12
ມາດຕາ 24 ສິດ ແລະໜ້າທີ່ຂອງພະນັກງານອົງການສືບສວນ-ສອບສວນ ........ 13
ມາດຕາ 25 ອົງການໄອຍະການປະຊາຊົນ ........ 14
ມາດຕາ 26 ສານປະຊາຊົນ ........ 14
ໝວດທີ 2 ຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາ ........ 14

ມາດຕາ 27 ຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາ..........14
ມາດຕາ 28 ຜູ້ຖືກຫາ ຫລືຈຳເລີຍ..........15
ມາດຕາ 29 ຜູ້ຖືກເສັຍຫາຍ..........16
ມາດຕາ 30 ໂຈດທາງແພ່ງ..........16
ມາດຕາ 31 ຜູ້ຮັບຜິດຊອບທາງແພ່ງ..........17
ມາດຕາ 32 ພະຍານ..........17
ມາດຕາ 33 ຜູ້ຊ່ຽວຊານ..........18
ມາດຕາ 34 ຜູ້ແປພາສາ..........18
ມາດຕາ 35 ທະນາຍຄວາມ ຫລືຜູ້ປົກປ້ອງອື່ນ..........19
ພາກທີ IV ການສືບສວນ-ສອບສວນຄະດີອາຍາ..........20
ໝວດທີ 1 ການເປີດການສືບສວນ-ສອບສວນຄະດີອາຍາ..........20
ມາດຕາ 36 ສາເຫດຂອງການເປີດການສືບສວນ-ສອບສວນ..........20
ມາດຕາ 37 ຄຳສັ່ງເປີດການສືບສວນ-ສອບສວນ..........20
ມາດຕາ 38 ການຕິດຕາມກວດກາຂອງໄອຍະການປະຊາຊົນໃນການເປີດ ການສືບສວນ-ສອບສວນ..........21
ໝວດທີ 2 ການສືບສວນ-ສອບສວນ..........21
ມາດຕາ 39 ການເຄື່ອນໄຫວຂອງເຈົ້າໜ້າທີ່ສືບສວນ-ສອບສວນ..........21
ມາດຕາ 40 ການສັ່ງຟ້ອງຂຶ້ນສານໂດຍກົງ..........22
ມາດຕາ 41 ກຳນົດເວລາດຳເນີນການສືບສວນ-ສອບສວນ..........22
ໝວດທີ 3 ມາດຕະການສືບສວນ-ສອບສວນ..........23
ມາດຕາ 42 ປະເພດມາດຕະການສືບສວນ-ສອບສວນ..........23
ມາດຕາ 43 ການເອົາຄຳໃຫ້ການ..........23
ມາດຕາ 44 ການເອົາຄຳໃຫ້ການຂອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຄົນຫູໜວກ..........23
ມາດຕາ 45 ບົດບັນທຶກຄຳໃຫ້ການ..........24
ມາດຕາ 46 ການສອບຖາມຊ້ອງໜ້າ..........24
ມາດຕາ 47 ການຊັນນະສູດສະຖານທີ່ເກີດເຫດ..........24
ມາດຕາ 48 ການຊັນນະສູດຊາກສົບ..........25
ມາດຕາ 49 ບົດບັນທຶກການຊັນນະສູດ..........25
ມາດຕາ 50 ການແຕ່ງຕັ້ງຜູ້ຊ່ຽວຊານໃຫ້ທຳການພິສູດ..........25
ມາດຕາ 51 ການກວດຄົ້ນ..........26
ມາດຕາ 52 ການກວດຄົ້ນເຄຫະສະຖານ..........26
ມາດຕາ 53 ການກວດຄົ້ນຍານພາຫະນະ ແລະຕົວບຸກຄົນ..........27
ມາດຕາ 54 ບົດບັນທຶກການກວດຄົ້ນ..........27

ມາດຕາ 55 ການຍຶດ ແລະການອາຍັດຊັບ ....................................................27
ມາດຕາ 56 ການຮັກສາຂອງກາງ...........................................................................28
ມາດຕາ 57 ການທົດສອບຂໍ້ມູນຄືນໃໝ່..................................................................28
ມາດຕາ 58 ການຊີ້ຕົວ ແລະການຢັ້ງຢືນ ...................................................................29
ໝວດທີ 4 ມາດຕະການສະກັດກັ້ນ ..........................................................................29
ມາດຕາ 59 ປະເພດມາດຕະການສະກັດກັ້ນ .............................................................29
ມາດຕາ 60 ການພາຕົວ .........................................................................................30
ມາດຕາ 61 ການກັກຕົວ .........................................................................................30
ມາດຕາ 62 ການຈັບຕົວ .........................................................................................30
ມາດຕາ 63 ການຈັບຕົວໃນກໍລະນີການກະທຳຜິດເຊິ່ງໜ້າ ແລະ ໃນກໍລະນີຮີບດ່ວນ ...31
ມາດຕາ 64 ບົດບັນທຶກການຈັບຕົວ ..........................................................................32
ມາດຕາ 65 ການກັກຂັງພາງ......................................................................................32
ມາດຕາ 66 ການປ່ອຍຕົວພາງ...................................................................................33
ມາດຕາ 67 ການຄຸມຕົວຢູ່ກັບທີ່ ..............................................................................33
ມາດຕາ 68 ການງົດຕຳແໜ່ງ ຫຼືໜ້າທີ່..........................................................................34
ໝວດທີ 5 ການໂຈະການດຳເນີນຄະດີ ແລະການຊັດມ້ຽນຄະດີ............................34
ມາດຕາ 69 ການໂຈະການດຳເນີນຄະດີ.....................................................................34
ມາດຕາ 70 ການສືບຕໍ່ດຳເນີນຄະດີທີ່ຖືກໂຈະໄວ້ນັ້ນຄືນໃໝ່..........................................35
ມາດຕາ 71 ການຊັດມ້ຽນຄະດີ.................................................................................35
ມາດຕາ 72 ການສືບຕໍ່ດຳເນີນຄະດີທີ່ຖືກຊັດມ້ຽນຄືນໃໝ່.............................................35
ໝວດທີ 6 ສິດ ແລະໜ້າທີ່ຂອງໄອຍະການປະຊາຊົນໃນການຕິດຕາມກວດກາ
ການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ.......................35
ມາດຕາ 73 ສິດ ແລະໜ້າທີ່ຂອງໄອຍະການປະຊາຊົນ ..........................................35
ມາດຕາ 74 ຄວາມເຫັນຂອງໄອຍະການປະຊາຊົນ.........................................................36
ພາກທີ V ການດຳເນີນຄະດີຢູ່ສານຂັ້ນຕົ້ນ ..............................................................37
ມາດຕາ 75 ການຮັບເອົາຄະດີມາພິຈາລະນາ..................................................................37
ມາດຕາ 76 ການຄົ້ນຄວ້າຄະດີຂອງສານ .......................................................................37
ມາດຕາ 77 ມາດຕະການຂອງສານ..............................................................................38
ມາດຕາ 78 ການໄຕ່ສວນຄະດີ ໃນທີ່ປະຊຸມສານຂັ້ນຕົ້ນ ..............................................38
ມາດຕາ 79 ການພິຈາລະນາຄະດີໃນຫ້ອງປະຊຸມລັບ .................................................39
ມາດຕາ 80 ການອ່ານຄຳຕັດສິນໃນທີ່ປະຊຸມສານ .......................................................39
ມາດຕາ 81 ການໂຈະ ແລະການເລື່ອນການໄຕ່ສວນຄະດີ.................................................39
ມາດຕາ 82 ການຕັດສິນຊ້ອງໜ້າ, ຖືວ່າຊ້ອງໜ້າ ແລະການຕັດສິນລັບຫລັງ ...........39
ມາດຕາ 83 ສິດອຳນາດຂອງສານໃນການດຳເນີນຄະດີເປັນຂັ້ນຕົ້ນ ......................40

ມາດຕາ 84 ປະເພດຄຳຕັດສິນຂອງສານຂັ້ນຕົ້ນ. ..... 40
ພາກທີ VI ການດຳເນີນຄະດີຢູ່ສານຂັ້ນອຸທອນ ..... 40
ມາດຕາ 85 ສິດໃນການຂໍອຸທອນ ແລະການສະເໜີຄັດຄ້ານຄຳຕັດສິນຂອງສານ ..... 40
ມາດຕາ 86 ກຳນົດເວລາໃນການຂໍອຸທອນ ແລະການສະເໜີຄັດຄ້ານ ຄຳຕັດສິນຂອງສານ ..... 41
ມາດຕາ 87 ລະບຽບການຂໍອຸທອນ ຫລືການສະເໜີຄັດຄ້ານຄຳຕັດສິນຂອງສານ ..... 41
ມາດຕາ 88 ສິດໃນການຖອນຄຳຂໍອຸທອນ ຫລືຄຳສະເໜີຄັດຄ້ານ ..... 42
ມາດຕາ 89 ການສະເໜີຫລັກຖານໃໝ່ຕໍ່ສານຂັ້ນອຸທອນ ..... 42
ມາດຕາ 90 ລະບຽບການພິຈາລະນາຄະດີຢູ່ສານຂັ້ນອຸທອນ ..... 42
ມາດຕາ 91 ຂອບເຂດສິດໃນການພິຈາລະນາຄະດີຂອງສານຂັ້ນອຸທອນ ..... 43
ມາດຕາ 92 ປະເພດຄຳພິພາກສາຂອງສານຂັ້ນອຸທອນ ..... 43
ມາດຕາ 93 ສາເຫດທີ່ພາໃຫ້ມີການລົບລ້າງ ຫລືປ່ຽນແປງຄຳຕັດສິນ ..... 43
ມາດຕາ 94 ການພິຈາລະນາຄະດີຄືນໃໝ່ຂອງສານຂັ້ນຕົ້ນ ..... 44
ພາກທີ VII ການດຳເນີນຄະດີຢູ່ສານຂັ້ນລົບລ້າງ ..... 44
ມາດຕາ 95 ສິດອຳນາດຂອງສານຂັ້ນລົບລ້າງ ..... 44
ມາດຕາ 96 ການຂໍລົບລ້າງ ແລະການສະເໜີຄັດຄ້ານຄຳຕັດສິນຂອງສານປະຊາຊົນ . 44
ມາດຕາ 97 ລະບຽບການຂໍລົບລ້າງ. ..... 45
ມາດຕາ 98 ການພິຈາລະນາຄຳຮ້ອງຂໍລົບລ້າງແລະຄຳສະເໜີຄັດຄ້ານ ໃນສານຂັ້ນລົບລ້າງ ..... 45
ມາດຕາ 99 ປະເພດຄຳພິພາກສາຂອງສານຂັ້ນລົບລ້າງ ..... 46
ມາດຕາ 100 ສາເຫດທີ່ພາໃຫ້ມີການລົບລ້າງ ຫລືປ່ຽນແປງຄຳສັ່ງ, ຄຳຊີ້ຂາດ ແລະຄຳພິພາກ ..... 46
ມາດຕາ 101 ຂອບເຂດສິດໃນການພິຈາລະນາຄະດີຢູ່ສານຂັ້ນລົບລ້າງ ..... 46
ມາດຕາ 102 ການພິຈາລະນາຄະດີຄືນໃໝ່ຂອງສານຂັ້ນອຸທອນ ..... 47
ພາກທີ VIII ການປະຕິບັດຄຳຕັດສິນຂອງສານ ..... 47
ມາດຕາ 103 ຄຳຕັດສິນຂອງສານທີ່ຈະຕ້ອງປະຕິບັດ ..... 47
ມາດຕາ 104 ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ..... 47
ມາດຕາ 105 ການປ່ອຍຕົວນັກໂທດ ..... 48
ມາດຕາ 106 ວິທີການຈັດຕັ້ງປະຕິບັດການປ່ອຍຕົວ ..... 48
ມາດຕາ 107 ການຈັດຕັ້ງປະຕິບັດໂທດປະຫານຊີວິດ ..... 49
ພາກທີ IX ການຮື້ຟື້ນຄະດີ ..... 49
ມາດຕາ 108 ການຮັບເອົາຄະດີທີ່ຖືກຮື້ຟື້ນມາພິຈາລະນາ ..... 49
ມາດຕາ 109 ສາເຫດທີ່ພາໃຫ້ມີການຮື້ຟື້ນຄະດີ ..... 50
ມາດຕາ 110 ກຳນົດເວລາຮື້ຟື້ນຄະດີ ..... 50

ມາດຕາ 111 ການສືບສວນ-ສອບສວນຄະດີອາຍາໃນກໍລະນີທີ່ພົບເຫັນ
ສະພາບການ ຫລືຫຼັກຖານໃໝ່ .................................................. 50
ມາດຕາ 112 ການເຄື່ອນໄຫວຂອງໄອຍະການປະຊາຊົນໃນການຮື້ຟື້ນຄະດີ ............ 51
ມາດຕາ 113 ສິດອຳນາດຂອງສານປະຊາຊົນໃນການພິຈາລະນາ
ການຮື້ຟື້ນຄະດີຄືນໃໝ່ ............................................................. 51
ພາກທີ X ມາດຕະການ ກ່ຽວກັບການປິ່ນປົວ ....................................................... 51
ມາດຕາ 114 ການນຳໃຊ້ມາດຕະການປິ່ນປົວ .................................................. 51
ມາດຕາ 115 ການອະນຸຍາດໃຫ້ອອກປິ່ນປົວໃນກໍລະນີຮີບດ່ວນ ............................ 52
ມາດຕາ 116 ການຄຸ້ມຄອງປ້ອງກັນຜູ້ທີ່ຖືກປິ່ນປົວ ............................................. 52
ພາກທີ XI ການຮ່ວມມືສາກົນ ກ່ຽວກັບການດຳເນີນຄະດີອາຍາ ................................ 52
ມາດຕາ 117 ຫຼັກການໃນການຮ່ວມມືສາກົນ ກ່ຽວກັບການດຳເນີນຄະດີອາຍາ ......... 52
ມາດຕາ 118 ການຮ່ວມມືສາກົນໃນການດຳເນີນຄະດີອາຍາ ................................ 52
ມາດຕາ 119 ການປະຕິບັດການຊ່ວຍເຫຼືອທາງດ້ານຍຸຕິທຳ ................................. 52
ມາດຕາ 120 ການປະຕິເສດໃນການຊ່ວຍເຫຼືອທາງດ້ານຍຸຕິທຳ ............................ 53
ພາກທີ XII ບົດບັນຍັດສຸດທ້າຍ ......................................................................... 53
ມາດຕາ 121 ການຈັດຕັ້ງປະຕິບັດ ................................................................... 53
ມາດຕາ 122 ຜົນສັກສິດ ............................................................................... 53

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------

ສະພາແຫ່ງຊາດ ເລກທີ 01 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 15 ພຶດສະພາ 2004

# ກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ

## ພາກທີ I ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ກຳນົດຫລັກການ, ລະບຽບການ ແລະມາດຕະການຂອງການດຳເນີນຄະດີອາຍາ ແນໃສ່ແກ້ໄຂຄະດີອາຍາຢ່າງຖືກຕ້ອງ ແລະຍຸຕິທຳ, ກຳຈັດ ແລະສະກັດກັ້ນການກະທຳຜິດ ເພື່ອປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະມີຄວາມເປັນລະບຽບຮຽບຮ້ອຍ, ສ້າງເງື່ອນໄຂໃຫ້ປະຊາຊົນບັນດາເຜົ່າປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ.

### ມາດຕາ 2 ການດຳເນີນຄະດີອາຍາ

ການດຳເນີນຄະດີອາຍາ ແມ່ນການເຄື່ອນໄຫວຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ໄອຍະການປະຊາຊົນ, ສານປະຊາຊົນ ແລະຜູ້ເຂົ້າຮ່ວມອື່ນໆໃນການດຳເນີນຄະດີ ເພື່ອຊອກໃຫ້ເຫັນການກະທຳຜິດຢ່າງຮີບດ່ວນ, ຄົບຖ້ວນ ແລະຮອບຄອບ, ນຳເອົາຜູ້ກະທຳຜິດມາດຳເນີນຄະດີ ແລະຮັບປະກັນການປະຕິບັດກົດໝາຍຢ່າງຖືກຕ້ອງ, ຍຸຕິທຳ ບໍ່ປະປ່ອຍໃຫ້ຜູ້ກະທຳຜິດຫລົບຫລີກອອກຈາກການລົງໂທດໄປໄດ້ ແລະຫລີກເວັ້ນການລົງໂທດຜູ້ບໍ່ໄດ້ກະທຳຜິດ.

### ມາດຕາ 3 ຄວາມຈຳເປັນຕ້ອງດຳເນີນຄະດີອາຍາ

ໃນກໍລະນີທີ່ເຈົ້າໜ້າທີ່ສືບສວນ-ສອບສວນ ຫລືໄອຍະການປະຊາຊົນ ໄດ້ຊອກເຫັນຮ່ອງຮອຍຂອງການກະທຳຜິດແລ້ວ ຕ້ອງເປີດການສືບສວນ-ສອບສວນ ຕາມຂອບເຂດສິດອຳນາດຂອງຕົນ, ນຳໃຊ້ມາດຕະການສືບສວນ-ສອບສວນ ແລະມາດຕະການສະກັດກັ້ນ ທີ່ກຳນົດໄວ້ໃນກົດໝາຍ ເພື່ອຊອກໃຫ້ເຫັນການກະທຳຜິດ ແລະຜູ້ກະທຳຜິດ ແລ້ວສົ່ງຟ້ອງຂຶ້ນສານປະຊາຊົນ ເພື່ອຕັດສິນລົງໂທດໃສ່ຜູ້ກ່ຽວຕາມກົດໝາຍ.

## ມາດຕາ 4 ສາເຫດທີ່ພາໃຫ້ການດຳເນີນຄະດີອາຍາຕົກໄປ

ສາເຫດທີ່ບໍ່ພາໃຫ້ເປີດການສືບສວນ-ສອບສວນ ຫລືບໍ່ໃຫ້ສືບຕໍ່ການດຳເນີນຄະດີອາຍານັ້ນມີດັ່ງນີ້:

1. ຂາດເຫດການຂອງການກະທຳຜິດທາງອາຍາ;
2. ຂາດອົງປະກອບຂອງການກະທຳຜິດທາງອາຍາ;
3. ໝົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາ;
4. ມີການນິລະໂທດກຳ;
5. ເດັກທີ່ມີອາຍຸບໍ່ເຖິງ ສິບຫ້າປີ ມີການກະທຳທີ່ເປັນອັນຕະລາຍຕໍ່ສັງຄົມ. ໃນກໍລະນີນີ້ ເດັກຈະຖືກນຳໄປສຶກສາອົບຮົມ;
6. ມີການຕົກລົງໄກ່ເກ່ຍກັນ ລະຫວ່າງຜູ້ຖືກເສຍຫາຍກັບຜູ້ຖືກຫາໃນຄະດີ ທີ່ການກະທຳຜິດບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍອາຍາ;
7. ຂາດການຮ້ອງຟ້ອງຂອງຜູ້ຖືກເສຍຫາຍ ຫລືຜູ້ຖືກເສຍຫາຍຖອນຄຳຮ້ອງຟ້ອງໃນກໍ ລະນີທີ່ແມ່ນການກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍອາຍາ;
8. ຜູ້ກະທຳຜິດໄດ້ເສຍຊີວິດ;
9. ມີຄຳສັ່ງຊັດມ້ຽນ ຫລືມີຄຳຕັດສິນຂອງສານປະຊາຊົນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ກ່ຽວກັບຄະດີດຽວກັນ.

## ມາດຕາ 5 ການບໍ່ໃຫ້ລ່ວງລະເມີດ ສິດ ແລະເສລີພາບຂອງພົນລະເມືອງ

ຫ້າມຈັບຕົວ, ກັກຂັງ ຫລືກວດຄົ້ນເຄຫະສະຖານ ໂດຍບໍ່ມີຄຳສັ່ງຂອງໄອຍະການປະຊາຊົນ ຫລືສານປະຊາຊົນ ເວັ້ນເສັຽແຕ່ການຈັບຕົວ ໃນກໍລະນີການກະທຳຜິດເຊິ່ງໜ້າ ຫລືໃນກໍລະນີທີ່ຮີບດ່ວນເທົ່ານັ້ນ. ໃນກໍລະນີທີ່ມີການຈັບຕົວ, ການກັກຂັງໂດຍບໍ່ຖືກຕ້ອງຕາມກົດໝາຍ ຫລືການກັກຂັງເກີນກຳນົດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫລືບໍ່ຖືກຕ້ອງຕາມຄຳຕັດສິນຂອງສານປະຊາຊົນນັ້ນ ໄອຍະການປະຊາຊົນຕ້ອງອອກຄຳສັ່ງປ່ອຍຕົວໃນທັນໃດ.

ບຸກຄົນໃດ ຫາກໄດ້ທຳການຈັບຕົວ, ກັກຂັງ, ກວດຄົ້ນເຄຫະສະຖານ ຫລືຕົວບຸກຄົນໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກດຳເນີນຄະດີ ແລະຮັບຜິດຊອບທາງອາຍາ.

## ມາດຕາ 6 ຄວາມສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ແລະສານ

ການດຳເນີນຄະດີອາຍາຕ້ອງປະຕິບັດບົນພື້ນຖານແຫ່ງຄວາມສະເໝີພາບຂອງພົນລະເມືອງທຸກຄົນຕໍ່ໜ້າກົດໝາຍ ແລະສານປະຊາຊົນໂດຍບໍ່ຈຳແນກເພດ, ເຊື້ອຊາດ, ຊົນເຜົ່າ, ຖານະທາງດ້ານເສດຖະກິດ ແລະສັງຄົມ, ພາສາ, ລະດັບການສຶກສາ, ອາຊີບ, ຄວາມເຊື່ອຖື, ພູມລຳເນົາ ແລະອື່ນໆ.

ສານປະຊາຊົນ ຕ້ອງສ້າງເງື່ອນໄຂໃຫ້ພົນລະເມືອງ ໂດຍສະເພາະຜູ້ຖືກຫາ, ຈຳເລີຍ, ໂຈດທາງແພ່ງ ໄດ້ປະຕິບັດສິດດັ່ງກ່າວ ເພື່ອຮັບປະກັນໃຫ້ການດຳເນີນຄະດີອາຍາຖືກຕ້ອງຕາມຄວາມເປັນຈິງ ແລະພາວະວິໄສ.

## ມາດຕາ 7 ການຮັບປະກັນສິດໃນການຕໍ່ສູ້ຄະດີໃຫ້ແກ່ຜູ້ຖືກຫາ

ຜູ້ຖືກຫາມີສິດຕໍ່ສູ້ຄະດີທີ່ຕົນຖືກກ່າວຟ້ອງ. ການຕໍ່ສູ້ຄະດີສາມາດດຳເນີນດ້ວຍຕົນເອງ ຫລືຈະເອົາທະນາຍຄວາມຊ່ວຍເຫລືອທາງດ້ານກົດໝາຍແກ່ຕົນກໍໄດ້.

ສານປະຊາຊົນ, ໄອຍະການປະຊາຊົນ, ພະນັກງານສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ ຕ້ອງຮັບປະກັນສິດໃນການຕໍ່ສູ້ຄະດີໃຫ້ແກ່ຜູ້ຖືກຫາ ເພື່ອປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳຂອງຜູ້ກ່ຽວ.

ຜູ້ກ່າວຟ້ອງຕ້ອງນຳເອົາຫລັກຖານມາຢັ້ງຢືນ ຄຳກ່າວຟ້ອງຂອງຕົນ ວ່າຜູ້ຖືກຫາ ຫລືຈຳເລີຍ ເປັນຜູ້ກະທຳຜິດ, ຜູ້ຖືກຫາ ຫລືຈຳເລີຍມີສິດສະເໜີຫລັກຖານ ເພື່ອປ້ອງກັນຕົນເອງ ແຕ່ຈະບໍ່ຖືກບັງຄັບໃຫ້ຊອກຫາຫລັກຖານມາຢັ້ງຢືນຄວາມບໍລິສຸດຂອງຕົນ.

## ມາດຕາ 8 ການສັນນິຖານວ່າເປັນຜູ້ບໍລິສຸດ

ໃນການດຳເນີນຄະດີອາຍາ ຜູ້ຖືກຫາ ຫລືຈຳເລີຍທີ່ຍັງບໍ່ທັນມີຄຳຕັດສິນຂອງສານປະຊາຊົນທີ່ໃຊ້ໄດ້ຢ່າງເດັດຂາດ ວ່າເປັນຜູ້ກະທຳຜິດນັ້ນ ໃຫ້ຖືວ່າຜູ້ກ່ຽວຍັງເປັນຜູ້ບໍລິສຸດຢູ່ ແລະຕ້ອງປະຕິບັດຕໍ່ຜູ້ກ່ຽວຢ່າງເໝາະສົມ.

## ມາດຕາ 9 ສິດຂອງສານໃນການຕັດສິນຄະດີ

ມີແຕ່ສານປະຊາຊົນເທົ່ານັ້ນ ຈຶ່ງມີສິດອຳນາດພິຈາລະນາຕັດສິນຄະດີອາຍາ, ບໍ່ມີບຸກຄົນໃດຈະຖືວ່າເປັນຜູ້ກະທຳຜິດ ແລະໄດ້ຮັບການລົງໂທດທາງອາຍາ ໂດຍບໍ່ມີຄຳຕັດສິນຂອງສານປະຊາຊົນ.

## ມາດຕາ 10 ການພິຈາລະນາຄະດີເປັນໝູ່ຄະນະ

ຄະນະສານຕັດສິນຂອງສານປະຊາຊົນສູງສຸດ, ສານອຸທອນ, ສານປະຊາຊົນແຂວງ, ນະຄອນ, ສານປະຊາຊົນເມືອງ, ເທດສະບານ ປະກອບດ້ວຍຜູ້ພິພາກສາສາມຄົນ, ໃນນັ້ນຜູ້ໜຶ່ງເປັນປະທານ ແລະອີກສອງຄົນເປັນຄະນະ.

ມີແຕ່ຜູ້ພິພາກສາທີ່ຖືກແຕ່ງຕັ້ງຢ່າງຖືກຕ້ອງຕາມກົດໝາຍເທົ່ານັ້ນ ຈຶ່ງມີສິດປະກອບເຂົ້າເປັນຄະນະສານຕັດສິນໄດ້.

ຄຳຕົກລົງຂອງຄະນະສານ ຕ້ອງຖືເອົາຕາມສຽງສ່ວນຫຼາຍ.

ການພິຈາລະນາຕັດສິນຄະດີ ຕ້ອງຮັບປະກັນຄວາມລັບ.

### ມາດຕາ 11 ຄວາມເປັນເອກະລາດຂອງຜູ້ພິພາກສາ

ໃນການພິຈາລະນາຕັດສິນຄະດີ ຜູ້ພິພາກສາຕ້ອງເປັນເອກະລາດ ແລະມີແຕ່ປະຕິບັດຕາມກົດໝາຍເທົ່ານັ້ນ.

### ມາດຕາ 12 ພາສາທີ່ໃຊ້ໃນການດຳເນີນຄະດີ

ໃນການດຳເນີນຄະດີ ຕ້ອງໃຊ້ພາສາລາວ. ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ທີ່ບໍ່ຮູ້ພາສາລາວ ມີສິດໃຊ້ພາສາຕົນເອງ ຫລືພາສາອື່ນ ໂດຍຜ່ານການແປພາສາ.

### ມາດຕາ 13 ການໄຕ່ສວນຄະດີຢູ່ທີ່ປະຊຸມສານຢ່າງເປີດເຜີຍ

ການໄຕ່ສວນຄະດີຢູ່ທີ່ປະຊຸມສານ ຕ້ອງດຳເນີນຢ່າງເປີດເຜີຍ ເວັ້ນເສັຍແຕ່ໃນກໍລະນີທີ່ຄະດີຫາກກ່ຽວຂ້ອງກັບຄວາມລັບຂອງລັດ ຫລືຂອງສັງຄົມ ເປັນຕົ້ນການກະທຳຜິດຂອງບຸກຄົນທີ່ມີອາຍຸສິບຫ້າປີຂຶ້ນໄປ ແຕ່ບໍ່ເຖິງສິບແປດປີ, ບາງການກະທຳຜິດຕໍ່ສາຍພົວເມຍ, ຮີດຄອງປະເພນີນັ້ນ ຕ້ອງດຳເນີນຢ່າງປິດລັບ.

ການອ່ານຄຳຕັດສິນບໍ່ວ່າໃນກໍລະນີໃດ ຕ້ອງດຳເນີນຢ່າງເປີດເຜີຍ.

### ມາດຕາ 14 ພັນສັກສິດຂອງຄຳຕົກລົງຂອງສານ

ສານປະຊາຊົນອອກຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະຄຳພິພາກສາ ໃນນາມສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະຄຳພິພາກສາຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ທຸກອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ ແລະພົນລະເມືອງທຸກຄົນຕ້ອງເຄົາລົບ; ບຸກຄົນ ແລະອົງການຈັດຕັ້ງທີ່ມີສ່ວນກ່ຽວຂ້ອງຕ້ອງປະຕິບັດຢ່າງເຂັ້ມງວດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 85 ຂອງລັດຖະທຳມະນູນ.

ຄຳຕັດສິນ ຫລືຄຳພິພາກສາຂອງສານປະຊາຊົນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ບໍ່ສາມາດປ່ຽນແປງໄດ້ ເວັ້ນເສັຍແຕ່ໃນກໍລະນີທີ່ມີການຮື້ຟື້ນຄະດີ.

### ມາດຕາ 15 ການຂໍຖອນຕົວ ແລະການຄ້ານຕົວ

ຖ້າຜູ້ພິພາກສາ, ໄອຍະການປະຊາຊົນ, ຈ່າສານ, ພະນັກງານສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຜູ້ຊ່ຽວຊານ ຫລືຜູ້ແປພາສາ ຫາກເປັນຍາດພີ່ນ້ອງ, ມີພົນປະໂຫຍດ ຫລືມີຂໍ້ຂັດແຍ່ງກັບຄູ່ຄວາມຝ່າຍໃດຝ່າຍໜຶ່ງ ຕ້ອງຂໍຖອນຕົວອອກຈາກການດຳເນີນຄະດີນັ້ນ.

ຖ້າຜູ້ກ່ຽວຫາກບໍ່ຍອມຖອນຕົວອອກ ຄູ່ຄວາມຝ່າຍໃດຝ່າຍໜຶ່ງ ກໍມີສິດສະເໜີຄ້ານຕົວຜູ້ກ່ຽວອອກຈາກການດຳເນີນຄະດີ.

### ມາດຕາ 16 ການບໍ່ອະນຸຍາດໃຫ້ເຂົ້າຮ່ວມໃນການພິຈາລະນາຄະດີດຽວກັນເປັນຄັ້ງທີສອງ

ຜູ້ພິພາກສາທີ່ໄດ້ເຂົ້າຮ່ວມໃນການພິຈາລະນາຄະດີອາຍາຄັ້ງໜຶ່ງແລ້ວ ຈະບໍ່ອະນຸຍາດໃຫ້ເຂົ້າຮ່ວມພິຈາລະນາຄະດີດຽວກັນເປັນຄັ້ງທີສອງອີກ ບໍ່ວ່າຢູ່ສານປະຊາຊົນຂັ້ນໃດ ເວັ້ນເສັຍແຕ່ໃນກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 17 ການດຳເນີນຄະດີຮອບດ້ານ, ຄົບຖ້ວນ ແລະພາວະວິໄສ

ສານປະຊາຊົນ, ໄອຍະການປະຊາຊົນ, ພະນັກງານສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ ຕ້ອງນຳໃຊ້ບັນດາມາດຕະການທີ່ໄດ້ກຳນົດໄວ້ໃນກົດໝາຍ ເພື່ອເຮັດໃຫ້ການດຳເນີນຄະດີໄດ້ເປັນໄປຢ່າງຮອບດ້ານ, ຄົບຖ້ວນ ແລະພາວະວິໄສ ແນໃສ່ຊອກຫາຫລັກຖານມາຜູກມັດ ຫລືຢັ້ງຢືນຄວາມບໍລິສຸດຂອງຜູ້ຖືກຫາ ຫລືຈຳເລີຍ ແລະຄົ້ນຄ້ວາຫາສາເຫດທີ່ພາໃຫ້ມີການຫລຸດຜ່ອນ ຫລືການເພີ່ມຄວາມຮັບຜິດຊອບທາງອາຍາ.

ໃນການເອົາຄຳໃຫ້ການຂອງຜູ້ຖືກຫາ ຫລືຈຳເລີຍ ແລະບຸກຄົນທີ່ເຂົ້າຮ່ວມໃນຄະດີນັ້ນ ຫ້າມໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ທຸບຕີ ຫລືນຳໃຊ້ມາດຕະການອື່ນໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

### ມາດຕາ 18 ການຮັບປະກັນສິດ ຮ້ອງທຸກ ຫລືຮ້ອງຟ້ອງຂອງພົນລະເມືອງ

ພົນລະເມືອງມີສິດຮ້ອງທຸກ ຫລືຮ້ອງຟ້ອງ ກ່ຽວກັບການປະຕິບັດໜ້າທີ່ ໂດຍບໍ່ຖືກຕ້ອງຕາມກົດໝາຍຂອງອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ຫລືຕົວບຸກຄົນທີ່ສັງກັດຢູ່ໃນອົງການຈັດຕັ້ງດັ່ງກ່າວ.

ອົງການຈັດຕັ້ງທີ່ໄດ້ຮັບຄຳຮ້ອງທຸກ ຫລືຄຳຮ້ອງຟ້ອງ ຕ້ອງຄົ້ນຄວ້າ, ພິຈາລະນາຢ່າງທັນການ ແລະຕ້ອງແຈ້ງຜົນການຄົ້ນຄວ້າເປັນລາຍລັກອັກສອນໃຫ້ແກ່ການຈັດຕັ້ງ ແລະເຈົ້າຂອງຄຳຮ້ອງທຸກ ຫລືຄຳຮ້ອງຟ້ອງຊາບ ພ້ອມກັນນັ້ນ ກໍຕ້ອງຊອກຫາວິທີການອັນເໝາະສົມ ເພື່ອແກ້ໄຂຂໍ້ຜິດພາດຂອງຕົນ.

ອົງການໃດທີ່ໄດ້ດຳເນີນການຜິດກົດໝາຍ ຕ້ອງປົວແປງກຽດສັກສີ ແລະທົດແທນຜົນປະໂຫຍດໃຫ້ແກ່ຜູ້ຖືກເສຍຫາຍ. ພະນັກງານ ຫລືບຸກຄົນທີ່ເຮັດຜິດກົດໝາຍນັ້ນ ຕ້ອງຖືກປະຕິບັດວິໄນ ຫລືຖືກດຳເນີນຄະດີຕາມສະຖານເບົາ ຫລືໜັກ.

## ພາກທີ II ຫລັກຖານໃນຄະດີອາຍາ

### ມາດຕາ 19 ຫລັກຖານ

ຫລັກຖານໃນຄະດີອາຍາ ແມ່ນຂໍ້ມູນຕົວຈິງ ຊຶ່ງຊີ້ບອກວ່າມີ ຫລືບໍ່ມີພຶດຕິກຳທີ່ເປັນອັນຕະລາຍຕໍ່ສັງຄົມ, ຄວາມຜິດຂອງບຸກຄົນທີ່ໄດ້ສ້າງພຶດຕິກຳນັ້ນ ແລະເຫດການອື່ນທີ່ເປັນປະໂຫຍດໃຫ້ແກ່ການພິຈາລະນາຄະດີໃຫ້ຖືກຕ້ອງ.

### ມາດຕາ 20 ປະເພດຫລັກຖານ

ຫລັກຖານໃນຄະດີອາຍາ ປະກອບດ້ວຍ:

- ຫລັກຖານທາງດ້ານວັດຖຸ;
- ຫລັກຖານທາງດ້ານເອກະສານ;
- ຫລັກຖານທາງດ້ານບຸກຄົນ.

ຫລັກຖານທາງດ້ານວັດຖຸ ແມ່ນໄດ້ມາຈາກວັດຖຸສິ່ງຂອງ ທີ່ພົວພັນກັບການກະທຳຜິດ ເຊັ່ນ: ປືນ, ມີດ, ຮອຍມື, ຄາບເລືອດ ແລະວັດຖຸອື່ນໆ.

ຫລັກຖານທາງດ້ານເອກະສານ ແມ່ນໄດ້ມາຈາກຈົດໝາຍ, ບົດບັນທຶກການສືບສວນ-ສອບສວນ, ບົດບັນທຶກການເຄື່ອນໄຫວຂອງສານປະຊາຊົນ, ບັນຊີ, ແຜ່ນແຕ້ມ, ແຜນວາດ, ຮູບພາບ ແລະເອກະສານອື່ນໆ ທີ່ພົວພັນກັບການກະທຳຜິດ.

ຫລັກຖານທາງດ້ານບຸກຄົນ ແມ່ນໄດ້ມາຈາກຄຳໃຫ້ການຂອງຜູ້ຖືກສົງໄສ, ຂອງຜູ້ຖືກຫາ ຫລືຈຳເລີຍ, ຂອງພະຍານ, ຂອງຜູ້ຖືກເສັຍຫາຍ, ການຊີ້ຕົວ, ການຢັ້ງຢືນ, ຄຳເຫັນຂອງຜູ້ຊ່ຽວຊານ ທີ່ພົວພັນກັບການກະທຳຜິດ.

ໃນຫລັກຖານທີ່ກ່າວມາເທິງນີ້ ມີທັງຫລັກຖານຜູກມັດ ຊຶ່ງເປັນການຢັ້ງຢືນວ່າຜູ້ຖືກຫາ ຫລືຈຳເລີຍເປັນຜູ້ກະທຳຜິດ ແລະມີທັງຫລັກຖານແກ້ມັດ ຊຶ່ງເປັນການຢັ້ງຢືນວ່າຜູ້ຖືກຫາ ຫລືຈຳເລີຍເປັນຜູ້ບໍລິສຸດ.

ໃນການດຳເນີນຄະດີອາຍານັ້ນ ຕ້ອງຊອກຫາທັງຫລັກຖານຜູກມັດ ແລະຫຼັກຖານແກ້ມັດໄປພ້ອມກັນ.

### ມາດຕາ 21 ການກວດກາ ແລະຕີລາຄາຫລັກຖານ

ສານປະຊາຊົນ, ໄອຍະການປະຊາຊົນ, ພະນັກງານສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນຕ້ອງກວດກາ, ຊັ່ງຊາ ແລະຕີລາຄາຫລັກຖານ ບົນພື້ນຖານການພິຈາລະນາຄະດີຢ່າງຮອບດ້ານ, ຄົບຖ້ວນ ແລະພາວະວິໄສ ດ້ວຍຄວາມໝັ້ນໃຈຂອງຕົນ.

ໃນການກວດກາ ແລະຕີລາຄາຫລັກຖານນັ້ນ ຖ້າຫາກຫລັກຖານຍັງພາໃຫ້ມີຄວາມສົງໄສວ່າຜູ້ຖືກຫາ ຫລືຈຳເລີຍ ອາດຈະເປັນຜູ້ກະທຳຜິດ ຫລືບໍ່ເປັນຜູ້ກະທຳຜິດແລ້ວ ຄວນໃຫ້ຜູ້ກ່ຽວພົ້ນຂໍ້ກ່າວຫາໄປ.

ໃນການດຳເນີນຄະດີອາຍາ ບໍ່ໃຫ້ຖືເອົາການຮັບສາລະພາບຂອງຜູ້ຖືກຫາ ຫລືຈຳເລີຍເປັນຕົ້ນຕໍ ແຕ່ຕ້ອງຊອກຫາຫລັກຖານມາຢັ້ງຢືນການກະທຳຜິດຂອງຜູ້ກ່ຽວຕື່ມອີກ. ເຖິງວ່າຜູ້ຖືກຫາ ຫລືຈຳເລີຍ ຫາກປະຕິເສດ ຫລືບໍ່ຮັບສາລະພາບກໍຕາມ ແຕ່ຖ້າມີຫລັກຖານໜັກແໜ້ນ, ຮັດກຸມແລ້ວ ກໍໃຫ້ຖືວ່າຜູ້ກ່ຽວເປັນຜູ້ກະທຳຜິດ.

## ພາກທີ III ອົງການດຳເນີນຄະດີ ແລະຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາ

### ໝວດທີ 1 ອົງການດຳເນີນຄະດີອາຍາ

**ມາດຕາ 22 ອົງການດຳເນີນຄະດີອາຍາ**

ອົງການດຳເນີນຄະດີອາຍາປະກອບດ້ວຍ:

- ອົງການສືບສວນ-ສອບສວນ;
- ອົງການໄອຍະການປະຊາຊົນ;
- ສານປະຊາຊົນ.

**ມາດຕາ 23 ອົງການສືບສວນ-ສອບສວນ**

ອົງການສືບສວນ-ສອບສວນ ມີດັ່ງນີ້:

1. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ຕຳຫລວດ;
2. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ທະຫານ;
3. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ພາສີ;
4. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້;
5. ອົງການສືບສວນ-ສອບສວນຂອງພາກສ່ວນອື່ນໆທີ່ໄດ້ກຳນົດໄວ້ໃນກົດໝາຍ.

ອົງການສືບສວນ-ສອບສວນ ມີສິດ ແລະໜ້າທີ່ດັ່ງຕໍ່ໄປນີ້:

1. ຮັບ ແລະບັນທຶກການແຈ້ງຄວາມກ່ຽວກັບການກະທຳຜິດ;
2. ລາຍງານຢ່າງທັນການໃຫ້ໄອຍະການປະຊາຊົນຊາບ ກ່ຽວກັບການກະທຳຜິດ;
3. ອອກຄຳສັ່ງເປີດການສືບສວນ-ສອບສວນ ແລະສົ່ງສຳເນົາຄຳສັ່ງນັ້ນລາຍງານໃຫ້ໄອຍະການປະຊາຊົນຊາບໃນທັນໃດ;
4. ດຳເນີນການສືບສວນ-ສອບສວນ;
5. ນຳໃຊ້ມາດຕະການສະກັດກັ້ນທີ່ໄດ້ກຳນົດໄວ້ໃນກົດໝາຍ ລວມທັງການປ່ອຍຕົວຜູ້ຖືກສົງໄສທີ່ໄດ້ຖືກກັກຕົວ ແລະລາຍງານເປັນລາຍລັກອັກສອນໃຫ້ໄອຍະການປະຊາຊົນຊາບ;
6. ຂໍອຸທອນຄຳສັ່ງຂອງໄອຍະການປະຊາຊົນຂັ້ນລຸ່ມ ຂຶ້ນຫາໄອຍະການປະຊາຊົນຂັ້ນເທິງ;
7. ສະຫລຸບການສືບສວນ-ສອບສວນ ແລະປະກອບສຳນວນຄະດີສົ່ງໃຫ້ໄອຍະການປະຊາຊົນ.

ໃນການປະຕິບັດສິດ ແລະໜ້າທີ່ດັ່ງກ່າວ ອົງການສືບສວນ-ສອບສວນຕ້ອງດຳເນີນໄປໃນຂອບເຂດສິດອຳນາດທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 24 ສິດ ແລະໜ້າທີ່ຂອງພະນັກງານອົງການສືບສວນ-ສອບສວນ

ພະນັກງານຂອງອົງການສືບສວນ-ສອບສວນ ປະກອບດ້ວຍຫົວໜ້າ, ຮອງຫົວໜ້າ ແລະເຈົ້າໜ້າທີ່ສືບສວນ-ສອບສວນ.

ຫົວໜ້າອົງການສືບສວນ-ສອບສວນ ມີສິດ ແລະໜ້າທີ່ດັ່ງນີ້:

1. ຊີ້ນຳ, ນຳພາລວມວຽກງານຂອງອົງການສືບສວນ-ສອບສວນ;
2. ອອກຄຳສັ່ງເປີດ ຫຼືບໍ່ເປີດການສືບສວນ-ສອບສວນ, ຄຳສັ່ງໂຈະ ຫຼືຊັດມ້ຽນຄະດີອາຍາ, ຄຳສັ່ງກັກຕົວ, ຄຳສັ່ງປ່ອຍຕົວຈາກການກັກຕົວ;
3. ສະເໜີຕໍ່ໄອຍະການປະຊາຊົນ ເພື່ອອອກຄຳສັ່ງຈັບຕົວ, ກັກຂັງພາງ, ປ່ອຍຕົວພາງ, ຕໍ່ກຳນົດການສືບສວນ-ສອບສວນ ແລະຕໍ່ກຳນົດການກັກຂັງພາງ;
4. ສະຫລຸບ ແລະປະກອບສຳນວນຄະດີສົ່ງໃຫ້ໄອຍະການປະຊາຊົນ ເພື່ອພິຈາລະນາ ພາຍຫລັງການສືບສວນ-ສອບສວນ ໄດ້ສຳເລັດແລ້ວ;
5. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ກົດໝາຍໄດ້ກຳນົດໄວ້.

ຮອງຫົວໜ້າອົງການສືບສວນ-ສອບສວນ ມີໜ້າທີ່ຊ່ວຍຫົວໜ້າໃນການປະຕິບັດວຽກງານ ແລະຈະໄດ້ຮັບຜິດຊອບວຽກງານໃດໜຶ່ງສະເພາະ ຕາມການມອບຫມາຍຂອງຫົວໜ້າ. ໃນກໍລະນີທີ່ຫົວໜ້າຕິດຂັດ ແມ່ນຮອງຫົວໜ້າຜູ້ທີ່ໄດ້ຮັບມອບໝາຍ ເປັນຜູ້ວ່າການແທນ.

ເຈົ້າຫນ້າທີ່ສືບສວນ-ສອບສວນ ມີສິດ ແລະໜ້າທີ່ດັ່ງນີ້:

1. ຮັບ ແລະບັນທຶກການແຈ້ງຄວາມ, ການລາຍງານ ຫລືການຮ້ອງຟ້ອງ ກ່ຽວກັບການກະທຳຜິດທາງອາຍາ;
2. ເອົາຄຳໃຫ້ການຂອງຜູ້ຖືກເສຍຫາຍ, ໂຈດທາງແພ່ງ, ຜູ້ຖືກຫາ, ພະຍານ ແລະບຸກຄົນທີ່ກ່ຽວຂ້ອງອື່ນໆ;
3. ລົງຊັນນະສູດສະຖານທີ່ເກີດເຫດ, ຊາກສົບ, ກວດຄົ້ນເຄຫະສະຖານ, ຍານພາຫະນະ, ກວດຄົ້ນຕົວບຸກຄົນ ພ້ອມທັງເກັບກຳ, ລວບລວມຫລັກຖານຕ່າງໆ ກ່ຽວກັບການກະທຳຜິດທາງອາຍາ;
4. ຊອກຫາ, ຈັບຕົວ, ພາຕົວ ຜູ້ຖືກຫາຕາມຄຳສັ່ງຂອງສານປະຊາຊົນ ຫລືໄອຍະການປະຊາຊົນ;
5. ປະຕິບັດຄຳສັ່ງ ແລະລາຍງານສະພາບການ ກ່ຽວກັບການດຳເນີນຄະດີອາຍາຕໍ່ຫົວໜ້າອົງການສືບສວນ-ສອບສວນ;
6. ປະຕິບັດສິດ ແລະຫນ້າທີ່ອື່ນໆ ຕາມຄຳສັ່ງຂອງຫົວໜ້າ ແລະຕາມທີ່ໄດ້ກຳນົດໄວ້ໃນກົດຫມາຍ.

ໃນການປະຕິບັດສິດ ແລະໜ້າທີ່ດັ່ງກ່າວ ພະນັກງານຂອງອົງການສືບສວນ-ສອບສວນ ຕ້ອງດຳເນີນໄປໃນຂອບເຂດສິດອຳນາດທີ່ໄດ້ກຳນົດໄວ້ໃນກົດໝາຍ.

ເພື່ອຮັບປະກັນການປະຕິບັດສິດ ແລະໜ້າທີ່ ທີ່ກ່າວມາຂ້າງເທິງນັ້ນ ພະນັກງານຂອງອົງການສືບສວນ-ສອບສວນ ຕ້ອງເປັນຜູ້ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດດີ,

ມີຄວາມຈົງຮັກພັກດີຕໍ່ຜົນປະໂຫຍດລວມຂອງຊາດ ແລະຂອງປະຊາຊົນ, ມີຈັນຍາທໍາ, ໄດ້ຮັບການສຶກສາ ຫລືບໍາລຸງວິຊາກົດໝາຍ ແລະວິຊາສະເພາະທີ່ກ່ຽວຂ້ອງກັບການສືບສວນ-ສອບສວນ.

## ມາດຕາ 25 ອົງການໄອຍະການປະຊາຊົນ

ອົງການໄອຍະການປະຊາຊົນມີດັ່ງນີ້:

1. ອົງການໄອຍະການປະຊາຊົນສູງສຸດ;
2. ອົງການໄອຍະການປະຊາຊົນຂັ້ນອຸທອນ;
3. ອົງການໄອຍະການປະຊາຊົນແຂວງ, ນະຄອນ;
4. ອົງການໄອຍະການປະຊາຊົນເມືອງ, ເທດສະບານ;
5. ອົງການໄອຍະການທະຫານ.

ສິດ, ໜ້າທີ່ ແລະມາດຕະຖານຂອງໄອຍະການປະຊາຊົນ ແລະພະນັກງານສອບສວນໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ. ສ່ວນສິດ, ໜ້າທີ່ ແລະມາດຕະຖານຂອງໄອຍະການທະຫານໄດ້ກໍານົດໄວ້ໃນລັດຖະບັນຍັດວ່າດ້ວຍອົງການໄອຍະການທະຫານ.

## ມາດຕາ 26 ສານປະຊາຊົນ

ສານປະຊາຊົນ ມີດັ່ງນີ້:

1. ສານປະຊາຊົນສູງສຸດ;
2. ສານອຸທອນ;
3. ສານປະຊາຊົນແຂວງ, ນະຄອນ;
4. ສານປະຊາຊົນເມືອງ, ເທດສະບານ;
5. ສານທະຫານ.

ສິດ, ໜ້າທີ່ຂອງສານປະຊາຊົນ, ສານທະຫານ ແລະມາດຕະຖານຂອງຜູ້ພິພາກສາ ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍສານປະຊາຊົນ.

# ໝວດທີ 2 ຜູ້ເຂົ້າຮ່ວມໃນການດໍາເນີນຄະດີອາຍາ

## ມາດຕາ 27 ຜູ້ເຂົ້າຮ່ວມໃນການດໍາເນີນຄະດີອາຍາ

ຜູ້ເຂົ້າຮ່ວມໃນການດໍາເນີນຄະດີອາຍາມີ:

1. ຜູ້ຖືກຫາ ຫລືຈໍາເລີຍ;
2. ຜູ້ຖືກເສຍຫາຍ;
3. ໂຈດທາງແພ່ງ;
4. ຜູ້ຮັບຜິດຊອບທາງແພ່ງ;
5. ພະຍານ;
6. ຜູ້ຊ່ຽວຊານ;

7. ຜູ້ແປພາສາ;

8. ທະນາຍຄວາມ ແລະຜູ້ປົກປ້ອງອື່ນ.

## ມາດຕາ 28 ຜູ້ຖືກຫາ ຫລືຈໍາເລີຍ

ຜູ້ຖືກຫາ ແມ່ນບຸກຄົນ ຜູ້ທີ່ຖືກນໍາມາດໍາເນີນຄະດີ ໂດຍຄໍາສັ່ງເປີດການສືບສວນ-ສອບສວນຂອງເຈົ້າໜ້າທີ່ສືບສວນ-ສອບສວນ ຫລືໄອຍະການປະຊາຊົນ ເວັ້ນເສັຍແຕ່ໃນກໍລະນີມີການສັ່ງຟ້ອງຂຶ້ນສານໂດຍກົງ.

ຜູ້ຖືກຫາທີ່ຖືກສັ່ງຟ້ອງຂຶ້ນສານປະຊາຊົນແລ້ວ ເອີ້ນວ່າ ຈໍາເລີຍ.

ຈໍາເລີຍທີ່ຖືກສານປະຊາຊົນຕັດສິນລົງໂທດແລ້ວ ເອີ້ນວ່າ ນັກໂທດ.

ສິດຂອງຜູ້ຖືກຫາ ຫລືຈໍາເລີຍມີດັ່ງນີ້:

1. ຮັບຊາບ ແລະແກ້ຂໍ້ກ່າວຫາ;
2. ສະເໜີຫລັກຖານ;
3. ຍື່ນຄໍາຮ້ອງຂໍ;
4. ຂໍເບິ່ງເອກະສານຢູ່ໃນສໍານວນຄະດີ, ອັດສໍາເນົາ ຫລືກ່າຍເອົາເນື້ອໃນທີ່ຈໍາເປັນອອກຈາກສໍານວນຄະດີ ຫລັງຈາກການສືບສວນ-ສອບສວນໄດ້ສໍາເລັດແລ້ວ;
5. ເອົາ ແລະພົບທະນາຍຄວາມ ຫລືຜູ້ປົກປ້ອງອື່ນໃນການຕໍ່ສູ້ຄະດີ;
6. ເຂົ້າຮ່ວມໃນການໄຕ່ສວນຄະດີຢູ່ທີ່ປະຊຸມສານ;
7. ສະເໜີຄ້ານຕົວຜູ້ພິພາກສາ, ໄອຍະການປະຊາຊົນ, ພະນັກງານສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຜູ້ຊ່ຽວຊານ ຫລືຜູ້ແປພາສາ;
8. ຮ້ອງທຸກຕໍ່ການກະທໍາ ຫລືຄໍາສັ່ງຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ, ໄອຍະການປະຊາຊົນ ຫລືສານປະຊາຊົນ ທີ່ຕົນເຫັນວ່າບໍ່ຖືກຕ້ອງ;
9. ອອກຄໍາເຫັນເປັນຜູ້ສຸດທ້າຍໃນທີ່ປະຊຸມສານ;
10. ຂໍອຸທອນ, ຂໍລຶບລ້າງຄໍາສັ່ງຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ, ໄອຍະການປະຊາຊົນ ຫລືຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນຂອງສານປະຊາຊົນ.

ພັນທະຂອງຜູ້ຖືກຫາ ຫລືຈໍາເລີຍມີດັ່ງນີ້:

1. ເຂົ້າມາສະເໜີຕົວຕາມຄໍາສັ່ງ, ໝາຍຮຽກຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ, ໄອຍະການປະຊາຊົນ ຫລືສານປະຊາຊົນ;
2. ໃຫ້ການ ຫລືໃຫ້ຄໍາອະທິບາຍຕໍ່ຂໍ້ກ່າວຫາ;
3. ປະຕິບັດຕາມລະບຽບ ແລະຄໍາສັ່ງຂອງສານປະຊາຊົນໃນທີ່ປະຊຸມສານ.

## ມາດຕາ 29 ຜູ້ຖືກເສຍຫາຍ

ຜູ້ຖືກເສຍຫາຍ ແມ່ນບຸກຄົນຜູ້ທີ່ໄດ້ຮັບຄວາມເສຍຫາຍທາງດ້ານສຸຂະພາບ ຫລືຊີວິດ, ວັດຖຸ ຫລືຈິດໃຈຍ້ອນການກະທຳຜິດຂອງບຸກຄົນອື່ນ.

ສິດຂອງຜູ້ຖືກເສຍຫາຍມີດັ່ງນີ້:

1. ໃຫ້ການກ່ຽວກັບຄະດີ;
2. ສະເໜີຫລັກຖານ;
3. ຍື່ນຄຳຮ້ອງຂໍ;
4. ໄດ້ຮັບການທົດແທນຄ່າເສຍຫາຍ;
5. ຂໍເບິ່ງເອກະສານຢູ່ໃນສຳນວນຄະດີ, ອັດສຳເນົາ ຫລືກ່າຍເອົາເນື້ອໃນທີ່ຈຳເປັນອອກຈາກສຳນວນຄະດີ ຫລັງຈາກການສືບສວນ-ສອບສວນໄດ້ສຳເລັດແລ້ວ;
6. ເຂົ້າຮ່ວມການໄຕ່ສວນຄະດີໃນທີ່ປະຊຸມສານ;
7. ສະເໜີຄ້ານຕົວຜູ້ພິພາກສາ, ໄອຍະການປະຊາຊົນ, ພະນັກງານສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຜູ້ຊ່ຽວຊານ ແລະຜູ້ແປພາສາ;
8. ຮ້ອງທຸກຕໍ່ການກະທຳ ຫລືຄຳສັ່ງຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ, ໄອຍະການປະຊາຊົນ ຫລືສານປະຊາຊົນ ທີ່ຕົນເຫັນວ່າບໍ່ຖືກຕ້ອງ;
9. ຂໍອຸທອນ, ຂໍລົບລ້າງ ຄຳສັ່ງຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ, ໄອຍະການປະຊາຊົນ ຫລື ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນຂອງສານປະຊາຊົນ;
10. ຕົກລົງໄກ່ເກ່ຍກັບຜູ້ຖືກຫາ ຫລືຈຳເລີຍ ໃນຄະດີທີ່ການກະທຳຜິດບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ;
11. ເອົາ ແລະພົບທະນາຍຄວາມ ຫລືຜູ້ປົກປ້ອງອື່ນໃນການຕໍ່ສູ້ຄະດີ;
12. ຖອນຄຳຮ້ອງຟ້ອງ.

ໃນກໍລະນີທີ່ຜູ້ຖືກເສຍຫາຍຫາກໄດ້ເສຍຊີວິດ ຍາດຕິພີ່ນ້ອງທີ່ໃກ້ຊິດຂອງຜູ້ກ່ຽວ ຈະເປັນຜູ້ໃຊ້ສິດຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້.

ພັນທະຂອງຜູ້ຖືກເສຍຫາຍມີດັ່ງນີ້:

1. ເຂົ້າມາສະເໜີຕົວຕາມຄຳສັ່ງ, ໝາຍຮຽກຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ, ໄອຍະການປະຊາຊົນ ຫລືສານປະຊາຊົນ;
2. ຮັບຜິດຊອບຕໍ່ການປະຕິເສດບໍ່ຍອມໃຫ້ການ ຫລືຕໍ່ຄຳໃຫ້ການເທັດຂອງຕົນ.

## ມາດຕາ 30 ໂຈດທາງແພ່ງ

ໂຈດທາງແພ່ງ ແມ່ນບຸກຄົນທີ່ໄດ້ທຳການຮ້ອງຟ້ອງທາງແພ່ງຕໍ່ຜູ້ຖືກຫາ ຫລືຈຳເລີຍ ຫລືຕໍ່ຜູ້ຮັບຜິດຊອບທາງແພ່ງ ເພື່ອໃຫ້ໃຊ້ແທນຄ່າເສຍຫາຍແກ່ຕົນ.

ໂຈດທາງແພ່ງມີສິດ ແລະພັນທະດັ່ງດຽວກັນກັບຜູ້ຖືກເສັຍຫາຍ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍສະບັບນີ້.

## ມາດຕາ 31 ຜູ້ຮັບຜິດຊອບທາງແພ່ງ

ຜູ້ຮັບຜິດຊອບທາງແພ່ງ ແມ່ນບຸກຄົນຫລືການຈັດຕັ້ງ ທີ່ມີພັນທະໃຊ້ແທນຄ່າເສັຍຫາຍທາງແພ່ງ ທີ່ເນື່ອງມາຈາກການກະທຳຜິດຂອງຜູ້ຖືກຫາ ຫລືຈຳເລີຍ ທີ່ຢູ່ໃນການຄຸ້ມຄອງຂອງຕົນ.

ຜູ້ຮັບຜິດຊອບທາງແພ່ງ ອາດຈະແມ່ນພໍ່ແມ່, ພໍ່ລ້ຽງແມ່ລ້ຽງ, ຜູ້ປົກຄອງ, ຜູ້ໃຊ້ວຽກ, ຜູ້ຄຸ້ມຄອງ, ການຈັດຕັ້ງ ຫລືວິສາຫະກິດ.

ສິດຂອງຜູ້ຮັບຜິດຊອບທາງແພ່ງມີດັ່ງນີ້:

1. ແກ້ຄຳຮ້ອງຟ້ອງ;
2. ໃຫ້ຄຳອະທິບາຍຕໍ່ຄຳຮ້ອງຟ້ອງ;
3. ສະເໜີຫລັກຖານ;
4. ຍື່ນຄຳຮ້ອງຂໍ;
5. ຂໍເບິ່ງເອກະສານຢູ່ໃນສຳນວນຄະດີ, ອັດສຳເນົາ ຫລືກ່າຍເອົາເນື້ອໃນທີ່ຈຳເປັນອອກຈາກສຳນວນຄະດີຫລັງຈາກການສືບສວນ-ສອບສວນ ໄດ້ສຳເລັດແລ້ວ;
6. ເຂົ້າຮ່ວມການໄຕ່ສວນຄະດີໃນທີ່ປະຊຸມສານ;
7. ສະເໜີຄ້ານຕົວຜູ້ພິພາກສາ, ໄອຍະການປະຊາຊົນ, ພະນັກງານສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຜູ້ຊ່ຽວຊານ ແລະຜູ້ແປພາສາ;
8. ຮ້ອງທຸກຕໍ່ການກະທຳ ຫລືຄຳສັ່ງຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ, ໄອຍະການປະຊາຊົນ ຫລືສານປະຊາຊົນ ທີ່ຕົນເຫັນວ່າບໍ່ຖືກຕ້ອງ;
9. ຂໍຖອນ, ຂໍລົບລ້າງ ຄຳສັ່ງຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ, ໄອຍະການປະຊາຊົນ ຫລືຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນຂອງສານປະຊາຊົນ;
10. ເອົາທະນາຍຄວາມ ຫລືຜູ້ປົກປ້ອງອື່ນ ໃນການຕໍ່ສູ້ຄະດີ.

ຜູ້ຮັບຜິດຊອບທາງແພ່ງມີພັນທະດັ່ງດຽວກັນກັບຜູ້ຖືກເສັຍຫາຍ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍສະບັບນີ້.

## ມາດຕາ 32 ພະຍານ

ພະຍານ ແມ່ນບຸກຄົນຜູ້ທີ່ໄດ້ຮູ້ເຫັນເຫດການຂອງການກະທຳຜິດ ຫລືສະພາບຂອງຄະດີ.

ຄົນຫູໜວກ ປາກກືກ, ຄົນປັນຍາອ່ອນ ເສັຍຈິດ, ເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຍາດຕິພີ່ນ້ອງຂອງຄູ່ຄວາມອາດຈະນຳມາໃຫ້ການເພື່ອຊອກຫາຂໍ້ມູນ ແຕ່ບໍ່ໃຫ້ຖືວ່າເປັນພະຍານ.

ສິດຂອງພະຍານ ມີດັ່ງນີ້:

1. ໃຫ້ການ;
2. ເບິ່ງບົດບັນທຶກຄຳໃຫ້ການຂອງຕົນ ໃນຂັ້ນສືບສວນ-ສອບສວນ;
3. ສະເໜີດັດແປງ ຫລືເພີ່ມເຕີມບົດບັນທຶກຄຳໃຫ້ການຂອງຕົນ;
4. ຮ້ອງທຸກຕໍ່ການກະທຳ ຫລືຄຳສັ່ງຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ, ໄອຍະການປະຊາຊົນ ຫລືສານປະຊາຊົນ ທີ່ຕົນເຫັນວ່າບໍ່ຖືກຕ້ອງ;
5. ໄດ້ຮັບການປົກປ້ອງຕາມລະບຽບກົດໝາຍຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ ຫລືຊັບສິນ ຍ້ອນການໃຫ້ການຂອງຕົນ.

ພະຍານມີພັນທະດັ່ງດຽວກັນກັບຜູ້ຖືກເສັຍຫາຍ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍສະບັບນີ້.

## ມາດຕາ 33 ຜູ້ຊ່ຽວຊານ

ຜູ້ຊ່ຽວຊານ ແມ່ນບຸກຄົນທີ່ມີຄວາມຮູ້ ແລະປະສົບການທາງດ້ານວິຊາສະເພາະໃດໜຶ່ງທີ່ຖືກຮັບຮູ້ຈາກສະຖາບັນທີ່ກ່ຽວຂ້ອງ ຊຶ່ງສາມາດໃຫ້ຄວາມກະຈ່າງແຈ້ງຕໍ່ບັນຫາທີ່ພົວພັນກັບວິຊາສະເພາະຂອງຕົນ.

ໃນການພິສູດຫລັກຖານ ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ, ໄອຍະການປະຊາຊົນ ຫລືສານປະຊາຊົນ ຕ້ອງອອກຄຳສັ່ງແຕ່ງຕັ້ງຜູ້ຊ່ຽວຊານ.

ຜູ້ຊ່ຽວຊານຕ້ອງດຳເນີນການພິສູດຫລັກຖານຢູ່ໃນຂອບເຂດ ແລະກຳນົດເວລາທີ່ໄດ້ບົ່ງໄວ້ໃນຄຳສັ່ງແຕ່ງຕັ້ງ.

ຜູ້ຊ່ຽວຊານໃຫ້ຄຳເຫັນໃນນາມຂອງຕົນ ແລະຮັບຜິດຊອບຕໍ່ຄຳເຫັນດັ່ງກ່າວ ພ້ອມທັງຮັກສາຄວາມລັບໃນຄະດີ.

## ມາດຕາ 34 ຜູ້ແປພາສາ

ຜູ້ແປພາສາ ແມ່ນບຸກຄົນທີ່ມີຄວາມຮູ້, ຄວາມສາມາດ ຫລືປະສົບການໃນການແປພາສາໃດໜຶ່ງຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີທີ່ບໍ່ຮູ້ພາສາລາວ.

ຜູ້ແປພາສາຕ້ອງຮັບຜິດຊອບຕໍ່ການແປຂອງຕົນ ແລະມີພັນທະໃນການຮັກສາຄວາມລັບໃນຄະດີ.

### ມາດຕາ 35 ທະນາຍຄວາມ ຫລືຜູ້ປົກປ້ອງອື່ນ

ຜູ້ປົກປ້ອງ ແມ່ນບຸກຄົນທີ່ເຂົ້າຮ່ວມໃນການດໍາເນີນຄະດີ ເພື່ອປົກປ້ອງສິດ ແລະຜົນປະໂຫຍດອັນຊອບທໍາຂອງຜູ້ຖືກຫາ ຫລືຈໍາເລີຍ, ຜູ້ຖືກເສຍຫາຍ, ໂຈດທາງແພ່ງ ຫລືຜູ້ຮັບຜິດຊອບທາງແພ່ງ.

ຜູ້ປົກປ້ອງອາດຈະແມ່ນທະນາຍຄວາມ, ຜູ້ຕາງໜ້າຂອງອົງການຈັດຕັ້ງ, ຜົວຫລືເມັຍ, ພໍ່ແມ່, ຜູ້ປົກຄອງ ຫລືຍາດຕິພີ່ນ້ອງທີ່ໃກ້ຊິດ.

ໃນກໍລະນີທີ່ຜູ້ຖືກຫາ ຫລືຈໍາເລີຍ ຫາກແມ່ນເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ ສິບແປດປີ, ຄົນຫູໜວກ, ປາກກືກ, ຄົນປັນຍາອ່ອນ ເສັຍຈິດ, ຜູ້ທີ່ບໍ່ຮູ້ພາສາລາວ ແລະຜູ້ທີ່ກົດໝາຍກໍານົດໂທດປະຫານຊີວິດນັ້ນ ຈໍາເປັນຕ້ອງມີຜູ້ປົກປ້ອງ. ຖ້າວ່າຜູ້ຖືກຫາ ຫລືຈໍາເລີຍ ຫາກບໍ່ມີຜູ້ປົກປ້ອງແລ້ວ ສານປະຊາຊົນຈະເປັນຜູ້ແຕ່ງຕັ້ງທະນາຍຄວາມໃຫ້ໂດຍໜ້າທີ່.

ທະນາຍຄວາມ ຫລືຜູ້ປົກປ້ອງອື່ນ ສາມາດເຂົ້າຮ່ວມໃນການດໍາເນີນຄະດີ ນັບແຕ່ໄດ້ມີຄໍາສັ່ງເປີດການສືບສວນ-ສອບສວນ ເປັນຕົ້ນໄປ.

ສິດຂອງທະນາຍຄວາມ ຫລືຜູ້ປົກປ້ອງອື່ນມີ ດັ່ງນີ້:

1. ພົບກັບຜູ້ຖືກຫາ ຫລືຈໍາເລີຍ;
2. ຂໍເບິ່ງເອກະສານຢູ່ໃນສໍານວນຄະດີ, ອັດສໍາເນົາ ຫລືກ່າຍເອົາເນື້ອໃນທີ່ຈໍາເປັນອອກຈາກສໍານວນຄະດີ ຫລັງຈາກການສືບສວນ-ສອບສວນໄດ້ສໍາເລັດແລ້ວ;
3. ສະເໜີຫລັກຖານ;
4. ຍື່ນຄໍາຮ້ອງຂໍ;
5. ເຂົ້າຮ່ວມການໄຕ່ສວນຄະດີໃນທີ່ປະຊຸມສານ ແລະໃຫ້ຄໍາເຫັນ;
6. ສະເໜີຄ້ານຕົວຜູ້ພິພາກສາ, ໄອຍະການປະຊາຊົນ, ພະນັກງານສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຜູ້ຊ່ຽວຊານ ຫລືຜູ້ແປພາສາ;
7. ຮ້ອງທຸກຕໍ່ການກະທໍາ ຫລືຄໍາສັ່ງຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ, ໄອຍະການປະຊາຊົນ ແລະສານປະຊາຊົນທີ່ຕົນເຫັນວ່າບໍ່ຖືກຕ້ອງ;
8. ຂໍອຸທອນ, ຂໍລົບລ້າງຄໍາສັ່ງຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ, ໄອຍະການປະຊາຊົນ ຫລືຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນຂອງສານປະຊາຊົນ;
9. ໄດ້ຮັບການປົກປ້ອງຕາມລະບຽບກົດໝາຍຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ ຫລືຊັບສິນ ຍ້ອນການຕໍ່ສູ້ຄະດີໃຫ້ລູກຄວາມຂອງຕົນ.

ພັນທະຂອງທະນາຍຄວາມ ຫລືຜູ້ປົກປ້ອງອື່ນມີດັ່ງນີ້:

1. ນໍາໃຊ້ທຸກວິທີການປົກປ້ອງທີ່ໄດ້ກໍານົດໄວ້ໃນກົດໝາຍ ເພື່ອປົກປ້ອງສິດ ແລະຜົນປະໂຫຍດອັນຊອບທໍາຂອງຜູ້ທີ່ຕົນປົກປ້ອງ;
2. ໃຫ້ຄວາມຊ່ວຍເຫລືອທາງດ້ານກົດໝາຍ ແກ່ຜູ້ທີ່ຕົນປົກປ້ອງ;

3. ປະຕິບັດຈັນຍາບັນຂອງຕົນ ແລະປະກອບສ່ວນຊອກຫາຫລັກຖານ ເພື່ອເຮັດໃຫ້ການດຳເນີນຄະດີຖືກຕ້ອງ ແລະຍຸຕິທຳ.

ນອກຈາກນີ້ ທະນາຍຄວາມຍັງຕ້ອງປະຕິບັດສິດ ແລະພັນທະອື່ນຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະຂອງສະພາທະນາຍຄວາມ.

# ພາກທີ IV ການສືບສວນ-ສອບສວນຄະດີອາຍາ

## ໝວດທີ 1 ການເປີດການສືບສວນ-ສອບສວນຄະດີອາຍາ

### ມາດຕາ 36 ສາເຫດຂອງການເປີດການສືບສວນ-ສອບສວນ

ສາເຫດຂອງການເປີດການສືບສວນ-ສອບສວນຄະດີອາຍາມີດັ່ງນີ້:

1. ມີຄຳຮ້ອງຟ້ອງ ຫລືການແຈ້ງຄວາມຂອງບຸກຄົນ ຫລືການຈັດຕັ້ງ ກ່ຽວກັບການກະທຳຜິດ. ຄຳຮ້ອງຟ້ອງ ຫລືການແຈ້ງຄວາມນັ້ນໃຫ້ຍື່ນ ຫລືແຈ້ງຕໍ່ເຈົ້າໜ້າທີ່ສືບສວນ-ສອບສວນ ຫລືໄອຍະການປະຊາຊົນ;
2. ມີການເຂົ້າມອບຕົວຂອງຜູ້ກະທຳຜິດ;
3. ພົບເຫັນຮ່ອງຮອຍຂອງການກະທຳຜິດ ໂດຍອົງການສືບສວນ-ສອບສວນ ຫລືໄອຍະການປະຊາຊົນ. ໃນເວລາຄົ້ນຄວ້າ, ພິຈາລະນາຄະດີ ຖ້າຫາກສານປະຊາຊົນພົບເຫັນຫລັກຖານໃນການກະທຳຜິດອັນໃໝ່ ກໍມີສິດສະເໜີໃຫ້ເປີດການສືບສວນ-ສອບສວນຄະດີດັ່ງກ່າວ.

ການສືບສວນ-ສອບສວນຄະດີອາຍາຈະເປີດໄດ້ ກໍຕໍ່ເມື່ອຫາກມີຂໍ້ມູນທີ່ໜັກແໜ້ນ ຊຶ່ງຊີ້ໃຫ້ເຫັນອົງປະກອບຂອງການກະທຳຜິດເທົ່ານັ້ນ.

### ມາດຕາ 37 ຄຳສັ່ງເປີດການສືບສວນ-ສອບສວນ

ໃນກໍລະນີທີ່ມີຂໍ້ມູນໜັກແໜ້ນ ກ່ຽວກັບການກະທຳຜິດຫົວໜ້າອົງການສືບສວນ-ສອບສວນ, ໄອຍະການປະຊາຊົນ ຕ້ອງອອກຄຳສັ່ງເປີດການສືບສວນ-ສອບສວນໃນຂອບເຂດສິດອຳນາດຂອງຕົນ. ເນື້ອໃນຂອງຄຳສັ່ງນັ້ນຕ້ອງບອກວັນ, ເວລາ ແລະສະຖານທີ່ອອກຄຳສັ່ງ, ຊື່ ແລະນາມສະກຸນ, ໜ້າທີ່ຕຳແໜ່ງຂອງຜູ້ອອກຄຳສັ່ງ ແລະພະນັກງານສືບສວນ-ສອບສວນ, ຂໍ້ມູນໃນການເປີດການສືບສວນ-ສອບສວນ, ສະຖານການກະທຳຜິດ ແລະມາດຕາທີ່ກ່ຽວຂ້ອງຂອງກົດໝາຍອາຍາ.

ໃນກໍລະນີທີ່ຫົວໜ້າອົງການສືບສວນ-ສອບສວນ ເປັນຜູ້ອອກຄຳສັ່ງເປີດການສືບສວນ-ສອບສວນ ຕ້ອງລາຍງານໃຫ້ໄອຍະການປະຊາຊົນຊາບໃນທັນໃດ.

ໃນກໍລະນີທີ່ບໍ່ມີຂໍ້ມູນໜັກແໜ້ນໃຫ້ແກ່ການເປີດການສືບສວນ-ສອບສວນ ຫລືມີສາເຫດທີ່ພາໃຫ້ການດຳເນີນຄະດີອາຍາຕົກໄປນັ້ນ ຫົວໜ້າອົງການສືບສວນ-ສອບສວນ, ໄອຍະການປະ

ຊາຊົນ ຕ້ອງອອກຄຳສັ່ງບໍ່ເປີດການສືບສວນ-ສອບສວນ ພ້ອມທັງແຈ້ງຄຳສັ່ງດັ່ງກ່າວໃຫ້ບຸກຄົນ ຫລືການຈັດຕັ້ງທີ່ໄດ້ຮ້ອງຟ້ອງ ຫລືແຈ້ງຄວາມນັ້ນຊາບ.

ຄຳສັ່ງບໍ່ເປີດການສືບສວນ-ສອບສວນ ຂອງຫົວໜ້າອົງການສືບສວນ-ສອບສວນນັ້ນ ຄູ່ຄວາມຝ່າຍໂຈດ ແລະຈຳເລີຍ ສາມາດຂໍອຸທອນຕໍ່ໄອຍະການປະຊາຊົນ. ຄຳສັ່ງບໍ່ເປີດການສືບສວນ-ສອບສວນຂອງໄອຍະການປະຊາຊົນນັ້ນ ຄູ່ຄວາມຝ່າຍໂຈດ ແລະຈຳເລີຍສາມາດຂໍອຸທອນຕໍ່ໄອຍະການປະຊາຊົນຂັ້ນເທິງຖັດນັ້ນ ໄດ້ພາຍໃນກຳນົດເຈັດວັນ ນັບແຕ່ມື້ຮັບຊາບຄຳສັ່ງນັ້ນເປັນຕົ້ນໄປ.

### ມາດຕາ 38 ການຕິດຕາມກວດກາຂອງໄອຍະການປະຊາຊົນໃນການເປີດການສືບສວນ-ສອບສວນ

ໄອຍະການປະຊາຊົນ ມີໜ້າທີ່ຕິດຕາມກວດກາການປະຕິບັດກົດໝາຍໃນການເປີດການສືບສວນ-ສອບສວນ.

ໃນກໍລະນີທີ່ຫົວໜ້າອົງການສືບສວນ-ສອບສວນ ຫາກໄດ້ອອກຄຳສັ່ງເປີດການສືບສວນ-ສອບສວນ ໂດຍບໍ່ມີຂໍ້ມູນໜັກແໜ້ນທາງດ້ານກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 37 ຂອງກົດໝາຍສະບັບນີ້ແລ້ວ ໄອຍະການປະຊາຊົນຕ້ອງອອກຄຳສັ່ງລົບລ້າງ ແລ້ວອອກຄຳສັ່ງໃຫ້ຊຶດມ້ຽນຄະດີ.

ໃນກໍລະນີທີ່ຫົວໜ້າອົງການສືບສວນ-ສອບສວນ ຫາກອອກຄຳສັ່ງບໍ່ເປີດການສືບສວນ-ສອບສວນໂດຍບໍ່ມີເຫດຜົນພຽງພໍ ໄອຍະການປະຊາຊົນຕ້ອງອອກຄຳສັ່ງລົບລ້າງຄຳສັ່ງບໍ່ເປີດການສືບສວນ-ສອບສວນນັ້ນ ແລ້ວອອກຄຳສັ່ງເປີດການສືບສວນ-ສອບສວນດ້ວຍຕົນເອງ.

## ໝວດທີ 2 ການສືບສວນ-ສອບສວນ

### ມາດຕາ 39 ການເຄື່ອນໄຫວຂອງເຈົ້າໜ້າທີ່ສືບສວນ-ສອບສວນ

ເມື່ອໄດ້ຮັບແຈ້ງຄວາມຢ່າງໜັກແໜ້ນກ່ຽວກັບການກະທຳຜິດ ຫລືພົບເຫັນຮ່ອງຮອຍຂອງການກະທຳຜິດແລ້ວ ເຈົ້າໜ້າທີ່ສືບສວນ-ສອບສວນຕ້ອງລາຍງານໃຫ້ໄອຍະການປະຊາຊົນຊາບພາຍໃນກຳນົດ ຊາວສີ່ຊົ່ວໂມງ.

ຖ້າຫາກເຫັນວ່າເປັນຄະດີສຳຄັນ ຕ້ອງລາຍງານໃນທັນໃດ.

ໃນກໍລະນີທີ່ມີຄວາມຈຳເປັນຮີບດ່ວນ ຕ້ອງໄດ້ດຳເນີນການສືບສວນ-ສອບສວນນັ້ນ ຫົວໜ້າອົງການສືບສວນ-ສອບສວນ ຕ້ອງອອກຄຳສັ່ງເປີດການສືບສວນ-ສອບສວນ ຕາມມາດຕາ 37 ຂອງກົດໝາຍສະບັບນີ້. ພ້ອມດຽວກັນນັ້ນ ເຈົ້າໜ້າທີ່ສືບສວນ-ສອບສວນຕ້ອງນຳໃຊ້ມາດຕະການສືບສວນ-ສອບສວນ ແລະມາດຕະການສະກັດກັ້ນ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

ເມື່ອການສືບສວນ-ສອບສວນໄດ້ສິ້ນສຸດແລ້ວ ຖ້າຫາກເຫັນວ່າບໍ່ມີຫຼັກຖານໜັກແໜ້ນ ຫຼືມີສາເຫດອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍ ຊຶ່ງພາໃຫ້ມີການຊຶດມ້ຽນ ຫຼືໂຈະການດຳເນີນຄະດີນັ້ນ

ຫົວໜ້າອົງການສືບສວນ-ສອບສວນຕ້ອງອອກຄຳສັ່ງຊັດມ້ຽນຄະດີ ຫຼືໂຈະການດຳເນີນຄະດີ ແລ້ວລາຍງານໃຫ້ໄອຍະການປະຊາຊົນຊາບ.

ຖ້າຫາກເຫັນວ່າ ມີຫຼັກຖານໜັກແໜ້ນວ່າຜູ້ຖືກຫາໄດ້ກະທຳຜິດແລ້ວ ເຈົ້າໜ້າທີ່ສືບສວນ-ສອບສວນ ຕ້ອງສົ່ງບົດສະຫຼຸບການສືບສວນ-ສອບສວນ ພ້ອມດ້ວຍສຳນວນຄະດີ ແລະຂອງກາງໃຫ້ໄອຍະການປະຊາຊົນ.

## ມາດຕາ 40 ການສັ່ງຟ້ອງຂຶ້ນສານໂດຍກົງ

ໃນການກະທຳຜິດສະຖານລະຫຸໂທດ ຫຼືໂທສານຸໂທດ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບສູງສຸດບໍ່ເກີນສາມປີນັ້ນ ຖ້າຫາກມີຫຼັກຖານຄົບຖ້ວນແລ້ວ ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼືພະນັກງານສອບສວນ ຈະສົ່ງສຳນວນຄະດີພ້ອມດ້ວຍຂອງກາງ ແລະຜູ້ຕ້ອງຫາໃຫ້ໄອຍະການປະຊາຊົນ ເພື່ອທຳການສັ່ງຟ້ອງຂຶ້ນສານໂດຍກົງ ໂດຍບໍ່ຕ້ອງເປີດການສືບສວນ-ສອບສວນກໍໄດ້.

## ມາດຕາ 41 ກຳນົດເວລາດຳເນີນການສືບສວນ-ສອບສວນ

ເຈົ້າໜ້າທີ່ສືບສວນ-ສອບສວນ ຕ້ອງດຳເນີນການສືບສວນ-ສອບສວນ, ສະຫຼຸບການສືບສວນ-ສອບສວນ ແລະປະກອບສຳນວນຄະດີພ້ອມດ້ວຍຂອງກາງ ສົ່ງໃຫ້ໄອຍະການປະຊາຊົນພາຍໃນກຳນົດ ຫົກສິບວັນຢ່າງຊ້າ ນັບແຕ່ວັນອອກຄຳສັ່ງເປີດການສືບສວນ-ສອບສວນເປັນຕົ້ນໄປ.

ຖ້າວ່າມີຂໍ້ມູນ, ຮ່ອງຮອຍໜັກແໜ້ນ ແຕ່ການສືບສວນ-ສອບສວນບໍ່ທັນສິ້ນສຸດ ແລະມີຄວາມຈຳເປັນຕ້ອງໄດ້ສືບຕໍ່ນັ້ນ ໄອຍະການປະຊາຊົນອາດຈະຕໍ່ກຳນົດເວລາການສືບສວນ-ສອບສວນໃຫ້ຕື່ມອີກ ເທື່ອລະສອງເດືອນກໍໄດ້ ຕາມການຮ້ອງຂໍຂອງອົງການສືບສວນ-ສອບສວນ.

ໃນກໍລະນີທີ່ມີການສົ່ງສຳນວນຄະດີຄືນ ໃຫ້ອົງການສືບສວນ-ສອບສວນດຳເນີນການສືບສວນ-ສອບສວນເພີ່ມເຕີມນັ້ນ ກຳນົດເວລາການສືບສວນ-ສອບສວນເພີ່ມເຕີມແມ່ນບໍ່ໃຫ້ເກີນຫົກສິບວັນ ນັບແຕ່ວັນອົງການສືບສວນ-ສອບສວນ ໄດ້ຮັບສຳນວນຄະດີເປັນຕົ້ນໄປ.

ໃນກໍລະນີທີ່ມີການສືບສວນ-ສອບສວນຄືນ ຄະດີທີ່ຖືກໂຈະ ຫຼືຊັດມ້ຽນໄວ້ນັ້ນ ການສືບສວນ-ສອບສວນ ໃຫ້ປະຕິບັດຕາມກຳນົດເວລາທີ່ໄດ້ກ່າວໄວ້ໃນວັກ 1 ແລະວັກ 2 ຂອງມາດຕານີ້ ນັບແຕ່ວັນອອກຄຳສັ່ງໃຫ້ສືບສວນ-ສອບສວນຄະດີຄືນເປັນຕົ້ນໄປ.

ໃນການອະນຸຍາດ ຫຼືບໍ່ອະນຸຍາດໃຫ້ຕໍ່ກຳນົດເວລາການສືບສວນ-ສອບສວນນັ້ນ ໄອຍະການປະຊາຊົນຕ້ອງອອກຄຳສັ່ງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນພາຍໃນສີ່ສິບແປດຊົ່ວໂມງ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍເປັນຕົ້ນໄປ.

## ໝວດທີ 3 ມາດຕະການສືບສວນ-ສອບສວນ

### ມາດຕາ 42 ປະເພດມາດຕະການສືບສວນ-ສອບສວນ

ປະເພດມາດຕະການສືບສວນ-ສອບສວນ ມີດັ່ງນີ້:

- ການເອົາຄຳໃຫ້ການ;
- ການສອບຖາມຊ້ອງໜ້າ;
- ການຊັນນະສູດສະຖານທີ່ເກີດເຫດ;
- ການຊັນນະສູດຊາກສົບ;
- ການກວດຄົ້ນເຄຫະສະຖານ, ຍານພາຫະນະ ຫລືຕົວບຸກຄົນ;
- ການຍຶດ ແລະການອາຍັດຊັບ;
- ການທົດສອບຂໍ້ມູນຄືນໃໝ່;
- ການຊີ້ຕົວ ແລະການຢັ້ງຢືນ.

### ມາດຕາ 43 ການເອົາຄຳໃຫ້ການ

**ການເອົາຄຳໃຫ້ການຂອງຜູ້ຖືກຫາ:**

ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ ຕ້ອງເອົາຄຳໃຫ້ການຂອງຜູ້ຖືກຫາ ໃນທັນໃດ ພາຍຫຼັງທີ່ໄດ້ເປີດການສືບສວນ-ສອບສວນແລ້ວ, ຖ້າວ່າການເອົາຄຳໃຫ້ການຫາກບໍ່ສາມາດຈະດຳເນີນໄດ້ໃນທັນໃດ ກໍຕ້ອງເຮັດບົດບັນທຶກພ້ອມດ້ວຍເຫດຜົນ.

ໃນເບື້ອງຕົ້ນຂອງການເອົາຄຳໃຫ້ການນັ້ນ ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼືພະນັກງານສອບສວນຕ້ອງແຈ້ງຂໍ້ກ່າວຫາ ພ້ອມທັງອະທິບາຍສິດ ແລະພັນທະຂອງຜູ້ຖືກຫາ.

**ການເອົາຄຳໃຫ້ການຂອງພະຍານ, ຜູ້ຖືກເສັຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ:**

ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ ຕ້ອງແຈ້ງສິດ ແລະພັນທະຂອງພວກກ່ຽວ, ເຕືອນໃຫ້ຮູ້ຄວາມຮັບຜິດຊອບຕໍ່ຄຳໃຫ້ການຂອງຕົນ ຫຼືຕໍ່ການປະຕິເສດບໍ່ຍອມໃຫ້ການ.

ການເອົາຄຳໃຫ້ການນັ້ນ ຕ້ອງດຳເນີນຢູ່ຫ້ອງການຂອງເຈົ້າໜ້າທີ່ສືບສວນ-ສອບສວນ ຫຼືພະນັກງານສອບສວນ ແຕ່ຖ້າຫາກມີຄວາມຈຳເປັນກໍອາດຈະດຳເນີນຢູ່ບ່ອນອື່ນກໍໄດ້.

ໃນການເອົາຄຳໃຫ້ການນັ້ນ ນອກຈາກເຈົ້າໜ້າທີ່ສືບສວນ-ສອບສວນ ຫຼືພະນັກງານສອບສວນແລ້ວ ຕ້ອງມີຜູ້ບັນທຶກເຂົ້າຮ່ວມນຳອີກ.

### ມາດຕາ 44 ການເອົາຄຳໃຫ້ການຂອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຄົນຫູໜວກ ປາກກືກ ແລະຄົນປັນຍາອ່ອນ ເສັຍຈິດ

ໃນການເອົາຄຳໃຫ້ການຂອງເດັກ ທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຄົນຫູໜວກປາກກືກ, ຄົນປັນຍາອ່ອນ ເສັຍຈິດ ຊຶ່ງບໍ່ສາມາດປະຕິບັດສິດຂອງຕົນໄດ້ນັ້ນ ຕ້ອງມີການເຂົ້າຮ່ວມຂອງຜູ້ປົກປ້ອງ, ຄູ, ພໍ່ແມ່, ຜູ້ປົກຄອງ ຫຼືຜູ້ຕາງໜ້າອື່ນໆ.

### ມາດຕາ 45 ບົດບັນທຶກຄຳໃຫ້ການ

ໃນການເອົາຄຳໃຫ້ການແຕ່ລະເທື່ອນັ້ນ ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼືພະນັກງານສອບສວນ ຕ້ອງເຮັດບົດບັນທຶກ.

ໃນບົດບັນທຶກຄຳໃຫ້ການນັ້ນຕ້ອງບົ່ງບອກ: ສະຖານທີ່, ວັນ, ເວລາ, ຊື່ ແລະນາມສະກຸນ, ຊັ້ນຕຳແໜ່ງຂອງເຈົ້າໜ້າທີ່ສືບສວນ-ສອບສວນ ຫລືພະນັກງານສອບສວນ, ຊື່ ແລະນາມສະກຸນ, ຊີວະປະຫວັດຫຍໍ້ຂອງຜູ້ໃຫ້ການ ແລະອື່ນໆ ຊຶ່ງໄດ້ກຳນົດໄວ້ໃນແບບພິມ.

ເມື່ອໄດ້ເອົາຄຳໃຫ້ການສິ້ນສຸດແລ້ວ ເຈົ້າໜ້າທີ່ສືບສວນ-ສອບສວນ ຫລືພະນັກງານສອບສວນ ຕ້ອງອ່ານເນື້ອໃນຂອງບົດບັນທຶກໃຫ້ຜູ້ໃຫ້ການຟັງ ຫລືໃຫ້ຜູ້ກ່ຽວອ່ານເອົາເອງກໍໄດ້. ຫລັງຈາກນັ້ນ ບັນດາຜູ້ເຂົ້າຮ່ວມໃນການເອົາຄຳໃຫ້ການ ຕ້ອງພ້ອມກັນລົງລາຍເຊັນ ແລະແປະໂປ້ມືໃສ່ແຕ່ລະໜ້າ. ໃນກໍລະນີທີ່ເອົາຄຳໃຫ້ການຂອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຄົນຫູໜວກ, ປາກກືກ ແລະຄົນປັນຍາອ່ອນ ເສັຍຈິດ ຕ້ອງໃຫ້ຜູ້ປົກປ້ອງລົງລາຍເຊັນ ແລະແປະໂປ້ມືໃສ່ເພື່ອຢັ້ງຢືນຄຳໃຫ້ການດັ່ງກ່າວ.

ຖ້າຫາກມີການຂີດຂ້າ ຫລືເພີ່ມເຕີມຂໍ້ຄວາມໃນບົດບັນທຶກແລ້ວ ເຈົ້າໜ້າທີ່ສືບສວນ-ສອບສວນ ຫລືພະນັກງານສອບສວນ, ຜູ້ບັນທຶກ ແລະຜູ້ໃຫ້ການຕ້ອງລົງລາຍເຊັນ ແລະແປະໂປ້ມື ຢັ້ງຢືນໄວ້ຕໍ່ໜ້າແຖວບ່ອນຂີດຂ້າ ຫລືເພີ່ມເຕີມນັ້ນ.

ໃນກໍລະນີທີ່ຜູ້ໃຫ້ການຫາກບໍ່ຍອມລົງລາຍເຊັນ ຫລືບໍ່ຍອມແປະໂປ້ມືນັ້ນ ເຈົ້າໜ້າທີ່ສືບສວນ-ສອບສວນ ຫລືພະນັກງານສອບສວນ ຕ້ອງໝາຍເຫດໄວ້ໃນຕອນທ້າຍຂອງບົດບັນທຶກ.

ບົດບັນທຶກຄຳໃຫ້ການນັ້ນ ໃຫ້ເຮັດເປັນສາມສະບັບ, ສະບັບຕົ້ນປະກອບໃສ່ສຳນວນຄະດີ, ສະບັບໜຶ່ງໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ ຫລືພະນັກງານສອບສວນເກັບມ້ຽນໄວ້ ແລະອີກສະບັບໜຶ່ງມອບໃຫ້ຜູ້ໃຫ້ການ.

### ມາດຕາ 46 ການສອບຖາມຊ້ອງໜ້າ

ເມື່ອຄຳໃຫ້ການຫາກບໍ່ກົງກັນ ເຈົ້າໜ້າທີ່ສືບສວນ-ສອບສວນ ຫລືພະນັກງານສອບສວນ ມີສິດທຳການສອບຖາມຊ້ອງໜ້າລະຫວ່າງຜູ້ໃຫ້ການດ້ວຍກັນ ແຕ່ການສອບຖາມຊ້ອງໜ້າແຕ່ລະເທື່ອນັ້ນບໍ່ໃຫ້ເກີນສອງຄົນ. ສຳລັບບົດບັນທຶກການສອບຖາມຊ້ອງໜ້ານັ້ນ ໃຫ້ປະຕິບັດຕາມ ມາດຕາ 45 ຂອງກົດໝາຍສະບັບນີ້.

### ມາດຕາ 47 ການຊັນນະສູດສະຖານທີ່ເກີດເຫດ

ເພື່ອຊອກຫາຮ່ອງຮອຍຂອງການກະທຳຜິດ ແລະຫຼັກຖານ ເປັນຕົ້ນຫຼັກຖານທາງດ້ານວັດຖຸ ແນໃສ່ເຮັດໃຫ້ສະພາບຂອງການກະທຳຜິດໄດ້ແຈ້ງຂາວນັ້ນ ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼືພະນັກງານສອບສວນ ຕ້ອງທຳການຊັນນະສູດສະຖານທີ່ເກີດເຫດ, ເກັບກຳເອົາວັດຖຸສິ່ງຂອງ, ເອກະສານ ແລະອື່ນໆ ທີ່ພົວພັນກັບການກະທຳຜິດ.

ການຊັນນະສູດສະຖານທີ່ເກີດເຫດ ອາດຈະເຮັດຂຶ້ນກ່ອນ ຫຼືຫຼັງການເປີດການສືບສວນ-ສອບສວນກໍໄດ້.

ການຊັນນະສູດສະຖານທີ່ເກີດເຫດ ຕ້ອງດຳເນີນໃນເວລາກາງເວັນ ແຕ່ທີກໂມງເຊົ້າຫາທີກໂມງແລງ ເວັ້ນເສຍແຕ່ໃນກໍລະນີທີ່ມີຄວາມຈຳເປັນ ແລະຮີບດ່ວນເທົ່ານັ້ນ. ໃນກໍລະນີທີ່ການຊັນນະສູດສະຖານທີ່ເກີດເຫດ ຫາກບໍ່ທັນສິ້ນສຸດ ກໍໃຫ້ສືບຕໍ່ໄປຈົນກວ່າສຳເລັດ.

ໃນເວລາທຳການຊັນນະສູດສະຖານທີ່ເກີດເຫດນັ້ນ ຕ້ອງໃຫ້ມີພະຍານຢ່າງໜ້ອຍສອງຄົນເຂົ້າຮ່ວມນຳ. ໃນກໍລະນີຈຳເປັນຕ້ອງເຊີນໄອຍະການປະຊາຊົນ ແລະຜູ້ຕາງໜ້າອົງການປົກຄອງບ້ານເຂົ້າຮ່ວມນຳອີກດ້ວຍ.

ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼືພະນັກງານສອບສວນ ມີສິດນຳຕົວຜູ້ຖືກຫາ ຫລືຜູ້ຖືກສົງໄສ, ຮຽກຜູ້ຖືກເສັຍຫາຍ, ພະຍານ ແລະເຊີນຜູ້ຊ່ຽວຊານທີ່ກ່ຽວຂ້ອງເຂົ້າຮ່ວມທຳການຊັນນະສູດສະຖານທີ່ເກີດເຫດນຳ.

ໃນການຊັນນະສູດສະຖານທີ່ເກີດເຫດ ເຈົ້າໜ້າທີ່ສືບສວນ-ສອບສວນ ຫລືພະນັກງານສອບສວນ ຕ້ອງແຕ້ມແຜນວາດສະຖານທີ່ເກີດເຫດ, ເກັບກຳເອົາວັດຖຸສິ່ງຂອງທີ່ພົວພັນກັບການກະທຳຜິດ, ເອົາຮ່ອງຮອຍການກະທຳຜິດ ແລະຖ່າຍຮູບໄວ້.

## ມາດຕາ 48 ການຊັນນະສູດຊາກສົບ

ເຈົ້າໜ້າທີ່ສືບສວນ-ສອບສວນ ຫລືພະນັກງານສອບສວນ ຕ້ອງທຳການຊັນນະສູດຊາກສົບຢູ່ສະຖານທີ່ເກີດເຫດ ໂດຍໃຫ້ມີພະຍານຢ່າງໜ້ອຍສອງຄົນ, ນິຕິແພດ ຫລືຜູ້ຊ່ຽວຊານທີ່ກ່ຽວຂ້ອງເຂົ້າຮ່ວມນຳ. ໃນກໍລະນີຈຳເປັນຕ້ອງເຊີນໄອຍະການປະຊາຊົນ ແລະຜູ້ຕາງໜ້າອົງການປົກຄອງບ້ານເຂົ້າຮ່ວມນຳອີກດ້ວຍ.

## ມາດຕາ 49 ບົດບັນທຶກການຊັນນະສູດ

ໃນການຊັນນະສູດສະຖານທີ່ເກີດເຫດ ຫຼືຊາກສົບນັ້ນ ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼືພະນັກງານສອບສວນ ຕ້ອງເຮັດບົດບັນທຶກກັບທີ່. ໃນບົດບັນທຶກຕ້ອງບົ່ງບອກ: ສະຖານທີ່, ວັນ, ເວລາເລີ່ມຕົ້ນ ແລະເວລາສິ້ນສຸດການຊັນນະສູດ, ຊື່ ແລະນາມສະກຸນ, ທີ່ຢູ່, ອາຊີບ, ໜ້າທີ່ຕຳແໜ່ງຂອງເຈົ້າໜ້າທີ່ສືບສວນ-ສອບສວນ ຫລືພະນັກງານສອບສວນ ແລະບຸກຄົນທີ່ເຂົ້າຮ່ວມໃນການຊັນນະສູດ, ສະພາບທີ່ພົບເຫັນ ຫລືເກີດຂຶ້ນ ໃນຂະນະນັ້ນ ແລະວັດຖຸສິ່ງຂອງ, ສິ່ງທີ່ຖືກຍຶດໂດຍບອກປະເພດ, ຈຳນວນ, ຮູບປະພັນ, ຂະໜາດ, ນ້ຳໜັກ ແລະຄຸນນະພາບ.

ພາຍຫຼັງທີ່ໄດ້ເຮັດບົດບັນທຶກ, ແຜນວາດ ແລະໄດ້ອ່ານຜ່ານກັນແລ້ວ ບຸກຄົນທີ່ເຂົ້າຮ່ວມໃນການຊັນນະສູດນັ້ນ ຕ້ອງພ້ອມກັນລົງລາຍເຊັນ ແລະແປະໂປ້ມືໄວ້.

## ມາດຕາ 50 ການແຕ່ງຕັ້ງຜູ້ຊ່ຽວຊານໃຫ້ທຳການພິສູດ

ເມື່ອເຫັນວ່າມີຄວາມຈຳເປັນທີ່ຈະຕ້ອງທຳການພິສູດ ເປັນຕົ້ນໃນກໍລະນີທີ່ມີການເສັຍຊີວິດໂດຍບໍ່ຮູ້ສາເຫດຈະແຈ້ງ, ການຂົ່ມຂືນທຳຊຳເລົາ ຫຼືມີການສົງໄສ ກ່ຽວກັບກະສຽນອາຍຸ, ສະຕິ

ສຳນວນຄະດີຂອງຜູ້ຖືກຫານັ້ນ ຫົວໜ້າອົງການສືບສວນ-ສອບສວນ ຫຼືໄອຍະການປະຊາຊົນ ຕ້ອງອອກຄຳສັ່ງແຕ່ງຕັ້ງນິຕິແພດ ຫຼືຜູ້ຊ່ຽວຊານອື່ນໆທີ່ກ່ຽວຂ້ອງ ໃຫ້ທຳການພິສູດ.

ໃນຄຳສັ່ງນັ້ນຕ້ອງບົ່ງບອກ: ຊື່ ແລະນາມສະກຸນຂອງນິຕິແພດ ຫຼືຜູ້ຊ່ຽວຊານອື່ນທີ່ກ່ຽວຂ້ອງ, ບັນຫາທີ່ຈະຕ້ອງພິສູດ, ກຳນົດເວລາພິສູດ, ສິດ ແລະພັນທະຂອງຜູ້ຊ່ຽວຊານ.

ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼືພະນັກງານສອບສວນ ຕ້ອງແຈ້ງຄຳສັ່ງດັ່ງກ່າວໃຫ້ຜູ້ຖືກຫາ, ຜູ້ຖືກເສຍຫາຍ, ໂຈດທາງແພ່ງ ແລະຜູ້ຮັບຜິດຊອບທາງແພ່ງຊາບ.

ພາຍຫຼັງການພິສູດໄດ້ສິ້ນສຸດລົງແລ້ວ ຜູ້ຊ່ຽວຊານຕ້ອງເຮັດບົດສະຫຼຸບໃຫ້ຄວາມເຫັນຂອງຕົນ ແລ້ວສົ່ງໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼືພະນັກງານສອບສວນ ຕາມກຳນົດເວລາທີ່ໄດ້ມອບໝາຍໃຫ້.

ການພິສູດອາດຈະເຮັດໂດຍຜູ້ຊ່ຽວຊານຜູ້ດຽວ, ຫຼາຍຄົນ ຫຼືຫຼາຍເທື່ອກໍໄດ້, ໃນການພິສູດຄືນໃໝ່ນັ້ນ ຕ້ອງໃຫ້ມີຜູ້ຊ່ຽວຊານຫຼາຍກວ່າເທື່ອຜ່ານມາ.

## ມາດຕາ 51 ການກວດຄົ້ນ

ຈະທຳການກວດຄົ້ນໄດ້ ກໍຕໍ່ເມື່ອຫາກມີຄຳສັ່ງເປັນລາຍລັກອັກສອນຂອງໄອຍະການປະຊາຊົນ ຫຼືສານປະຊາຊົນເທົ່ານັ້ນ ເວັ້ນເສັຍແຕ່ໃນກໍລະນີທີ່ມີຄວາມຈຳເປັນອັນຮີບດ່ວນ ແຕ່ກໍຕ້ອງລາຍງານໃຫ້ໄອຍະການປະຊາຊົນຊາບພາຍໃນກຳນົດຊາວສີ່ຊົ່ວໂມງ ພາຍຫຼັງທີ່ການກວດຄົ້ນໄດ້ສິ້ນສຸດແລ້ວ.

ກ່ອນ ແລະພາຍຫຼັງການກວດຄົ້ນນັ້ນ ບຸກຄົນທີ່ເຂົ້າຮ່ວມໃນການກວດຄົ້ນ ຕ້ອງສະແດງຄວາມບໍລິສຸດຂອງຕົນຕໍ່ເຈົ້າຂອງສະຖານທີ່, ເຈົ້າຂອງຍານພາຫະນະ ຫຼືຕໍ່ບຸກຄົນທີ່ຖືກກວດຄົ້ນ.

## ມາດຕາ 52 ການກວດຄົ້ນເຄຫະສະຖານ

ເຄຫະສະຖານ ໝາຍເຖິງເຮືອນຢູ່ ແລະສິ່ງຕ່າງໆ ທີ່ຕັ້ງຢູ່ໃນບໍລິເວນເດີ່ນບ້ານ, ເຮືອ, ແພທີ່ໃຊ້ເປັນບ່ອນຢູ່ປະຈຳຂອງຄອບຄົວ, ສຳນັກງານ, ເຮືອນພັກ, ໂຮງແຮມ ແລະອື່ນໆ.

ການກວດຄົ້ນເຄຫະສະຖານ ຕ້ອງເຮັດຊ້ອງໜ້າອົງການປົກຄອງບ້ານ, ເຈົ້າຂອງເຮືອນ ແລະພະຍານຢ່າງໜ້ອຍສອງຄົນ. ໃນກໍລະນີທີ່ມີການກວດຄົ້ນ ສຳນັກງານ, ອົງການ, ວິສາຫະກິດ ຕ້ອງເຮັດຊ້ອງໜ້າຜູ້ຕາງໜ້າສຳນັກງານ, ອົງການ, ວິສາຫະກິດທີ່ກ່ຽວຂ້ອງ.

ການກວດຄົ້ນສາສະໜາສະຖານ ຊຶ່ງແມ່ນເຄຫະສະຖານປະເພດໜຶ່ງ ເຊັ່ນ: ກຸຕິວິຫານ, ສິມ, ໂບດ, ຫໍ ຕ້ອງມີການເຂົ້າຮ່ວມຂອງເຈົ້າອະທິການວັດ, ຄຸນພໍ່, ຜູ້ຮັບຜິດຊອບ ຫຼືຜູ້ຕາງໜ້າອົງການສາສະໜາທີ່ກ່ຽວຂ້ອງນັ້ນ.

ການກວດຄົ້ນເຄຫະສະຖານ ແລະສາສະໜາສະຖານ ໃຫ້ດຳເນີນໃນເວລາກາງເວັນ ແຕ່ຫົກໂມງເຊົ້າ ຫາຫົກໂມງແລງ. ໃນກໍລະນີທີ່ການກວດຄົ້ນຫາກໄດ້ດຳເນີນມາແລ້ວ ແຕ່ຍັງບໍ່ທັນສິ້ນສຸດນັ້ນ ກໍໃຫ້ສືບຕໍ່ຈົນກ່ວາຈະສຳເລັດ.

ວັດຖຸສິ່ງຂອງ ແລະເອກະສານຕ່າງໆ ທີ່ຈະຍຶດເອົາເປັນຂອງກາງໄດ້ນັ້ນ ກໍຕໍ່ເມື່ອສິ່ງດັ່ງກ່າວຫາກພົວພັນກັບການກະທຳຜິດ ຫຼືເປັນສິ່ງທີ່ຜິດກົດໝາຍເທົ່ານັ້ນ.

### ມາດຕາ 53 ການກວດຄົ້ນຍານພາຫະນະ ແລະຕົວບຸກຄົນ

ການກວດຄົ້ນຍານພາຫະນະ ເຊັ່ນ: ລົດ, ເຮືອ ຫຼືຍານພາຫະນະອື່ນໆ ທີ່ຖືກສົງໃສວ່າໄດ້ມີການຊຸກເຊື່ອງສິ່ງທີ່ຜິດກົດໝາຍ ຫຼືຜູ້ກະທຳຜິດນັ້ນ ຈະດຳເນີນເວລາໃດກໍໄດ້ ແຕ່ຕ້ອງດຳເນີນໂດຍຊ້ອງໜ້າເຈົ້າຂອງຍານພາຫະນະນັ້ນ.

ການກວດຄົ້ນຕົວບຸກຄົນ ທີ່ຖືກຈັບຕົວ, ກັກຂັງ ຫຼືທີ່ຖືກສົງໄສວ່າ ໄດ້ຊຸກເຊື່ອງສິ່ງຂອງຕ່າງໆທີ່ຜິດກົດໝາຍນັ້ນ ຈະເຮັດຂຶ້ນໂດຍບໍ່ມີຄຳສັ່ງກໍໄດ້.

ເຈົ້າໜ້າທີ່ຜູ້ທຳການກວດຄົ້ນ ຕ້ອງແມ່ນບຸກຄົນທີ່ເປັນເພດດຽວກັນກັບຜູ້ຖືກກວດຄົ້ນ.

ການກວດຄົ້ນຕົວຜູ້ຍິງ ຕ້ອງເຮັດໃນສະຖານທີ່ກຳບັງ.

### ມາດຕາ 54 ບົດບັນທຶກການກວດຄົ້ນ

ເມື່ອໄດ້ກວດຄົ້ນເຄຫະສະຖານ, ຍານພາຫະນະ ຫຼືຕົວບຸກຄົນສິ້ນສຸດແລ້ວ ເຈົ້າໜ້າທີ່ຜູ້ທຳການກວດຄົ້ນ ຕ້ອງເຮັດບົດບັນທຶກການກວດຄົ້ນ ແລະບັນຊີຂອງກາງຕາມຮູບປະພັນ, ຈຳນວນ ແລະຄຸນນະພາບຢ່າງລະອຽດກັບທີ່.

ບົດບັນທຶກການກວດຄົ້ນເຄຫະສະຖານຕ້ອງເຮັດເປັນສາມສະບັບ ແລະອ່ານຊ້ອງໜ້າຜູ້ເຂົ້າຮ່ວມໃນການກວດຄົ້ນ ແລ້ວພ້ອມກັນລົງລາຍເຊັນ ແລະແປະໂປ້ມື ໄວ້ເປັນຫຼັກຖານ. ບົດບັນທຶກດັ່ງກ່າວໜຶ່ງສະບັບປະກອບເຂົ້າໃນສຳນວນຄະດີ, ໜຶ່ງສະບັບມອບໃຫ້ເຈົ້າຂອງເຮືອນ ຫຼືຜູ້ຕາງໜ້າສຳນັກງານ, ອົງການ, ວິສາຫະກິດທີ່ກ່ຽວຂ້ອງ ແລະອີກໜຶ່ງສະບັບມອບໃຫ້ອົງການປົກຄອງບ້ານ.

ສຳລັບບົດບັນທຶກການກວດຄົ້ນຍານພາຫະນະ ຫລືຕົວບຸກຄົນ ກໍຕ້ອງເຮັດເປັນສາມສະບັບເຊັ່ນກັນ, ໜຶ່ງສະບັບປະກອບເຂົ້າໃນສຳນວນຄະດີ, ໜຶ່ງສະບັບມອບໃຫ້ເຈົ້າຂອງຍານພາຫະນະ ຫຼືບຸກຄົນທີ່ຖືກກວດຄົ້ນ ແລະອີກໜຶ່ງສະບັບມອບໃຫ້ເຈົ້າໜ້າທີ່ເກັບມ້ຽນໄວ້.

### ມາດຕາ 55 ການຍຶດ ແລະການອາຍັດຊັບ

ໃນກໍລະນີທີ່ໄດ້ຮູ້ແຈ້ງກ່ຽວກັບປະເພດ,ຈຳນວນ ແລະສະຖານທີ່ເກັບມ້ຽນວັດຖຸສິ່ງຂອງທີ່ພົວພັນກັບການກະທຳຜິດ ແລະຈະນຳໃຊ້ເປັນປະໂຫຍດໃນການດຳເນີນຄະດີນັ້ນ ຫົວໜ້າອົງການສືບສວນ-ສອບສວນ ຫຼືໄອຍະການປະຊາຊົນ ຕ້ອງອອກຄຳສັ່ງຍຶດ ຫຼືອາຍັດຊັບໄວ້. ສຳລັບວັດຖຸສິ່ງຂອງທີ່ໂຍກຍ້າຍບໍ່ໄດ້ ກໍໃຫ້ອອກຄຳສັ່ງອາຍັດຊັບ.

ສຳລັບວັດຖຸສິ່ງຂອງທີ່ຜິດກົດໝາຍເປັນຕົ້ນຢາເສບຕິດ ພາຍຫຼັງທີ່ຍຶດມາແລ້ວ ຫົວໜ້າອົງການທີ່ກ່ຽວຂ້ອງຕ້ອງແຕ່ງຕັ້ງຜູ້ຊ່ຽວຊານໃຫ້ທຳການພິສູດ ເບິ່ງຄຸນນະພາບ, ປະເພດ ແລະສ່ວນປະກອບຂອງຢາເສບຕິດນັ້ນໂດຍດ່ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 50 ຂອງກົດໝາຍສະບັບນີ້.

ວິທີການດຳເນີນການຍຶດ ຫຼືການອາຍັດຊັບ ແລະການເຮັດບົດບັນທຶກການຍຶດ ຫຼືການອາຍັດຊັບນັ້ນ ໃຫ້ປະຕິບັດຕາມມາດຕາ 51, 52 ແລະມາດຕາ 54 ຂອງກົດໝາຍສະບັບນີ້.

## ມາດຕາ 56 ການຮັກສາຂອງກາງ

ຂອງກາງ ແມ່ນວັດຖຸສິ່ງຂອງທີ່ພົວພັນກັບການກະທຳຜິດ ໝາຍຄວາມວ່າ ວັດຖຸສິ່ງຂອງທີ່ຮັບໃຊ້ ຫຼືຈະຮັບໃຊ້ການກະທຳຜິດ, ທີ່ໄດ້ມາ ຫຼືຈະໄດ້ມາຈາກການກະທຳຜິດ.

ຂອງກາງດັ່ງກ່າວໄດ້ມາຈາກການຍຶດ, ການກວດຄົ້ນ ຫຼືໄດ້ມາຈາກການຊັນນະສູດ ແລະໄດ້ມາຈາກການດຳເນີນມາດຕະການອື່ນໆຂອງການສືບສວນ-ສອບສວນ.

ຂອງກາງ ຕ້ອງໄດ້ປົກປັກຮັກສາ, ຄຸ້ມຄອງໃຫ້ດີ, ເກັບມ້ຽນໃນສະຖານທີ່ປອດໄພ ແລະເໝາະສົມ ພ້ອມທັງຂຶ້ນບັນຊີຢ່າງລະອຽດ. ຂອງກາງທີ່ເປັນວັດຖຸສິ່ງຂອງທີ່ສາມາດຫຸ້ມຫໍ່ໄດ້ ຕ້ອງໄດ້ຫຸ້ມຫໍ່ໃສ່ຖົງ, ອັດຕິດຄັ່ງ, ປະທັບຕາ ແລະຮັກສາໄວ້ໃຫ້ດີ. ຂອງກາງທີ່ເປັນເງິນຕາ, ເງິນຕາຕ່າງປະເທດ, ເຊັກ ຫຼືພັນທະບັດອື່ນ, ວັດຖຸທີ່ມີຄ່າ ຕ້ອງເອົາໄປຝາກໄວ້ນຳທະນາຄານ ຕາມລະບຽບການ. ສຳລັບເງິນທີ່ເປັນຫຼັກຖານໃນການດຳເນີນຄະດີ ຕ້ອງມີການຈົດເລກເງິນແຕ່ລະໃບ. ຂອງກາງທີ່ເປັນສິ່ງບູດເນົ່າ ຫຼືເສື່ອມຄຸນໄວນັ້ນ ຈະຕ້ອງຂາຍ ເພື່ອເອົາເງິນມາຮັກສາໄວ້.

ສ່ວນຂອງກາງທີ່ເປັນຢາເສບຕິດ ຕ້ອງໃຫ້ເກັບມ້ຽນໄວ້ໃນສາງຢາເສບຕິດສະເພາະ ແລະມີການຮັກສາຢ່າງເຂັ້ມງວດ ພາຍໃຕ້ການຄຸ້ມຄອງຂອງຂະແໜງການປ້ອງກັນຄວາມສະຫງົບ.

ບຸກຄົນໃດນຳເອົາຂອງກາງໄປໃຊ້, ເຮັດໃຫ້ເປ່ເພ່, ຕົກເຮ່ຍເສຍຫາຍ, ສັບປ່ຽນ ຫຼືຍັກຍອກເອົາ ຈະຖືກຮັບຜິດຊອບທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 112 ແລະ 157 ຂອງກົດໝາຍອາຍາ.

ບັນຊີຂອງກາງຄະດີ ຕ້ອງສົ່ງພ້ອມກັບສຳນວນຄະດີ. ເມື່ອສຳນວນຄະດີຮອດຂັ້ນໃດ ສິດຕົກລົງກ່ຽວກັບຂອງກາງຄະດີ ແມ່ນຂຶ້ນກັບຂັ້ນນັ້ນ.

## ມາດຕາ 57 ການທົດສອບຂໍ້ມູນຄືນໃໝ່

ເພື່ອກວດກາ ແລະຢັ້ງຢືນຄວາມຖືກຕ້ອງຂອງຂໍ້ມູນໃດຂໍ້ມູນໜຶ່ງ ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ ຫຼືໄອຍະການປະຊາຊົນ ສາມາດທຳການທົດສອບຂໍ້ມູນນັ້ນຄືນໃໝ່ ໂດຍໃຫ້ຜູ້ຖືກຫາ ຫຼືຈຳເລີຍສະແດງການກະທຳຂອງຕົນຄືນໃໝ່. ໃນການທົດສອບຂໍ້ມູນຄືນໃໝ່ ອາດຈະໃຫ້ຜູ້ຖືກເສຍຫາຍ ຫຼືພະຍານ ສະແດງຄືນກໍໄດ້. ການທົດສອບຂໍ້ມູນຄືນໃໝ່ ຕ້ອງຖ່າຍຮູບ, ວັດແທກ ແລະແຕ້ມແຜນວາດປະກອບ.

ໃນການທົດສອບຂໍ້ມູນຄືນໃໝ່ ຈະຕ້ອງມີພະຍານເຂົ້າຮ່ວມນຳຢ່າງໜ້ອຍສອງຄົນ ແລະອາດຈະມີການເຂົ້າຮ່ວມຂອງຜູ້ຖືກເສຍຫາຍກໍໄດ້. ໃນກໍລະນີທີ່ຈຳເປັນຕ້ອງໃຫ້ໄອຍະການປະຊາຊົນ ແລະຜູ້ຊ່ຽວຊານທີ່ກ່ຽວຂ້ອງເຂົ້າຮ່ວມນຳ.

ການທົດສອບຂໍ້ມູນຄືນໃໝ່ນັ້ນ ຈະເຮັດໄດ້ ກໍຕໍ່ເມື່ອຫາກເຫັນວ່າບໍ່ເປັນໄພອັນຕະລາຍຕໍ່ຊີວິດ, ສຸຂະພາບ ຫຼືສິ່ງແວດລ້ອມ ແລະທັງບໍ່ກໍ່ຄວາມເສຍຫາຍແກ່ກຽດສັກສີຂອງມະນຸດ.

ບົດບັນທຶກການທົດສອບຂໍ້ມູນຄືນໃໝ່ນັ້ນ ໃຫ້ປະຕິບັດຕາມມາດຕາ 54 ຂອງກົດໝາຍສະບັບນີ້.

### ມາດຕາ 58 ການຊີ້ຕົວ ແລະການຢັ້ງຢືນ

ການຊີ້ຕົວ ແມ່ນມາດຕະການໜຶ່ງໃນການສືບສວນ-ສອບສວນທີ່ສະແດງອອກ ໂດຍໃຫ້ພະຍານ ຫລືຜູ້ຖືກເສັຍຫາຍ ເປັນຜູ້ຊີ້ຕົວຜູ້ຖືກຫາ ຫຼືຈຳເລີຍທີ່ຕົນຮູ້ເຫັນວ່າ ເປັນຜູ້ກະທຳຜິດ.

ການຢັ້ງຢືນ ແມ່ນມາດຕະການໜຶ່ງໃນການສືບສວນ-ສອບສວນ ທີ່ສະແດງອອກໂດຍ ໃຫ້ພະຍານ ຫຼືຜູ້ຖືກເສັຍຫາຍ ຢັ້ງຢືນວັດຖຸສິ່ງຂອງທີ່ພົວພັນເຖິງການກະທຳຜິດ ຫຼືຊາກສົບທີ່ຕົນຮູ້ເຫັນ.

ໃນກໍລະນີທີ່ຈຳເປັນ ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ ຫຼືໄອຍະການປະຊາຊົນ ຕ້ອງໃຫ້ພະຍານ, ຜູ້ຖືກເສັຍຫາຍ, ຜູ້ຖືກສົງໄສ ຫຼືຜູ້ຖືກຫາ ຊີ້ຕົວບຸກຄົນ, ຢັ້ງຢືນວັດຖຸສິ່ງຂອງ ຫຼືຊາກສົບ.

ກ່ອນການຊີ້ຕົວ ຫຼືຢັ້ງຢືນນັ້ນ ຜູ້ຈະຊີ້ຕົວບຸກຄົນ, ຢັ້ງຢືນວັດຖຸສິ່ງຂອງ ຫຼືຊາກສົບ ຕ້ອງໃຫ້ການກ່ຽວກັບສະພາບທີ່ຕົນໄດ້ພົບເຫັນ ພ້ອມທັງບອກຕຳນິ, ຮູບປະພັນ, ຈຸດພິເສດຕ່າງໆຂອງບຸກຄົນ, ວັດຖຸສິ່ງຂອງ ຫຼືຊາກສົບນັ້ນ.

ໃນການຊີ້ຕົວ ຕ້ອງນຳເອົາບຸກຄົນທີ່ຈະຖືກຊີ້ຕົວມາຮ່ວມກັບບຸກຄົນອື່ນຢ່າງໜ້ອຍສາມຄົນທີ່ມີຮູບຮ່າງຄ້າຍຄືກັນ ແລ້ວເອົາຜູ້ຈະຊີ້ຕົວນັ້ນມາດຳເນີນການຊີ້ຕົວໂດຍຮັບປະກັນຄວາມລັບ ແລະຄວາມປອດໄພໃຫ້ຜູ້ກ່ຽວ.

ໃນການຢັ້ງຢືນວັດຖຸສິ່ງຂອງນັ້ນ ຕ້ອງນຳເອົາວັດຖຸສິ່ງຂອງທີ່ຈະຖືກຢັ້ງຢືນມາວາງລວມກັບວັດຖຸສິ່ງຂອງອື່ນໆທີ່ມີລັກສະນະຄ້າຍຄືກັນ, ປະເພດດຽວກັນຢ່າງໜ້ອຍ ສາມອັນ ແລ້ວເອົາຜູ້ທີ່ຈະຢັ້ງຢືນມາຢັ້ງຢືນວັດຖຸທີ່ກ່ຽວຂ້ອງ.

ການເຮັດບົດບັນທຶກການຊີ້ຕົວ ຫຼືການຢັ້ງຢືນນັ້ນໃຫ້ປະຕິບັດຕາມມາດຕາ 54 ຂອງກົດໝາຍສະບັບນີ້.

## ໝວດທີ 4 ມາດຕະການສະກັດກັ້ນ

### ມາດຕາ 59 ປະເພດມາດຕະການສະກັດກັ້ນ

ປະເພດມາດຕະການສະກັດກັ້ນ ມີດັ່ງນີ້:

- ການພາຕົວ;
- ການກັກຕົວ;
- ການຈັບຕົວ;
- ການກັກຂັງພາງ;
- ການປ່ອຍຕົວພາງ;
- ການຄຸມຕົວຢູ່ກັບທີ່;
- ການງົດໜ້າທີ່ ຫຼືຕຳແໜ່ງ.

## ມາດຕາ 60 ການພາຕົວ

ໃນກໍລະນີທີ່ຜູ້ຖືກສົງໄສ, ຜູ້ຖືກຫາ, ພະຍານ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ ຫາກໄດ້ຮັບໝາຍຮຽກເຖິງສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາຕາມໝາຍຮຽກໂດຍບໍ່ມີເຫດຜົນພຽງພໍນັ້ນ ຫົວໜ້າອົງການສືບສວນ-ສອບສວນ ຫຼືໄອຍະການປະຊາຊົນ ຈະອອກຄໍາສັ່ງໃຫ້ພາຕົວຜູ້ກ່ຽວ.

## ມາດຕາ 61 ການກັກຕົວ

ເມື່ອໄດ້ເອົາຄໍາໃຫ້ການຂອງຜູ້ຖືກສົງໄສແລ້ວ ຖ້າເຫັນວ່າມີຂໍ້ມູນໜັກແໜ້ນສົມຄວນວ່າ ຜູ້ກ່ຽວໄດ້ກະທໍາຜິດທາງອາຍາທີ່ກົດໝາຍໄດ້ກໍານົດໂທດຕັດອິດສະລະພາບ, ຫົວໜ້າອົງການສືບສວນ-ສອບສວນ ຫຼືໄອຍະການປະຊາຊົນ ອາດຈະອອກຄໍາສັ່ງກັກຕົວຜູ້ກ່ຽວໄວ້ໄດ້ ສີ່ສິບແປດຊົ່ວໂມງ ເພື່ອດໍາເນີນການສືບສວນ-ສອບສວນຕໍ່ ແຕ່ຕ້ອງລາຍງານເປັນລາຍລັກອັກສອນໃຫ້ໄອຍະການປະຊາຊົນຊາບພາຍໃນກໍານົດ ຊາວສີ່ ຊົ່ວໂມງ ນັບແຕ່ວັນທີ່ໄດ້ກັກຕົວເປັນຕົ້ນໄປ.

ພາຍໃນກໍານົດ ສີ່ສິບແປດຊົ່ວໂມງນັ້ນ ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼືພະນັກງານສອບສວນຕ້ອງຮີບຮ້ອນເອົາຄໍາໃຫ້ການເບື້ອງຕົ້ນຂອງຜູ້ຖືກກັກຕົວ, ພາຍຫຼັງເອົາຄໍາໃຫ້ການແລ້ວ ກໍຕ້ອງລົງຄໍາເຫັນຊີ້ຂາດດັ່ງຕໍ່ໄປນີ້:

1. ຖ້າຫາກເຫັນວ່າບໍ່ມີຂໍ້ມູນໜັກແໜ້ນ ທີ່ພາໃຫ້ອອກຄໍາສັ່ງເປີດການສືບສວນ-ສອບສວນໄດ້ນັ້ນ ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼືພະນັກງານສອບສວນ ຕ້ອງຂໍຄໍາສັ່ງປ່ອຍຕົວຈາກຫົວໜ້າອົງການສືບສວນ-ສອບສວນ ຫຼືໄອຍະການປະຊາຊົນ. ແລ້ວປ່ອຍຕົວຜູ້ຖືກກັກຕົວ ພ້ອມທັງລາຍງານເປັນລາຍລັກອັກສອນໃຫ້ໄອຍະການປະຊາຊົນ ຊາບໃນທັນໃດ;
2. ຖ້າຫາກເຫັນວ່າມີຂໍ້ມູນໜັກແໜ້ນ ທີ່ພາໃຫ້ອອກຄໍາສັ່ງເປີດການສືບສວນ-ສອບສວນໄດ້ ແລະຖ້າຫາກເຫັນວ່າ ມີຄວາມຈໍາເປັນຕ້ອງທໍາການກັກຂັງພາງແລ້ວ ຫົວໜ້າອົງການສືບສວນ-ສອບສວນ ຕ້ອງອອກຄໍາສັ່ງເປີດການສືບສວນ-ສອບສວນ ແລະຂໍຄໍາສັ່ງກັກຂັງພາງຈາກໄອຍະການປະຊາຊົນ. ສໍາລັບພະນັກງານສອບສວນ ກໍຕ້ອງຂໍຄໍາສັ່ງເປີດການສືບສວນ-ສອບສວນ ແລະຄໍາສັ່ງກັກຂັງພາງຈາກໄອຍະການປະຊາຊົນເຊັ່ນດຽວກັນ.

ພາຍຫຼັງທີ່ໄດ້ຮັບຄໍາສະເໜີຂໍກັກຂັງພາງຂອງຫົວໜ້າອົງການສືບສວນ-ສອບສວນ ຫຼືພະນັກງານສອບສວນແລ້ວ ໄອຍະການປະຊາຊົນຕ້ອງລົງຄໍາເຫັນຊີ້ຂາດ ພາຍໃນກໍານົດ ຊາວສີ່ຊົ່ວໂມງ ວ່າຈະປ່ອຍຕົວ ຫຼືຈະກັກຂັງພາງ.

## ມາດຕາ 62 ການຈັບຕົວ

ການຈັບຕົວບຸກຄົນຜູ້ໃດຜູ້ໜຶ່ງ ຕ້ອງມີຄໍາສັ່ງເປັນລາຍລັກອັກສອນ ຂອງໄອຍະການປະຊາຊົນ ຫຼືສານປະຊາຊົນ ເວັ້ນເສຍແຕ່ໃນກໍລະນີການກະທໍາຜິດເຊິ່ງໜ້າ ຫຼືຮີບດ່ວນ.

ກ່ອນຈະອອກຄໍາສັ່ງຈັບຕົວນັ້ນ ໄອຍະການປະຊາຊົນ ຫຼືສານປະຊາຊົນ ຕ້ອງອີງໃສ່ເງື່ອນໄຂດັ່ງນີ້:

1. ການກະທຳຕ້ອງແມ່ນການກະທຳຜິດທາງອາຍາ ທີ່ກົດໝາຍໄດ້ກຳນົດໂທດຕັດອິດສະລະພາບ;
2. ຫຼັກຖານໃນຄະດີຕ້ອງໜັກແໜ້ນ.

ນອກຈາກນີ້ແລ້ວ ຍັງຕ້ອງອີງໃສ່ເງື່ອນໄຂໃດເງື່ອນໄຂໜຶ່ງອີກເຊັ່ນ: ຜູ້ຖືກສົງໄສ ອາດຈະເອົາຕົວຫຼົບໜີ, ທຳລາຍຫຼັກຖານ, ກະທຳຜິດໃໝ່, ທຳຮ້າຍຜູ້ຖືກເສຍຫາຍ, ພະຍານ ຫຼືຜູ້ຖືກສົງໄສ ອາດຈະຖືກທຳຮ້າຍຈາກຜູ້ຖືກເສຍຫາຍ ຫຼືຈາກບຸກຄົນອື່ນ.

ຖ້າຫາກຈະຈັບຕົວພິກຂຸ ຫຼືສາມະເນນ ຕ້ອງແຈ້ງໃຫ້ເຈົ້າອະທິການວັດ ຫລືຜູ້ຕາງໜ້າຊາບ ເພື່ອປົງສິກຂາບົດເສັຍກ່ອນ. ໃນກໍລະນີຈັບນັກບວດຂອງສາສະໜາອື່ນ ກໍຕ້ອງແຈ້ງໃຫ້ຫົວໜ້າຮັບຜິດຊອບຂອງອົງການສາສະໜານັ້ນຊາບ ແລ້ວຈຶ່ງຈັບຕົວ.

ການຈັບຕົວໃນກໍລະນີທຳມະດາ ກໍຕ້ອງແຈ້ງຄຳສັ່ງພ້ອມດ້ວຍສາເຫດຂອງການຈັບຕົວໃຫ້ຜູ້ຖືກຈັບຕົວຊາບ.

ໃນທຸກກໍລະນີທີ່ພາຍຫຼັງໄດ້ຈັບຕົວຜູ້ຖືກຫາແລ້ວ ເຈົ້າໜ້າທີ່ສືບສວນ-ສອບສວນ ຕ້ອງລາຍງານເປັນລາຍລັກອັກສອນໃຫ້ໄອຍະການປະຊາຊົນຊາບ ພາຍໃນກຳນົດ ຊາວສີ່ ຊົ່ວໂມງ. ການເອົາຄຳໃຫ້ການຂອງຜູ້ຖືກຈັບຕົວ ຕ້ອງດຳເນີນຢ່າງຊ້າພາຍໃນກຳນົດ ສີ່ສິບແປດ ຊົ່ວໂມງ ພ້ອມທັງລົງຄຳເຫັນວ່າ ຈະປ່ອຍຕົວ ຫຼືຈະກັກຂັງພາງ.

ໃນກໍລະນີທີ່ເຫັນວ່າ ຄວນປ່ອຍຕົວ ຫຼືຕ້ອງກັກຂັງພາງແລ້ວ ຫົວໜ້າອົງການສືບສວນ-ສອບສວນ ຫຼືພະນັກງານສອບສວນຕ້ອງຂໍຄຳສັ່ງປ່ອຍຕົວ ຫຼືກັກຂັງພາງຈາກໄອຍະການປະຊາຊົນ.

ພາຍຫຼັງທີ່ໄດ້ຮັບຄຳສະເໜີຂໍປ່ອຍຕົວ ຫຼືກັກຂັງພາງຂອງຫົວໜ້າອົງການສືບສວນ-ສອບສວນ ຫຼືພະນັກງານສອບສວນ ແລ້ວໄອຍະການປະຊາຊົນຕ້ອງລົງຄຳເຫັນຊີ້ຂາດ ພາຍໃນກຳນົດຊາວສີ່ ຊົ່ວໂມງ ວ່າຈະໃຫ້ປ່ອຍຕົວ ຫຼືຈະໃຫ້ກັກຂັງພາງ.

ໃນກໍລະນີທີ່ບໍ່ແມ່ນເຈົ້າໜ້າທີ່ສືບສວນ-ສອບສວນ ທຳການຈັບຕົວນັ້ນ ຕ້ອງນຳຜູ້ຖືກຈັບຕົວໄປມອບໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ ໃນທັນໃດ. ສຳລັບການຈັບຕົວຢູ່ໃນເຂດຫ່າງໄກສອກຫຼີກນັ້ນ ໃຫ້ນຳຕົວຜູ້ຖືກຈັບຕົວໄປມອບໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ ພາຍໃນກຳນົດເຈັດວັນ ນັບແຕ່ມື້ຈັບຕົວເປັນຕົ້ນໄປ.

ການຈັບຕົວຕ້ອງດຳເນີນໄປດ້ວຍວິທີ ແລະຮູບການອັນເໝາະສົມກັບລັກສະນະຂອງການກະທຳຜິດ ແລະຜູ້ຖືກຈັບຕົວ.

ຫ້າມທຸບຕີ ຫຼືທໍລະມານຜູ້ຖືກຈັບຕົວ.

ການຈັບຕົວ ບໍ່ວ່າຈະແມ່ນໃນກໍລະນີໃດກໍຕ້ອງແຈ້ງໃຫ້ຄອບຄົວ, ສຳນັກງານ, ອົງການ ຫຼືວິສາຫະກິດ ທີ່ຜູ້ກ່ຽວສັງກັດຢູ່ຊາບພາຍໃນກຳນົດ ຊາວສີ່ ຊົ່ວໂມງຢ່າງຊ້າ ແລະຕ້ອງແຈ້ງສະຖານທີ່ກັກຂັງພ້ອມ ຖ້າຫາກເຫັນວ່າບໍ່ເປັນອຸບປະສັກໃນການດຳເນີນຄະດີ.

### ມາດຕາ 63 ການຈັບຕົວໃນກໍລະນີການກະທຳຜິດເຊິ່ງໜ້າ ແລະໃນກໍລະນີຮີບດ່ວນ

ການກະທຳຜິດເຊິ່ງໜ້າ ແມ່ນການກະທຳຜິດຂອງບຸກຄົນ ໃນກໍລະນີດັ່ງນີ້:

1. ບຸກຄົນທີ່ພວມກະທຳຜິດຢູ່ ຫຼືຫາກໍສິ້ນສຸດການກະທຳຜິດ;
2. ບຸກຄົນຜູ້ທີ່ໄດ້ກະທຳຜິດທີ່ພວມຖືກໄລ່ຕິດຕາມໄປ ຫຼືມີບຸກຄົນຊຶ່ງຜູ້ເຫັນເຫດການ ຫຼືຜູ້ຖືກເສຍຫາຍ ໄດ້ຊີ້ຕົວວ່າເປັນຜູ້ກະທຳຜິດ;
3. ບຸກຄົນທີ່ມີຮ່ອງຮອຍຂອງການກະທຳຜິດຢູ່ໃນຕົນຕົວ, ຢູ່ໃນເຮືອນ ຫຼືບ່ອນເຮັດວຽກຂອງຜູ້ກ່ຽວ ໃນໄລຍະເວລາຊຶ່ງການກະທຳຜິດນັ້ນຫາກໍໄດ້ເກີດຂຶ້ນ.

ການກະທຳຜິດໃນກໍລະນີຮີບດ່ວນ ແມ່ນການກະທຳຜິດຂອງບຸກຄົນ ໃນກໍລະນີດັ່ງນີ້:

1. ບຸກຄົນທີ່ຖືກສົງໄສວ່າໄດ້ກະທຳຜິດ ຊຶ່ງມີປະຫວັດບໍ່ດີ ຫຼືບ່ອນຢູ່ບໍ່ແນ່ນອນ;
2. ບຸກຄົນທີ່ຖືກສົງໄສວ່າໄດ້ກະທຳຜິດ ຊຶ່ງພວມຈະເອົາຕົວຫຼົບໜີ.

ການຈັບຕົວໃນກໍລະນີການກະທຳຜິດເຊິ່ງໜ້າ ແລະໃນກໍລະນີຮີບດ່ວນບໍ່ຈຳເປັນຕ້ອງມີຄຳສັ່ງຂອງໄອຍະການປະຊາຊົນ ຫຼືສານປະຊາຊົນ ກໍໄດ້.

## ມາດຕາ 64 ບົດບັນທຶກການຈັບຕົວ

ໃນກໍລະນີໃດກໍຕາມ ການຈັບຕົວຕ້ອງເຮັດບົດບັນທຶກໄວ້ເປັນຫຼັກຖານ.

ໃນບົດບັນທຶກການຈັບຕົວນັ້ນ ຕ້ອງບອກຊື່, ນາມສະກຸນ, ຊັ້ນ, ຕຳແໜ່ງ, ໜ້າທີ່ ແລະບ່ອນປະຈຳການຂອງເຈົ້າໜ້າທີ່ສືບສວນ-ສອບສວນ ພ້ອມທັງຊື່, ນາມສະກຸນ, ອາຍຸ, ອາຊີບ, ຊັ້ນ, ຕຳແໜ່ງ, ໜ້າທີ່ ແລະບ່ອນຢູ່ຂອງຜູ້ຖືກຈັບຕົວ, ວັນ, ເວລາ ແລະສະຖານທີ່ຈັບຕົວ, ຂໍ້ກ່າວຫາ, ສາເຫດ ແລະຂໍ້ມູນຫຼັກຖານທີ່ພາໃຫ້ຈັບຕົວ.

ໃນບົດບັນທຶກການຈັບຕົວ ຕ້ອງບອກແຈ້ງຊື່, ຈຳນວນ, ປະເພດ, ນ້ຳໜັກ, ຄຸນນະພາບ, ຕຳນິ ແລະຮູບປະພັນອື່ນໆຂອງວັດຖຸສິ່ງຂອງທີ່ຖືກຍຶດເປັນຂອງກາງ ແລະວັດຖຸສິ່ງຂອງທີ່ເປັນຂອງຕິດຕົວຂອງຜູ້ຖືກຈັບຕົວ.

ວັດຖຸສິ່ງຂອງທີ່ເປັນຂອງຕິດຕົວຂອງຜູ້ຖືກຈັບຕົວ ທີ່ຖືກຕ້ອງຕາມກົດໝາຍນັ້ນ ຕ້ອງມອບໃຫ້ຄອບຄົວຂອງຜູ້ກ່ຽວຄືນຢ່າງຄົບຖ້ວນ ແລະຢູ່ໃນສະພາບເດີມ ພ້ອມທັງເຮັດບົດບັນທຶກມອບຮັບຢ່າງຄັກແນ່ ໂດຍຊ້ອງໜ້າຜູ້ຖືກຈັບຕົວນັ້ນ. ໃນກໍລະນີທີ່ວັດຖຸສິ່ງຂອງທີ່ເປັນຂອງຕິດຕົວຂອງຜູ້ຖືກຈັບຕົວ ຫາກບໍ່ຄົບຖ້ວນ ຫຼືບໍ່ຢູ່ໃນສະພາບເດີມນັ້ນ ເຈົ້າໜ້າທີ່ຜູ້ປົກປັກຮັກສາວັດຖຸສິ່ງຂອງນັ້ນຈະໄດ້ຮັບຜິດຊອບທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 112 ແລະ 113 ຂອງກົດໝາຍອາຍາ.

## ມາດຕາ 65 ການກັກຂັງພາງ

ການກັກຂັງພາງ ແມ່ນການກັກຂັງຊົ່ວຄາວກ່ອນຄຳຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດ ເພື່ອດຳເນີນການສືບສວນ-ສອບສວນ.

ການກັກຂັງພາງ ຕ້ອງມີຄຳສັ່ງເປັນລາຍລັກອັກສອນຂອງໄອຍະການປະຊາຊົນ ແລະຕ້ອງອີງໃສ່ເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 62 ຂອງກົດໝາຍສະບັບນີ້.

ຜູ້ຖືກກັກຂັງພາງ ຕ້ອງນຳໄປກັກຂັງແຍກຕ່າງຫາກຈາກນັກໂທດ ແລະຕ້ອງຢູ່ໃນເງື່ອນໄຂທີ່ເໝາະສົມເພາະຍັງຖືວ່າເປັນຜູ້ບໍລິສຸດຢູ່.

ກຳນົດເວລາການກັກຂັງພາງບໍ່ໃຫ້ເກີນສາມເດືອນ ນັບແຕ່ມື້ອອກຄຳສັ່ງກັກຂັງພາງເປັນຕົ້ນໄປ. ຖ້າຫາກເຫັນວ່າ ມີຄວາມຈຳເປັນຕ້ອງໄດ້ສືບສວນ-ສອບສວນຕໍ່ ໄອຍະການປະຊາຊົນອາດຈະຕໍ່ກຳນົດເວລາການກັກຂັງພາງໃຫ້ຕື່ມອີກໄດ້ ເທື່ອລະສາມເດືອນຕາມຄຳຮ້ອງຂໍຂອງທີ່ວໜ້າອົງການສືບສວນ-ສອບສວນ ແຕ່ກຳນົດເວລາການກັກຂັງພາງທັງໝົດນັ້ນ ບໍ່ໃຫ້ເກີນຫົກເດືອນສຳລັບການກະທຳຜິດໃນສະຖານໂທສານຸໂທດ ແລະບໍ່ໃຫ້ເກີນໜຶ່ງປີ ສຳລັບການກະທຳຜິດໃນສະຖານຄະຣຸໂທດ. ຖ້າກາຍກຳນົດເວລາດັ່ງກ່າວ ຫາກຍັງບໍ່ທັນມີຫລັກຖານພຽງພໍ ເພື່ອສັ່ງຟ້ອງຂຶ້ນສານປະຊາຊົນແລ້ວ ໄອຍະການປະຊາຊົນຕ້ອງອອກຄຳສັ່ງປ່ອຍຕົວຜູ້ຖືກຫາໃນທັນໃດ ພ້ອມທັງສິ່ງສິ່ງຂອງຕິດຕົວທີ່ຖືກຕ້ອງຕາມກົດໝາຍຂອງຜູ້ກ່ຽວຄືນຢ່າງຄົບຖ້ວນ ແລະຢູ່ໃນສະພາບເດີມ ໂດຍເຮັດບົດບັນທຶກມອບຮັບຢ່າງຄັກແນ່.

ກຳນົດເວລາການກັກຂັງພາງ ແມ່ນໃຫ້ນັບເຂົ້າໃນກຳນົດເວລາການປະຕິບັດໂທດ.

## ມາດຕາ 66 ການປ່ອຍຕົວພາງ

ການປ່ອຍຕົວພາງ ແມ່ນການປ່ອຍຕົວຊົ່ວຄາວ ກ່ອນຄຳຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດ ອອກຈາກການກັກຂັງພາງ ກ່ຽວກັບການກະທຳຜິດທີ່ມີລັກສະນະເບົາ ພາຍຫຼັງທີ່ການສືບສວນ-ສອບສວນໄດ້ສຳເລັດແລ້ວ ເພື່ອຕໍ່ສູ້ຄະດີຢູ່ຂ້າງນອກ.

ການປ່ອຍຕົວພາງ ຕ້ອງມີຄຳສັ່ງເປັນລາຍລັກອັກສອນຂອງໄອຍະການປະຊາຊົນ.

ໃນເວລາດຳເນີນຄະດີໄອຍະການປະຊາຊົນ ອາດຈະຕົກລົງປ່ອຍຕົວພາງໂດຍໜ້າທີ່ ຫຼືປ່ອຍຕາມຄຳຮ້ອງຂໍຂອງຜູ້ຖືກຫາ, ອົງການຈັດຕັ້ງທີ່ຜູ້ກ່ຽວສັງກັດຢູ່, ຜູ້ຕາງໜ້າ, ຜົວ ຫຼືເມຍ, ຜູ້ປົກຄອງ, ພໍ່ ຫຼືແມ່ ຫຼືຍາດຕິພີ່ນ້ອງທີ່ໃກ້ຊິດຂອງຜູ້ຖືກຫາກໍໄດ້.

ການປ່ອຍຕົວພາງ ຕ້ອງອີງໃສ່ເງື່ອນໄຂດັ່ງນີ້:

ຖ້າຫາກເຫັນວ່າ ຜູ້ຖືກຫາ ຫລືຈຳເລີຍ ຈະບໍ່ເອົາຕົວຫລົບໜີ, ຈະບໍ່ທຳລາຍຫລັກຖານ, ຈະບໍ່ໄປກະທຳຜິດໃໝ່ອີກ, ຈະບໍ່ໄປທຳຮ້າຍຜູ້ຖືກເສັຍຫາຍ, ພະຍານ ຫລືຜູ້ຖືກຫາຈະບໍ່ຖືກທຳຮ້າຍຈາກຜູ້ອື່ນ.

ໃນການປ່ອຍຕົວພາງຕາມຄຳຮ້ອງຂໍຂອງຜູ້ຖືກຫາ, ອົງການຈັດຕັ້ງທີ່ຜູ້ກ່ຽວສັງກັດຢູ່, ຜູ້ຕາງໜ້າ, ຜົວ ຫຼືເມຍ, ຜູ້ປົກຄອງ, ພໍ່ ຫຼືແມ່ ຫຼືຍາດຕິພີ່ນ້ອງທີ່ໃກ້ຊິດຂອງຜູ້ຖືກຫານັ້ນ ອາດຈະໃຫ້ວາງຫຼັກຊັບປະກັນຢ່າງເໝາະສົມກໍໄດ້.

ຜູ້ທີ່ຖືກປ່ອຍຕົວພາງ ຕ້ອງເຂົ້າມາສະເໜີຕົວຕໍ່ເຈົ້າໜ້າທີ່ກ່ຽວຂ້ອງຕາມວັນເວລາທີ່ໄດ້ກຳນົດໃຫ້ຢ່າງໜ້ອຍໜຶ່ງເດືອນຕໍ່ເທື່ອ.

ຫ້າມປ່ອຍຕົວພາງ ສຳລັບການກະທຳຜິດໃນສະຖານຄະຣຸໂທດ.

## ມາດຕາ 67 ການຄຸມຕົວຢູ່ກັບທີ່

ຜູ້ຖືກສົງໄສ ຫຼືຜູ້ຖືກຫາ ອາດຈະຖືກຄຸມຕົວຢູ່ກັບທີ່ໂດຍບໍ່ໃຫ້ຜູ້ກ່ຽວອອກຈາກບ່ອນຢູ່ ຫຼື ສະຖານທີ່ໃດໜຶ່ງ ໂດຍບໍ່ໄດ້ຮັບອະນຸຍາດຈາກຫົວໜ້າອົງການສືບສວນ-ສອບສວນ ຫຼືໄອຍະການປະຊາຊົນ.

ການຄຸມຕົວຢູ່ກັບທີ່ ຕ້ອງມີຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ ຫຼືໄອຍະການປະຊາຊົນ ໂດຍວາງເງື່ອນໄຂໃນການປະຕິບັດໃຫ້ແກ່ຜູ້ຖືກຄຸມຕົວຢູ່ກັບທີ່.

ໃນກໍລະນີທີ່ຜູ້ຖືກສົງໄສ ຫຼືຜູ້ຖືກຫາ ຫາກໄດ້ລະເມີດລະບຽບຂອງການຄຸມຕົວຢູ່ກັບທີ່ແລ້ວ ອາດຈະນຳໃຊ້ມາດຕະການສະກັດກັ້ນອື່ນ ທີ່ໜັກກວ່າເກົ່າໃສ່ຜູ້ກ່ຽວກໍໄດ້.

## ມາດຕາ 68 ການງົດຕຳແໜ່ງ ຫຼືໜ້າທີ່

ການງົດຕຳແໜ່ງ ຫຼືໜ້າທີ່ ແມ່ນການໂຈະຕຳແໜ່ງ ຫຼືໜ້າທີ່ຂອງຜູ້ຖືກສົງໄສ ຫຼືຜູ້ຖືກຫາ ຍ້ອນວ່າການກະທຳຜິດນັ້ນພົວພັນເຖິງຕຳແໜ່ງ ຫຼືໜ້າທີ່ຂອງຜູ້ກ່ຽວ ເພື່ອບໍ່ໃຫ້ເປັນອຸປະສັກໃນການສືບສວນ-ສອບສວນ.

ການງົດຕຳແໜ່ງ ຫຼືໜ້າທີ່ ຕ້ອງມີຄຳສັ່ງເປັນລາຍລັກອັກສອນຂອງໄອຍະການປະຊາຊົນ.

ຄຳສັ່ງງົດຕຳແໜ່ງ ຫລືໜ້າທີ່ນັ້ນ ຕ້ອງສົ່ງໃຫ້ອົງການຈັດຕັ້ງທີ່ຜູ້ຖືກສົງໄສ ຫລືຜູ້ຖືກຫາສັງກັດ ເພື່ອດຳເນີນການງົດຕຳແໜ່ງ ຫລືໜ້າທີ່.

# ໝວດທີ 5 ການໂຈະການດຳເນີນຄະດີ ແລະການຊັດມ້ຽນຄະດີ

## ມາດຕາ 69 ການໂຈະການດຳເນີນຄະດີ

ການໂຈະການດຳເນີນຄະດີ ແມ່ນການຢຸດເຊົາການດຳເນີນຄະດີໄວ້ຊົ່ວຄາວ ດ້ວຍສາເຫດດັ່ງຕໍ່ໄປນີ້:

1. ຜູ້ຖືກຫາໄດ້ລີ້ຊ່ອນ, ຫຼົບຫຼີກ ຈາກການດຳເນີນຄະດີ ຫຼືບໍ່ຮູ້ບ່ອນຢູ່ຂອງຜູ້ກ່ຽວ ຫລືຫລັກຖານ ໃນຄະດີຍັງບໍ່ທັນໜັກແໜ້ນ;
2. ບໍ່ສາມາດຮູ້ໄດ້ວ່າ ແມ່ນຜູ້ໃດເປັນຜູ້ກະທຳຜິດໃນຄະດີ.
3. ຜູ້ຖືກຫາເຈັບປ່ວຍໜັກ ຫຼືເປັນບ້າເສັຍຈິດ ໂດຍມີການຢັ້ງຢືນຈາກຄະນະແພດ;

ການໂຈະການດຳເນີນຄະດີໃນກໍລະນີທີ 1 ແລະ 2 ຈະມີໄດ້ ກໍຕໍ່ເມື່ອກຳນົດເວລາການດຳເນີນການສືບສວນ-ສອບສວນ ຫາກໄດ້ສິ້ນສຸດແລ້ວ.

ການໂຈະການດຳເນີນຄະດີໄວ້ນັ້ນ ຕ້ອງມີຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ ຫຼືໄອຍະການປະຊາຊົນ. ຄຳສັ່ງໂຈະການດຳເນີນຄະດີຂອງຫົວໜ້າອົງການສືບສວນ-ສອບສວນນັ້ນ ຕ້ອງໃຫ້ອັດສຳເນົາ ແລ້ວສົ່ງລາຍງານໃຫ້ໄອຍະການປະຊາຊົນ ຊາບໃນທັນໃດ.

ການໂຈະການດຳເນີນຄະດີ ໃນກໍລະນີທີ 3 ນັ້ນ ຫົວໜ້າອົງການສືບສວນ-ສອບສວນ ຫລືໄອຍະການປະຊາຊົນ ຕ້ອງອອກຄຳສັ່ງສົ່ງຕົວຜູ້ຖືກຫາໄປປິ່ນປົວ.

ຄະດີອາຍາທີ່ໄດ້ໂຈະໄວ້ນັ້ນ ກໍຈະຖືກຊັດມ້ຽນ ເມື່ອຫາກໝົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາ.

ຄຳສັ່ງໂຈະ ແລະຄຳສັ່ງຊັດມ້ຽນຄະດີ ຕ້ອງແຈ້ງໃຫ້ຄູ່ຄວາມຊາບ ຊຶ່ງຜູ້ຖືກເສັຍຫາຍ ຫຼືໂຈດທາງແພ່ງມີສິດຂໍອຸທອນພາຍໃນກຳນົດ ເຈັດວັນ ນັບແຕ່ມື້ຮັບຊາບຄຳສັ່ງນັ້ນເປັນຕົ້ນໄປ.

### ມາດຕາ 70 ການສືບຕໍ່ດຳເນີນຄະດີທີ່ຖືກໂຈະໄວ້ນັ້ນຄືນໃໝ່

ເມື່ອສາເຫດຂອງການໂຈະການດຳເນີນຄະດີຫາກຕົກໄປ ແລະອາຍຸຄວາມໃນການຮ້ອງຟ້ອງຍັງບໍ່ທັນສິ້ນສຸດ ຫົວໜ້າອົງການສືບສວນ-ສອບສວນ ຫຼືໄອຍະການປະຊາຊົນ ຕ້ອງອອກຄຳສັ່ງສືບຕໍ່ດຳເນີນຄະດີທີ່ຖືກໂຈະໄວ້ນັ້ນຄືນໃໝ່.

### ມາດຕາ 71 ການຊັດມ້ຽນຄະດີ

ການຊັດມ້ຽນຄະດີ ແມ່ນການຢຸດເຊົາການດຳເນີນຄະດີ ດ້ວຍສາເຫດດັ່ງນີ້:

1. ເມື່ອມີສາເຫດໃດໜຶ່ງທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງກົດໝາຍສະບັບນີ້;
2. ເມື່ອບໍ່ມີຫຼັກຖານພຽງພໍວ່າ ຜູ້ຖືກຫາໄດ້ເປັນຜູ້ກະທຳຜິດ.

ໃນກໍລະນີທີ່ມີການຊັດມ້ຽນຄະດີ ໄອຍະການປະຊາຊົນຕ້ອງອອກຄຳສັ່ງປ່ອຍຕົວຜູ້ຖືກຫາໃນທັນໃດ. ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ ຫຼືໄອຍະການປະຊາຊົນຕ້ອງສົ່ງສິ່ງຂອງຕິດຕົວທີ່ຖືກຕ້ອງຕາມກົດໝາຍ ລວມທັງວັດຖຸສິ່ງຂອງທີ່ໄດ້ຍຶດເປັນຂອງກາງ ຊຶ່ງເປັນກຳມະສິດຂອງຜູ້ກ່ຽວຄືນໃນທັນໃດ.

ການຊັດມ້ຽນຄະດີມີ 2 ປະເພດຄື:

- ການຊັດມ້ຽນຄະດີທາງດ້ານກົດໝາຍ.
- ການຊັດມ້ຽນຄະດີທາງດ້ານຫຼັກຖານ.

ການຊັດມ້ຽນຄະດີທາງດ້ານກົດໝາຍ ແມ່ນການຊັດມ້ຽນຄະດີຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້;

ການຊັດມ້ຽນຄະດີທາງດ້ານຫຼັກຖານ ແມ່ນການຊັດມ້ຽນຄະດີຕາມທີ່ໄດ້ກຳນົດໄວ້ໃນຂໍ້ 2 ຂອງມາດຕານີ້.

### ມາດຕາ 72 ການສືບຕໍ່ດຳເນີນຄະດີທີ່ຖືກຊັດມ້ຽນຄືນໃໝ່

ການຊັດມ້ຽນຄະດີທາງດ້ານກົດໝາຍ ແມ່ນບໍ່ສາມາດສືບຕໍ່ດຳເນີນຄະດີຄືນໃໝ່ໄດ້.

ການຊັດມ້ຽນຄະດີທາງດ້ານຫຼັກຖານ ແມ່ນສາມາດສືບຕໍ່ດຳເນີນຄະດີຄືນໃໝ່ໄດ້.

ການສືບຕໍ່ດຳເນີນຄະດີທີ່ຖືກຊັດມ້ຽນນັ້ນ ຈະດຳເນີນໄດ້ ກໍຕໍ່ເມື່ອຫາກມີຫຼັກຖານໃໝ່ ແລະອາຍຸຄວາມໃນການຮ້ອງຟ້ອງທາງອາຍາ ຍັງບໍ່ທັນໄດ້ສິ້ນສຸດເທື່ອ.

ໃນການສືບຕໍ່ດຳເນີນຄະດີທີ່ຖືກຊັດມ້ຽນຄືນໃໝ່ນັ້ນ ໄອຍະການປະຊາຊົນຕ້ອງອອກຄຳສັ່ງລົບລ້າງຄຳສັ່ງຊັດມ້ຽນຄະດີ ແລ້ວສັ່ງໃຫ້ສືບຕໍ່ດຳເນີນຄະດີນັ້ນ.

## ໝວດທີ 6 ສິດ ແລະໜ້າທີ່ຂອງໄອຍະການປະຊາຊົນໃນການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ

### ມາດຕາ 73 ສິດ ແລະໜ້າທີ່ຂອງໄອຍະການປະຊາຊົນ

ໃນການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນໄອຍະການປະຊາຊົນມີສິດ ແລະໜ້າທີ່ດັ່ງນີ້:

1. ຮ້ອງຟ້ອງ, ເປີດການສືບສວນ-ສອບສວນ ແລະສັ່ງຟ້ອງຜູ້ກະທຳຜິດ, ນຳໃຊ້ມາດຕະການ ເພື່ອບໍ່ໃຫ້ຜູ້ກະທຳຜິດຫລຸດພົ້ນອອກຈາກການດຳເນີນຄະດີ;
2. ຕິດຕາມກວດກາການເຄົາລົບລະບຽບການດຳເນີນການສືບສວນ-ສອບສວນ;
3. ຕິດຕາມກວດກາ ເພື່ອບໍ່ໃຫ້ບຸກຄົນໃດໜຶ່ງໄດ້ຖືກກັກຕົວ, ຈັບຕົວ ຫລືກັກຂັງໂດຍບໍ່ຖືກຕ້ອງຕາມກົດໝາຍ;
4. ຕິດຕາມກວດກາຢ່າງເຂັ້ມງວດ ເພື່ອບໍ່ໃຫ້ຜູ້ບໍ່ໄດ້ກະທຳຜິດຖືກລົງໂທດ;
5. ທວງເອົາສຳນວນຄະດີອາຍາ, ເອກະສານ ແລະຂໍ້ມູນຕ່າງໆ ກ່ຽວກັບການກະທຳຜິດຈາກອົງການສືບສວນ-ສອບສວນ ເພື່ອທຳການກວດກາ;
6. ເຂົ້າຮ່ວມການສືບສວນ-ສອບສວນຄະດີອາຍາ ແລະໃນກໍລະນີທີ່ຈຳເປັນຈະດຳເນີນການສືບສວນ-ສອບສວນດ້ວຍຕົນເອງກໍໄດ້;
7. ລົບລ້າງຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຫລືບໍ່ມີເຫດຜົນ;
8. ໃຫ້ການແນະນຳເປັນລາຍລັກອັກສອນ ກ່ຽວກັບການສືບສວນ-ສອບສວນຄະດີອາຍາ, ການຊອກຫາຜູ້ກະທຳຜິດ, ການຕີຄວາມໝາຍຂອງການກະທຳຜິດ, ການນຳໃຊ້ມາດຕະການ ສືບສວນ-ສອບສວນ ແລະມາດຕະການສະກັດກັ້ນ;
9. ອອກຄຳສັ່ງພາຕົວ, ຈັບຕົວ, ກັກຂັງ, ກວດຄົ້ນເຄຫະສະຖານ ແລະອອກຄຳສັ່ງປ່ອຍຕົວພາງ;
10. ຕໍ່ກຳນົດເວລາການສືບສວນ-ສອບສວນ ແລະກຳນົດເວລາການກັກຂັງພາງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;
11. ສົ່ງສຳນວນຄະດີຄືນໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ ຫລືພະນັກງານສອບສວນ ພ້ອມດ້ວຍຄຳແນະນຳກ່ຽວ ກັບການສືບສວນ-ສອບສວນເພີ່ມເຕີມ;
12. ສັ່ງໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ ຫລືພະນັກງານສອບສວນ ທີ່ໄດ້ລະເມີດກົດໝາຍໃນເວລາດຳເນີນຄະດີຢຸດເຊົາການສືບສວນ-ສອບສວນ ພ້ອມທັງດຳເນີນຄະດີ ຖ້າຫາກເຫັນວ່າການລະເມີດນັ້ນ ເປັນການກະທຳຜິດທາງອາຍາ;
13. ໂຈະການດຳເນີນຄະດີ ຫລືຊຶດມ້ຽນຄະດີ ຕາມສາເຫດທີ່ໄດ້ກຳນົດໄວ້ໃນມາດຕາ 69 ແລະ 71 ຂອງກົດໝາຍສະບັບນີ້;
14. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 74 ຄວາມເຫັນຂອງໄອຍະການປະຊາຊົນ

ໄອຍະການປະຊາຊົນຕ້ອງຄົ້ນຄ້ວາຄະດີ ທີ່ໄດ້ຮັບຈາກອົງການສືບສວນ-ສອບສວນ ຫລືຈາກພະນັກງານສອບສວນນັ້ນ ຢ່າງຊ້າບໍ່ໃຫ້ເກີນ ສິບຫ້າ ວັນ ນັບແຕ່ມື້ໄດ້ຮັບສຳນວນຄະດີເປັນຕົ້ນໄປ ແລ້ວຕ້ອງອອກຄຳສັ່ງໃດໜຶ່ງດັ່ງຕໍ່ໄປນີ້:

1. ຖ້າເຫັນວ່າ ການສືບສວນ-ສອບສວນຄະດີຫາກຍັງບໍ່ທັນຄົບຖ້ວນນັ້ນ ໄອຍະການປະຊາຊົນຕ້ອງສົ່ງສຳນວນຄະດີຄືນໃຫ້ອົງການສືບສວນ-ສອບສວນ ຫລື

ພະນັກງານສອບສວນ ພ້ອມດ້ວຍຄຳແນະນຳເປັນລາຍລັກອັກສອນ ກ່ຽວກັບການສືບສວນ-ສອບສວນ ເພີ່ມເຕີມ;

2. ຖ້າຫາກເຫັນວ່າ ມີສາເຫດກ່ຽວກັບການໂຈະການດຳເນີນຄະດີຕາມທີ່ໄດ້ກຳນົດໄວ້ໃນມາດຕາ 69 ຂອງກົດໝາຍສະບັບນີ້ແລ້ວ ໄອຍະການປະຊາຊົນອອກຄຳສັ່ງໂຈະການດຳເນີນຄະດີ;
3. ຖ້າຫາກເຫັນວ່າມີສາເຫດທີ່ພາໃຫ້ຊັດມ້ຽນຄະດີ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 71 ຂອງກົດໝາຍສະບັບນີ້ແລ້ວ ໄອຍະການປະຊາຊົນຈະອອກຄຳສັ່ງຊັດມ້ຽນຄະດີ;
4. ຖ້າເຫັນວ່າມາດຕະການສືບສວນ-ສອບສວນ ຫລືມາດຕະການສະກັດກັ້ນ ຊຶ່ງເຈົ້າໜ້າທີ່ສືບສວນ-ສອບສວນ ຫລືພະນັກງານສອບສວນໄດ້ນຳໃຊ້ນັ້ນຫາກຍັງບໍ່ທັນສອດຄ່ອງກັບສະພາບຂອງຄະດີແລ້ວ ໄອຍະການປະຊາຊົນມີສິດປ່ຽນແປງ, ຍົກເລີກ ຫລືລຶບລ້າງມາດຕະການດັ່ງກ່າວ;
5. ຖ້າເຫັນວ່າ ມີຂໍ້ມູນຫລັກຖານພຽງພໍແລ້ວ ໄອຍະການປະຊາຊົນຈະອອກຄຳສັ່ງຟ້ອງຜູ້ຖືກຫາຂຶ້ນສານ.

## ພາກທີ V ການດຳເນີນຄະດີຢູ່ສານຂັ້ນຕົ້ນ

### ມາດຕາ 75 ການຮັບເອົາຄະດີມາພິຈາລະນາ

ສານຈະຮັບເອົາຄະດີອາຍາມາພິຈາລະນາໄດ້ ກໍຕໍ່ເມື່ອຫາກມີຄຳສັ່ງຟ້ອງຂຶ້ນສານຂອງໄອຍະການປະຊາຊົນເທົ່ານັ້ນ. ສານຕ້ອງພິຈາລະນາຄະດີດັ່ງກ່າວພາຍໃນກຳນົດ ໜຶ່ງເດືອນ ນັບແຕ່ວັນໄດ້ຮັບຄຳສັ່ງຟ້ອງຈາກໄອຍະການປະຊາຊົນເປັນຕົ້ນໄປ.

ສຳລັບຄະດີທີ່ສັ່ງຟ້ອງຂຶ້ນສານໂດຍກົງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 40 ຂອງກົດໝາຍສະບັບນີ້ ແລະຄະດີກ່ຽວກັບການກະທຳຜິດເບົານັ້ນ ສານຕ້ອງໄດ້ພິຈາລະນາຕັດສີນ ພາຍໃນກຳນົດ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳສັ່ງຟ້ອງຈາກໄອຍະການປະຊາຊົນເປັນຕົ້ນໄປ.

### ມາດຕາ 76 ການຄົ້ນຄວ້າຄະດີຂອງສານ

ພາຍຫລັງທີ່ໄດ້ຮັບສຳນວນຄະດີຈາກໄອຍະການປະຊາຊົນແລ້ວ ປະທານສານຈະມອບໃຫ້ຜູ້ພິພາກສາຜູ້ໃດຜູ້ໜຶ່ງຄົ້ນຄວ້າ ແລ້ວນຳສະເໜີຕໍ່ປະທານສານ ເພື່ອພິຈາລະນາຕາມແຕ່ລະກໍລະນີດັ່ງນີ້:

1. ສົ່ງສຳນວນຄະດີຄືນໃຫ້ໄອຍະການປະຊາຊົນ ເພື່ອທຳການສືບສວນ-ສອບສວນເພີ່ມເຕີມ ຖ້າເຫັນວ່າການສືບສວນ-ສອບສວນ ຫາກຍັງບໍ່ທັນຄົບຖ້ວນ;
2. ສົ່ງສຳນວນຄະດີຄືນໃຫ້ໄອຍະການປະຊາຊົນ ເພື່ອສັ່ງຟ້ອງເພີ່ມເຕີມ ຖ້າເຫັນວ່າຍັງມີການກະທຳຜິດອື່ນ ຫລືບຸກຄົນອື່ນທີ່ຍັງບໍ່ທັນໄດ້ຖືກສັ່ງຟ້ອງຂຶ້ນສານ;

3. ຕົກລົງເວລາ ແລະນຳເອົາຄະດີອອກພິຈາລະນາໃນທີ່ປະຊຸມສານ ຖ້າເຫັນວ່າການສືບສວນ-ສອບສວນ ຫາກໄດ້ດຳເນີນໄປຢ່າງຖືກຕ້ອງ ແລະຄົບຖ້ວນແລ້ວ.

### ມາດຕາ 77 ມາດຕະການຂອງສານ

ໃນການດຳເນີນຄະດີຢູ່ສານ ສານມີສິດນຳໃຊ້ມາດຕະການສືບສວນ-ສອບສວນ ແລະມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຫາມາດຕາ 68 ຂອງກົດໝາຍສະບັບນີ້.

### ມາດຕາ 78 ການໄຕ່ສວນຄະດີ ໃນທີ່ປະຊຸມສານຂັ້ນຕົ້ນ

ການໄຕ່ສວນຄະດີ ໃນທີ່ປະຊຸມສານຂັ້ນຕົ້ນຕ້ອງເຮັດໂດຍກົງ, ທາງປາກເປົ່າ, ຢ່າງເປີດເຜີຍ ຫລືປິດລັບ ໃນບາງກໍລະນີ, ມີການໂຕ້ແຍ່ງ, ເຮັດຢ່າງຕໍ່ເນື່ອງກັນ ແລະໂດຍບໍ່ມີການສັບປ່ຽນຄະນະສານ.

ປະທານຄະນະສານມີໜ້າທີ່ນຳພາການໄຕ່ສວນຄະດີຢ່າງເປັນກາງໃນທີ່ປະຊຸມສານ.

ພາຍຫລັງທີ່ໄດ້ປະກາດເປີດປະຊຸມສານແລ້ວ ປະທານຄະນະສານຕ້ອງແຈ້ງລາຍຊື່ຄະນະສານ, ໄອຍະການປະຊາຊົນ, ຈ່າສານ, ຄະດີທີ່ຈະນຳອອກພິຈາລະນາ, ສິດໃນການຄ້ານຕົວຄະນະສານ ຫລືບຸກຄົນໃດບຸກຄົນໜຶ່ງໃນຄະນະສານ, ໄອຍະການປະຊາຊົນ, ຈ່າສານ, ຜູ້ຊ່ຽວຊານ ແລະຜູ້ແປພາສາ ແລ້ວແຈ້ງບັນດາສິດດັ່ງກ່າວໃຫ້ຄູ່ຄວາມ ແລະຜູ້ເຂົ້າຮ່ວມໃນການດຳເນີນຄະດີຊາບ. ຖ້າຫາກມີການປ່ຽນແປງຄະນະສານ ຍ້ອນການຄ້ານຕົວນັ້ນ ຄະນະສານກໍຕ້ອງປິດການປະຊຸມສານໄວ້ຊົ່ວຄາວ ເພື່ອພິຈາລະນາຕົກລົງກ່ຽວກັບບັນຫານີ້.

ຫລັງຈາກນັ້ນ ປະທານຄະນະສານ ກໍຖາມຊີວະປະຫວັດຂອງຈຳເລີຍ, ແຈ້ງຄຳສັ່ງຟ້ອງຂອງໄອຍະການປະຊາຊົນ ແລະຂໍ້ກ່າວຫາໃຫ້ຜູ້ກ່ຽວຊາບ.

ຕໍ່ຈາກນັ້ນ ຄະນະສານຈະຟັງຄຳໃຫ້ການຂອງຜູ້ຖືກເສັຍຫາຍ ຫລືໂຈດທາງແພ່ງ, ຈຳເລີຍ, ຜູ້ຮັບຜິດຊອບທາງແພ່ງ, ທະນາຍຄວາມ, ພະຍານ ແລະຜູ້ເຂົ້າຮ່ວມອື່ນໆ ໃນການດຳເນີນຄະດີ.

ໃນເວລາໄຕ່ສວນຄະດີນັ້ນ ຄູ່ຄວາມ ແລະຜູ້ເຂົ້າຮ່ວມອື່ນໆໃນການດຳເນີນຄະດີ, ໄອຍະການປະຊາຊົນ, ຄະນະສານ ມີສິດຖາມຜູ້ເຂົ້າຮ່ວມໃນການດຳເນີນຄະດີເພີ່ມເຕີມ ໂດຍການອະນຸຍາດຂອງປະທານຄະນະສານ. ຄະນະສານນຳເອົາບັນດາຂອງກາງ ແລະຫລັກຖານໃນຄະດີມາສະເໜີຕໍ່ທີ່ປະຊຸມສານ ແລ້ວເປີດການຖົກຖຽງ.

ເມື່ອການຖົກຖຽງໄດ້ສິ້ນສຸດແລ້ວ ປະທານຄະນະສານ ກໍສະເໜີໃຫ້ໄອຍະການປະຊາຊົນຂຶ້ນຖະແຫລງ. ພາຍຫລັງທີ່ຄະນະສານໄດ້ອະນຸຍາດໃຫ້ຈຳເລີຍ ຫລືທະນາຍຄວາມຂອງຜູ້ກ່ຽວມີຄຳເຫັນເປັນຜູ້ສຸດທ້າຍແລ້ວ ປະທານຄະນະສານກໍຈະປິດການຖົກຖຽງ ແລະປະກາດປິດປະຊຸມສານຊົ່ວຄາວ ເພື່ອພິຈາລະນາຄະດີ ໃນຫ້ອງປະຊຸມລັບ.

ຖ້າຫາກມີການສັບປ່ຽນຄະນະສານນັ້ນ ຕ້ອງດຳເນີນການໄຕ່ສວນຄືນໃໝ່.

### ມາດຕາ 79 ການພິຈາລະນາຄະດີໃນຫ້ອງປະຊຸມລັບ

ການພິຈາລະນາຕັດສິນຄະດີໃນຫ້ອງປະຊຸມລັບ ຕ້ອງເຮັດຢ່າງລະອຽດ, ຮອບດ້ານ, ຄົບຖ້ວນ ແລະພາວະວິໃສ ໂດຍອີງໃສ່ຜົນຂອງການໄຕ່ສວນຄະດີໃນທີ່ປະຊຸມສານເປັນຕົ້ນຕໍ ເພື່ອໃຫ້ຄຳຕັດສິນຖືກຕ້ອງ ແລະຍຸຕິທຳ.

ການລົງຄຳເຫັນຊີ້ຂາດໃນຫ້ອງປະຊຸມລັບ ຕ້ອງຖືເອົາຕາມສຽງສ່ວນຫຼາຍ ໂດຍໃຫ້ຄະນະສານຜູ້ທີ່ມີຄຸນວຸດທິຫຼຸດໝູ່ເປັນຜູ້ອອກຄຳເຫັນ ແລະອອກສຽງກ່ອນ ສ່ວນປະທານຄະນະສານນັ້ນອອກຄຳເຫັນ ແລະອອກສຽງເປັນຜູ້ສຸດທ້າຍ.

ຜູ້ທີ່ບໍ່ເຫັນດີຕາມສຽງສ່ວນຫຼາຍນັ້ນກໍມີສິດສະແດງຄຳເຫັນຂອງຕົນເປັນລາຍລັກອັກສອນໄວ້ໃນສຳນວນຄະດີ ເພື່ອໃຫ້ສານຂັ້ນເທິງພິຈາລະນາໃນກໍລະນີທີ່ມີການຂໍອຸທອນ ຫລືລົບລ້າງ.

### ມາດຕາ 80 ການອ່ານຄຳຕັດສິນໃນທີ່ປະຊຸມສານ

ພາຍຫລັງທີ່ໄດ້ພິຈາລະນາຕັດສິນຄະດີໃນຫ້ອງປະຊຸມລັບແລ້ວ ປະທານພ້ອມດ້ວຍຄະນະສານ ຕ້ອງນຳເອົາຄຳຕັດສິນອອກມາອ່ານໃນທີ່ປະຊຸມສານຢ່າງເປີດເຜີຍ ພ້ອມທັງແຈ້ງສິດໃນການຂໍອຸທອນຄຳຕັດສິນຂອງສານ.

ຖ້າຫາກວ່າບໍ່ສາມາດອ່ານຄຳຕັດສິນໃນມື້ນັ້ນໄດ້ ກໍໃຫ້ເລື່ອນການອ່ານຄຳຕັດສິນໄປໃສ່ມື້ໃໝ່ ແຕ່ຢ່າງຊ້າບໍ່ໃຫ້ກາຍ ເຈັດວັນ.

### ມາດຕາ 81 ການໂຈະ ແລະການເລື່ອນການໄຕ່ສວນຄະດີ

ການໂຈະການໄຕ່ສວນຄະດີໃນທີ່ປະຊຸມສານ ແມ່ນການຢຸດເຊົາການປະຊຸມສານຊົ່ວຄາວຍ້ອນມີສະພາບການໃດໜຶ່ງ ທີ່ເປັນອຸປະສັກຕໍ່ການໄຕ່ສວນຄະດີນັ້ນ ເປັນຕົ້ນຈຳເລີຍຫາກຖືກເຈັບເປັນຢ່າງກະທັນຫັນ ຫລືສູນເສຍຄວາມສາມາດທາງດ້ານການປະພຶດ.

ການເລື່ອນການໄຕ່ສວນຄະດີແມ່ນການຕົກລົງເອົາຄະດີໄປໄຕ່ສວນໃນວັນຂ້າງໜ້າ ຍ້ອນຄວາມຈຳເປັນຕ້ອງຫາເອົາຫລັກຖານໃໝ່ ຫລືຜູ້ເຂົ້າຮ່ວມໃນຄະດີຜູ້ໃດຜູ້ໜຶ່ງ ທີ່ມີຄວາມສຳຄັນຕໍ່ການພິຈາລະນາຄະດີນັ້ນ ບໍ່ມາຮ່ວມໃນທີ່ປະຊຸມສານ ຫລືຍ້ອນສາເຫດອື່ນໆ.

### ມາດຕາ 82 ການຕັດສິນຊ້ອງໜ້າ, ຖືວ່າຊ້ອງໜ້າ ແລະການຕັດສິນລັບຫລັງ

ການຕັດສິນຊ້ອງໜ້າ ແມ່ນການຕັດສິນຂອງສານທີ່ໂຈດທາງແພ່ງ ແລະຈຳເລີຍເຂົ້າຮ່ວມໃນການພິຈາລະນາຄະດີ ຍົກເວັ້ນການພິຈາລະນາພິພາກສາຄະດີຢູ່ສານຂັ້ນລົບລ້າງ.

ການຕັດສິນຖືວ່າຊ້ອງໜ້າ ແມ່ນການຕັດສິນຂອງສານທີ່ໂຈດທາງແພ່ງ ຫລືຈຳເລີຍ ໄດ້ຮັບໝາຍຮຽກເຂົ້າມາຮ່ວມປະຊຸມສານແລ້ວ ແຕ່ຫາກບໍ່ໄດ້ເຂົ້າມາຮ່ວມໂດຍບໍ່ມີເຫດຜົນ ຫລືໃນກໍລະນີທີ່ການກະທຳຜິດມີລັກສະນະເບົາ ຊຶ່ງໂຈດທາງແພ່ງ ຫລືຈຳເລີຍສະເໜີໃຫ້ສານພິຈາລະນາຕັດສິນຄະດີ ໂດຍທີ່ຜູ້ກ່ຽວບໍ່ໄດ້ເຂົ້າຮ່ວມນຳ. ໃນກໍລະນີນີ້ ຜູ້ກ່ຽວບໍ່ມີສິດຄັດຄ້ານຄຳຕັດສິນຂອງສານ ພຽງແຕ່ມີສິດຂໍອຸທອນເທົ່ານັ້ນ.

ການຕັດສິນລັບຫຼັງ ແມ່ນການຕັດສິນຂອງສານທີ່ໂຈດທາງແພ່ງ ຫຼືຈຳເລີຍ ບໍ່ໄດ້ເຂົ້າຮ່ວມໃນທີ່ປະຊຸມສານ ຊຶ່ງສານໄດ້ສົ່ງໝາຍຮຽກແລ້ວ ແລະເຂົ້າໃຈວ່າຜູ້ກ່ຽວໄດ້ຮັບໝາຍຮຽກນັ້ນແລ້ວ ແຕ່ຜູ້ກ່ຽວບໍ່ໄດ້ຮັບຍ້ອນສາເຫດໃດໜຶ່ງເຊັ່ນ: ໝາຍຮຽກສົ່ງຕໍ່ບໍ່ເຖິງມືຜູ້ກ່ຽວ, ຜູ້ກ່ຽວຫຼົບຫຼີກ. ໃນກໍລະນີດັ່ງກ່າວ ໂຈດທາງແພ່ງ ຫລືຈຳເລີຍມີສິດຄັດຄ້ານໄດ້ ພາຍໃນກຳນົດ ຊາວວັນ ນັບແຕ່ມື້ໄດ້ຮັບຊາບຄຳຕັດສິນນັ້ນເປັນຕົ້ນໄປ. ສານຄະນະເກົ່າຕ້ອງຕັດສິນຄະດີນັ້ນຄືນໃໝ່ ໂດຍຊ້ອງໜ້າຜູ້ກ່ຽວ ຕາມລະບຽບການພິຈາລະນາຄະດີຢູ່ສານຂັ້ນຕົ້ນ.

### ມາດຕາ 83 ສິດອຳນາດຂອງສານໃນການດຳເນີນຄະດີເປັນຂັ້ນຕົ້ນ

ສານປະຊາຊົນທີ່ມີສິດອຳນາດຕັດສິນຄະດີອາຍາ ແມ່ນສານປະຊາຊົນບ່ອນເຫດການໄດ້ເກີດຂຶ້ນ ຫລືບ່ອນຈຳເລີຍຢູ່.

ສານປະຊາຊົນເມືອງ, ເທດສະບານ, ສານປະຊາຊົນແຂວງ, ນະຄອນ ມີສິດອຳນາດໃນການພິຈາລະນາຄະດີເປັນຂັ້ນຕົ້ນ.

ສານປະຊາຊົນເມືອງ, ເທດສະບານ ມີສິດອຳນາດ ພິຈາລະນາຕັດສິນຄະດີອາຍາ ກ່ຽວກັບການກະທຳຜິດເບົາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍອາຍາ.

ສຳລັບສານປະຊາຊົນແຂວງ, ນະຄອນ ມີສິດອຳນາດພິຈາລະນາຕັດສິນຄະດີອາຍາທີ່ບໍ່ຂຶ້ນກັບສິດອຳນາດຂອງສານປະຊາຊົນເມືອງ, ເທດສະບານ.

### ມາດຕາ 84 ປະເພດຄຳຕັດສິນຂອງສານຂັ້ນຕົ້ນ.

ປະເພດຄຳຕັດສິນຄະດີຂອງສານຂັ້ນຕົ້ນມີດັ່ງນີ້:

1. ຕັດສິນລົງໂທດ:
   - ຕັດອິດສະລະພາບ, ປັບໃໝ ແລະອື່ນໆ
   - ພາກໄວ້ທັງໝົດ ຫລືບາງສ່ວນ
2. ຕັດສິນໃຫ້ພົ້ນຂໍ້ກ່າວຫາ.

ສານຂັ້ນຕົ້ນທີ່ໄດ້ຕັດສິນຄະດີແລ້ວ ຕ້ອງພິມຄຳຕັດສິນໃຫ້ແລ້ວ ພາຍໃນກຳນົດ ສິບວັນ ນັບແຕ່ມື້ລົງຄຳຕັດສິນເປັນຕົ້ນໄປ.

ໃນກໍລະນີທີ່ບໍ່ມີການຂໍອຸທອນ ຫລືສະເໜີຄັດຄ້ານຄຳຕັດສິນຂອງສານຂັ້ນຕົ້ນແລ້ວ ຖືວ່າຄຳຕັດສິນນັ້ນໃຊ້ໄດ້ຢ່າງເດັດຂາດ ແລະບໍ່ມີສິດຂໍລົບລ້າງຄຳຕັດສິນດັ່ງກ່າວ.

## ພາກທີ VI ການດຳເນີນຄະດີຢູ່ສານຂັ້ນອຸທອນ

### ມາດຕາ 85 ສິດໃນການຂໍອຸທອນ ແລະການສະເໜີຄັດຄ້ານຄຳຕັດສິນຂອງສານ

ຈຳເລີຍ, ທະນາຍຄວາມ ຫຼືຜູ້ປົກປ້ອງອື່ນຂອງຈຳເລີຍ ມີສິດຂໍອຸທອນ ຄຳສັ່ງ, ຄຳຊີ້ຂາດ ແລະຄຳຕັດສິນຂອງສານ.

ໄອຍະການປະຊາຊົນມີສິດສະເໜີຄັດຄ້ານ ຕໍ່ສານຂັ້ນອຸທອນ ທຸກຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນຂອງສານຂັ້ນຕົ້ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະບໍ່ມີເຫດຜົນພຽງພໍ.

ໂຈດທາງແພ່ງ, ຜູ້ຮັບຜິດທາງແພ່ງ, ທະນາຍຄວາມ ຫຼືຜູ້ປົກປ້ອງອື່ນ ຂອງຜູ້ກ່ຽວມີສິດຂໍອຸທອນ ຄຳສັ່ງ, ຄຳຊີ້ຂາດ ແລະຄຳຕັດສິນຂອງສານ ກ່ຽວກັບບັນຫາທາງແພ່ງເທົ່ານັ້ນ.

ການຂໍອຸທອນຄຳສັ່ງ, ຄຳຊີ້ຂາດ ຫລືຄຳຕັດສິນຂອງສານ ຕ້ອງຍື່ນຕໍ່ສານເທົ່ານັ້ນ.

### ມາດຕາ 86 ກຳນົດເວລາໃນການຂໍອຸທອນ ແລະການສະເໜີຄັດຄ້ານຄຳຕັດສິນຂອງສານ

ສານຂັ້ນອຸທອນຈະຮັບເອົາຄະດີມາພິຈາລະນາໄດ້ ກໍຕໍ່ເມື່ອຫາກມີຄຳຮ້ອງຂໍອຸທອນຂອງຄູ່ຄວາມ ຫລືຄຳສະເໜີຄັດຄ້ານຂອງໄອຍະການປະຊາຊົນເທົ່ານັ້ນ.

ຄູ່ຄວາມ ມີສິດຂໍອຸທອນ ແລະໄອຍະການປະຊາຊົນມີສິດສະເໜີຄັດຄ້ານ ຄຳສັ່ງ, ຄຳຊີ້ຂາດຂອງສານຂັ້ນຕົ້ນໄດ້ ພາຍໃນກຳນົດ ເຈັດວັນ ນັບແຕ່ວັນທີ່ໄດ້ຮັບຊາບເປັນຕົ້ນໄປ. ສຳລັບຄຳຕັດສິນຂອງສານຂັ້ນຕົ້ນນັ້ນ ກຳນົດເວລາຂໍອຸທອນ ຫລືສະເໜີຄັດຄ້ານ ແມ່ນ ຊາວວັນ ນັບແຕ່ວັນອ່ານ ຫລືວັນຮັບຊາບຄຳຕັດສິນເປັນຕົ້ນໄປ.

### ມາດຕາ 87 ລະບຽບການຂໍອຸທອນ ຫລືການສະເໜີຄັດຄ້ານຄຳຕັດສິນຂອງສານ

ໃນກໍລະນີທີ່ມີການຂໍອຸທອນ ຫລືການສະເໜີຄັດຄ້ານຄຳສັ່ງ, ຄຳຊີ້ຂາດ ແລະຄຳຕັດສິນຂອງສານ ຄູ່ຄວາມ ຫລືໄອຍະການປະຊາຊົນ ຕ້ອງຍື່ນຄຳຮ້ອງຂໍອຸທອນ ຫລືຄຳສະເໜີຄັດຄ້ານຂອງຕົນຕໍ່ສານຂັ້ນອຸທອນ ໂດຍຜ່ານສານທີ່ໄດ້ຕັດສິນຄະດີເປັນຂັ້ນຕົ້ນນັ້ນ. ສານຂັ້ນຕົ້ນຕ້ອງແນະນຳໃຫ້ຜູ້ຂໍອຸທອນຊາບ ກ່ຽວກັບກຳນົດເວລາຂໍອຸທອນ, ການຂຽນຄຳຮ້ອງຂໍອຸທອນ, ຄ່າທຳນຽມຂໍອຸທອນ ແລະສິດຕ່າງໆຂອງຜູ້ກ່ຽວ. ສານປະຊາຊົນຂັ້ນຕົ້ນຕ້ອງຮັບຄຳຂໍອຸທອນ ຫລືຄຳສະເໜີຄັດຄ້ານຂອງໄອຍະການປະຊາຊົນ ເຖິງວ່າຈະກາຍກຳນົດເວລາການຂໍອຸທອນ ຫລືຄຳສະເໜີຄັດຄ້ານແລ້ວກໍຕາມ. ພາຍຫລັງສິ້ນສຸດກຳນົດເວລາຂໍອຸທອນ ຫລືສະເໜີຄັດຄ້ານແລ້ວ ພາຍໃນກຳນົດ ສິບສາມວັນ ສານຂັ້ນຕົ້ນຕ້ອງສົ່ງຄຳຮ້ອງຂໍອຸທອນ ຫລືຄຳສະເໜີຄັດຄ້ານ ພ້ອມດ້ວຍສຳນວນຄະດີໄປຍັງສານຂັ້ນອຸທອນ ເພື່ອດຳເນີນຄະດີຕໍ່ໄປ.

ໃນກໍລະນີ ທີ່ສານຂັ້ນຕົ້ນຫາກບໍ່ຮັບ ຫລືແກ່ຍາວການຮັບຄຳຂໍອຸທອນ ຫລືຄຳສະເໜີຄັດຄ້ານຄຳຕັດສິນຂອງສານ, ຄູ່ຄວາມ ຫລືໄອຍະການປະຊາຊົນມີສິດຂໍອຸທອນ ຫລືສະເໜີຄັດຄ້ານໂດຍກົງຕໍ່ສານຂັ້ນອຸທອນ.

ຫລັງຈາກກຳນົດຂໍອຸທອນໄດ້ສິ້ນສຸດແລ້ວ ຖ້າສານຂັ້ນຕົ້ນທີ່ໄດ້ຮັບຄຳຮ້ອງຂໍອຸທອນ ຫຼືຄຳເໜີຄັດຄ້ານຫາກແກ່ຍາວເກີນກຳນົດເວລາໃນການສົ່ງສຳນວນຄະດີຂຶ້ນສານຂັ້ນອຸທອນ ຄູ່ຄວາມ ຫລືໄອຍະການປະຊາຊົນມີສິດສະເໜີຕໍ່ສານຂັ້ນອຸທອນ ເພື່ອທວງເອົາຄະດີດັ່ງກ່າວມາພິຈາລະນາ.

ສານຂັ້ນອຸທອນ ຕ້ອງພິຈາລະນາຄະດີພາຍໃນກຳນົດ ສອງເດືອນ ນັບແຕ່ມື້ໄດ້ຮັບສຳນວນຄະດີເປັນຕົ້ນໄປ.

ໃນກໍລະນີທີ່ມີຄໍາຮ້ອງຂໍອຸທອນ ຫລືຄໍາສະເໜີຄັດຄ້ານຄໍາຕັດສິນນັ້ນ ສານຂັ້ນຕົ້ນຕ້ອງແຈ້ງຄໍາຮ້ອງຂໍອຸທອນ ຫລືຄໍາສະເໜີຄັດຄ້ານໃຫ້ຄູ່ຄວາມອີກຝ່າຍໜຶ່ງຊາບ ເພື່ອໃຫ້ຜູ້ກ່ຽວເຮັດຄໍາແກ້ຄໍາຮ້ອງຂໍອຸທອນ ຫລືຄໍາສະເໜີຄັດຄ້ານ. ຖ້າວ່າຈໍາເລີຍຫາກຖືກກັກຂັງ ກໍຕ້ອງແຈ້ງໃຫ້ຜູ້ກ່ຽວຊາບໂດຍຜ່ານເຈົ້າໜ້າທີ່ຄ້າຍຄຸມຂັງ.

ກ່ອນການພິຈາລະນາພິພາກສາຄະດີຢູ່ສານຂັ້ນອຸທອນນັ້ນ ຄູ່ຄວາມ ແລະໄອຍະການປະຊາຊົນມີສິດໃຫ້ຄໍາອະທິບາຍເປັນລາຍລັກອັກສອນ ເພື່ອໃຫ້ເຫດຜົນເພີ່ມເຕີມຕໍ່ຄໍາຮ້ອງຂໍອຸທອນ ຫລືຄໍາສະເໜີຄັດຄ້ານຂອງຕົນ, ໃຫ້ຂໍ້ສັງເກດກ່ຽວກັບຄໍາຮ້ອງຂໍອຸທອນຂອງອີກຝ່າຍໜຶ່ງ ຫລືຄໍາສະເໜີຄັດຄ້ານຂອງໄອຍະການປະຊາຊົນ.

### ມາດຕາ 88 ສິດໃນການຖອນຄໍາຂໍອຸທອນ ຫລືຄໍາສະເໜີຄັດຄ້ານ

ກ່ອນການພິຈາລະນາພິພາກສາຄະດີຢູ່ສານຂັ້ນອຸທອນນັ້ນ ຄູ່ຄວາມ ແລະບຸກຄົນອື່ນທີ່ກ່ຽວຂ້ອງໃນຄະດີ ຫລືໄອຍະການປະຊາຊົນ ມີສິດຖອນຄໍາຂໍອຸທອນ ຫລືຄໍາສະເໜີຄັດຄ້ານຂອງຕົນຄືນໄດ້.

ໃນກໍລະນີທີ່ມີການຖອນຄໍາຂໍອຸທອນ ຫຼືຄໍາສະເໜີຄັດຄ້ານແລ້ວ ຄູ່ຄວາມ ແລະບຸກຄົນອື່ນທີ່ກ່ຽວຂ້ອງໃນຄະດີ ຫລືໄອຍະການປະຊາຊົນ ບໍ່ມີສິດຂໍອຸທອນ ຫລືສະເໜີຄັດຄ້ານ ຄືນໃໝ່ອີກ.

### ມາດຕາ 89 ການສະເໜີຫລັກຖານໃໝ່ຕໍ່ສານຂັ້ນອຸທອນ

ໃນສານຂັ້ນອຸທອນ ບຸກຄົນທີ່ກ່າວໄວ້ໃນມາດຕາ 85 ຂອງກົດໝາຍສະບັບນີ້ ມີສິດສະເໜີຫລັກຖານໃໝ່ເພີ່ມເຕີມ ກ່ອນໄອຍະການປະຊາຊົນຈະຖະແຫລງໃນທີ່ປະຊຸມສານ.

### ມາດຕາ 90 ລະບຽບການພິຈາລະນາຄະດີຢູ່ສານຂັ້ນອຸທອນ

ລະບຽບການພິຈາລະນາຄະດີຢູ່ສານຂັ້ນອຸທອນ ໃຫ້ປະຕິບັດດັ່ງດຽວກັນກັບການພິຈາລະນາຄະດີຢູ່ສານຂັ້ນຕົ້ນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 77, 78, 79, 80, 81 ແລະມາດຕາ 82 ຂອງກົດໝາຍສະບັບນີ້.

ພາຍຫລັງທີ່ປະທານຄະນະສານໄດ້ກ່າວເປີດປະຊຸມສານຕາມລະບຽບການ ແລະຄະນະສານຜູ້ຮັບຜິດຊອບຄະດີໄດ້ລາຍງານແລ້ວ ປະທານຄະນະສານໃຫ້ຜູ້ຂໍອຸທອນ ຫລືໄອຍະການປະຊາຊົນຂັ້ນອຸທອນ ໃຫ້ເຫດຜົນກ່ຽວກັບການຂໍອຸທອນ ຫລືການສະເໜີຄັດຄ້ານຂອງຕົນ.

ໃນກໍລະນີທີ່ມີການສະເໜີຫລັກຖານໃໝ່ເພີ່ມເຕີມນັ້ນ ສານຕ້ອງແຈ້ງໃຫ້ໄອຍະການປະຊາຊົນຂັ້ນອຸທອນ ແລະບັນດາຜູ້ເຂົ້າຮ່ວມໃນທີ່ປະຊຸມສານຮັບຮູ້ນໍາ. ຕໍ່ຈາກນັ້ນ ຈໍາເລີຍ, ທະນາຍຄວາມ ຫລືຜູ້ປົກປ້ອງອື່ນ ຂອງຈໍາເລີຍ, ຜູ້ຖືກເສັຍຫາຍ, ໂຈດທາງແພ່ງ, ທະນາຍຄວາມ ຫລືຜູ້ປົກປ້ອງອື່ນຂອງຜູ້ກ່ຽວຈຶ່ງໃຫ້ຄໍາອະທິບາຍຕໍ່ສານ. ພາຍຫລັງທີ່ສານໄດ້ຟັງຄໍາຖະແຫລງຂອງໄອຍະການປະຊາຊົນຂັ້ນອຸທອນແລ້ວ ຕ້ອງໃຫ້ຈໍາເລີຍ ຫລືຜູ້ປົກປ້ອງຂອງຜູ້ກ່ຽວມີຄໍາເຫັນເພີ່ມເຕີມເປັນຜູ້ສຸດທ້າຍແລ້ວ ສານຈະກ່າວປິດການຖົກຖຽງ ແລະປະກາດປິດປະຊຸມສານຊົ່ວຄາວ ເພື່ອພິຈາ

ລະນາພິພາກສາຄະດີໃນຫ້ອງປະຊຸມລັບ. ຈາກນັ້ນ ກໍເອົາຄຳພິພາກສາອອກມາອ່ານຕໍ່ທີ່ປະຊຸມສານ.

### ມາດຕາ 91 ຂອບເຂດສິດໃນການພິຈາລະນາຄະດີຂອງສານຂັ້ນອຸທອນ

ໃນການພິຈາລະນາຄະດີອາຍາ ສານຂັ້ນອຸທອນຈະກວດກາຄຳຕັດສິນໃນດ້ານຄວາມຖືກຕ້ອງຕາມກົດໝາຍ ແລະເຫດຜົນຂອງຄຳຕັດສິນ ໂດຍອີງໃສ່ຜົນຂອງການໄຕ່ສວນຄະດີ ໃນທີ່ປະຊຸມສານເປັນຕົ້ນຕໍ ຫລືຫລັກຖານໃໝ່ເພີ່ມເຕີມ. ສານຂັ້ນອຸທອນບໍ່ພຽງແຕ່ຈະພິຈາລະນາບັນຫາທີ່ໄດ້ຂໍອຸທອນ ຫລືໄດ້ສະເໜີຄັດຄ້ານເທົ່ານັ້ນ ແຕ່ຫາກຍັງຕ້ອງກວດກາການດຳເນີນຄະດີທັງໝົດທີ່ກ່ຽວກັບພວກຈຳເລີຍໃນຄະດີດຽວກັນ ເຖິງວ່າຈຳເລີຍຈຳນວນໜຶ່ງບໍ່ໄດ້ຂໍອຸທອນ ຫລືໄອຍະການປະຊາຊົນບໍ່ໄດ້ສະເໜີຄັດຄ້ານກໍຕາມ.

ໃນການພິຈາລະນາຄະດີ ສານຂັ້ນອຸທອນມີສິດພິພາກສາຜ່ອນໂທດໃຫ້ຈຳເລີຍ ແຕ່ຫາກບໍ່ມີສິດເພີ່ມໂທດໃຫ້ຈຳເລີຍໜັກຂຶ້ນກວ່າເກົ່າໄດ້ ເວັ້ນເສຍແຕ່ມີຄຳສະເໜີຄັດຄ້ານຂອງໄອຍະການປະຊາຊົນເທົ່ານັ້ນ.

### ມາດຕາ 92 ປະເພດຄຳພິພາກສາຂອງສານຂັ້ນອຸທອນ

ປະເພດຄຳພິພາກສາຂອງສານຂັ້ນອຸທອນ ມີດັ່ງນີ້:

1. ຢັ້ງຢືນເອົາຕາມຄຳຕັດສິນຂອງສານຂັ້ນຕົ້ນທັງໝົດ;
2. ປ່ຽນແປງຄຳຕັດສິນຂອງສານຂັ້ນຕົ້ນບາງສ່ວນ ຫລືທັງໝົດ, ພິພາກສາເພີ່ມ ຫລືຫລຸດໂທດໃສ່ການກະທຳຜິດທີ່ສານຂັ້ນຕົ້ນໄດ້ຕັດສິນມາແລ້ວ;
3. ລົບລ້າງຄຳຕັດສິນ ແລ້ວສົ່ງຄະດີໄປໃຫ້ສານຂັ້ນຕົ້ນຄະນະໃໝ່ພິຈາລະນາຄືນໃໝ່ ຫລືຄະນະເກົ່າໃນກໍລະນີທີ່ສານຄະນະເກົ່ານີ້ ຫາກຍັງບໍ່ທັນໄດ້ພິຈາລະນາຄຳຮ້ອງຂໍອັນໃດອັນໜຶ່ງຂອງຄູ່ຄວາມ ຫລືຄຳສະເໜີຂອງໄອຍະການປະຊາຊົນ;
4. ລົບລ້າງຄຳຕັດສິນຂອງສານຂັ້ນຕົ້ນ ແລ້ວພິພາກສາໃຫ້ຈຳເລີຍພົ້ນຂໍ້ກ່າວຫາ.

ຄຳພິພາກສາຂອງສານຂັ້ນອຸທອນເປັນຄຳພິພາກສາຂັ້ນສຸດທ້າຍທາງດ້ານເນື້ອຄະດີ.

ສານຂັ້ນອຸທອນທີ່ໄດ້ພິພາກສາຄະດີແລ້ວ ຕ້ອງພິມຄຳພິພາກສາໃຫ້ແລ້ວ ພາຍໃນກຳນົດຊາວວັນ ນັບແຕ່ມື້ລົງຄຳພິພາກສາເປັນຕົ້ນໄປ.

### ມາດຕາ 93 ສາເຫດທີ່ພາໃຫ້ມີການລົບລ້າງ ຫລືປ່ຽນແປງຄຳຕັດສິນ

ສາເຫດທີ່ພາໃຫ້ມີການລົບລ້າງ ຫລືປ່ຽນແປງຄຳຕັດສິນຂອງສານຂັ້ນຕົ້ນ ມີດັ່ງນີ້:

1. ການສືບສວນ-ສອບສວນ ຫລືການໄຕ່ສວນຄະດີໃນທີ່ປະຊຸມສານຫາກບໍ່ຮອບດ້ານ, ບໍ່ຄົບຖ້ວນ ຫລືບໍ່ພາວະວິໄສ;
2. ຄຳເຫັນຂອງສານບໍ່ສອດຄ່ອງກັບເຫດການຕົວຈິງຂອງຄະດີ;

3. ການວາງໂທດບໍ່ສອດຄ່ອງກັບລັກສະນະ, ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ ແລະບຸກຄະລິກກະພາບຂອງຜູ້ກະທຳຜິດ.
4. ມີການລະເມີດລະບຽບການດຳເນີນຄະດີອາຍາ ຫລືການນຳໃຊ້ກົດໝາຍອາຍາບໍ່ຖືກຕ້ອງ.

### ມາດຕາ 94 ການພິຈາລະນາຄະດີຄືນໃໝ່ຂອງສານຂັ້ນຕົ້ນ

ໃນກໍລະນີທີ່ສານຂັ້ນອຸທອນ ຫາກໄດ້ສົ່ງຄະດີຄືນໃຫ້ສານຂັ້ນຕົ້ນພິຈາລະນາຄືນໃໝ່ແລ້ວ ການພິຈາລະນາຄະດີດັ່ງກ່າວ ຕ້ອງປະຕິບັດຕາມລະບຽບການທົ່ວໄປ.

ໃນການພິຈາລະນາຄະດີຄືນໃໝ່ນັ້ນ ສານຂັ້ນຕົ້ນຈະເພີ່ມໂທດໄດ້ ກໍຕໍ່ເມື່ອໃນການສືບສວນ-ສອບສວນຄະດີຄືນໃໝ່ນັ້ນ ໄດ້ຊອກເຫັນເຫດການທີ່ຢັ້ງຢືນວ່າຈຳເລີຍໄດ້ມີການກະທຳຜິດອັນໃໝ່ໂດຍມີຄຳສັ່ງຟ້ອງເພີ່ມເຕີມຂອງໄອຍະການປະຊາຊົນ.

## ພາກທີ VII ການດຳເນີນຄະດີຢູ່ສານຂັ້ນລົບລ້າງ

### ມາດຕາ 95 ສິດອຳນາດຂອງສານຂັ້ນລົບລ້າງ

ສານປະຊາຊົນສູງສຸດ ມີສິດພິພາກສາຄະດີເປັນຂັ້ນລົບລ້າງ ແລະຂັ້ນສຸດທ້າຍທາງດ້ານກົດໝາຍເທົ່ານັ້ນ.

### ມາດຕາ 96 ການຂໍລົບລ້າງ ແລະການສະເໜີຄັດຄ້ານຄຳຕັດສິນຂອງສານປະຊາຊົນ

ຄຳສັ່ງ, ຄຳຊີ້ຂາດ ແລະຄຳພິພາກສາຂອງສານຂັ້ນອຸທອນ ໂຈດທາງແພ່ງ, ຈຳເລີຍ, ທະນາຍຄວາມ ຫລືຜູ້ປົກປ້ອງອື່ນ ຂອງຝ່າຍໃດຝ່າຍໜຶ່ງ ຫລືໄອຍະການປະຊາຊົນຂັ້ນອຸທອນ ມີສິດຂໍລົບລ້າງ ຫລືສະເໜີຄັດຄ້ານຕໍ່ສານປະຊາຊົນຂັ້ນລົບລ້າງ ເພື່ອກວດກາຄວາມຖືກຕ້ອງຕາມກົດໝາຍຂອງຄຳສັ່ງ, ຄຳຊີ້ຂາດ ແລະຄຳພິພາກສານັ້ນ.

ສານຂັ້ນລົບລ້າງ ຈະຮັບເອົາຄຳສັ່ງ, ຄຳຊີ້ຂາດ ແລະຄຳພິພາກສາຂອງສານຂັ້ນອຸທອນມາພິຈາລະນາໄດ້ກໍຕໍ່ເມື່ອ ຫາກໄດ້ມີຄຳຂໍລົບລ້າງຂອງໂຈດທາງແພ່ງ, ຈຳເລີຍ, ທະນາຍຄວາມ ຫລືຜູ້ປົກປ້ອງອື່ນຂອງຝ່າຍໃດຝ່າຍໜຶ່ງ ຫລືຄຳສະເໜີຄັດຄ້ານຂອງໄອຍະການປະຊາຊົນຂັ້ນອຸທອນ.

ໂຈດທາງແພ່ງ ຫລືຈຳເລີຍ ແລະໄອຍະການປະຊາຊົນຂັ້ນອຸທອນມີສິດຂໍລົບລ້າງ ຫຼືສະເໜີຄັດຄ້ານຄຳສັ່ງ, ຄຳຊີ້ຂາດຂອງສານຂັ້ນອຸທອນໄດ້ພາຍໃນກຳນົດ ເຈັດວັນ ນັບແຕ່ວັນຮັບຊາບຄຳສັ່ງ, ຄຳຊີ້ຂາດເປັນຕົ້ນໄປ. ສຳລັບຄຳພິພາກສາຂອງສານຂັ້ນອຸທອນນັ້ນ ໃຫ້ຂໍລົບລ້າງ ຫລືສະເໜີຄັດຄ້ານພາຍໃນກຳນົດ ສອງເດືອນ ນັບແຕ່ວັນອ່ານ ຫລືວັນຮັບຊາບຄຳພິພາກສານັ້ນເປັນຕົ້ນໄປ.

## ມາດຕາ 97 ລະບຽບການຂໍລົບລ້າງ.

ໃນກໍລະນີທີ່ມີການຂໍລົບລ້າງ ຫລືຄໍາສະເໜີຄັດຄ້ານ ຄໍາສັ່ງ, ຄໍາຊີ້ຂາດ ແລະຄໍາພິພາກສາຂອງສານ ຄູ່ຄວາມ ຫລືໄອຍະການປະຊາຊົນ ຕ້ອງຍື່ນຄໍາຂໍລົບລ້າງ ຫຼືຄໍາສະເໜີຄັດຄ້ານຂອງຕົນຕໍ່ສານຂັ້ນລົບລ້າງ ໂດຍຜ່ານສານຂັ້ນອຸທອນທີ່ໄດ້ພິພາກສາຄະດີນັ້ນ. ສານຂັ້ນອຸທອນຕ້ອງແນະນໍາໃຫ້ຜູ້ຂໍລົບລ້າງຊາບ ກ່ຽວກັບກໍານົດເວລາຂໍລົບລ້າງ, ການຂຽນຄໍາຮ້ອງຂໍລົບລ້າງ, ຄ່າທໍານຽມຂໍລົບລ້າງ ແລະສິດຕ່າງໆຂອງຜູ້ກ່ຽວ. ສານຂັ້ນອຸທອນຕ້ອງຮັບຄໍາຂໍລົບລ້າງ ຫລືສະເໜີຄັດຄ້ານດັ່ງກ່າວເຖິງວ່າກໍານົດເວລາຂໍລົບລ້າງນັ້ນຈະໝົດແລ້ວກໍຕາມ ພາຍຫລັງສິ້ນສຸດກໍານົດເວລາຂໍລົບລ້າງ ຫລືຄໍາສະເໜີຄັດຄ້ານແລ້ວ ພາຍໃນກໍານົດສາມວັນ ສານຂັ້ນອຸທອນຕ້ອງສົ່ງຄໍາຮ້ອງຂໍລົບລ້າງ ຫລືຄໍາສະເໜີຄັດຄ້ານພ້ອມດ້ວຍສໍານວນຄະດີໄປຍັງສານຂັ້ນລົບລ້າງເພື່ອດໍາເນີນຄະດີຕໍ່ໄປ.

ໃນກໍລະນີທີ່ສານຂັ້ນອຸທອນຫາກບໍ່ຮັບ ຫລືແກ່ຍາວການຮັບຄໍາຂໍລົບລ້າງ ຫລືຄໍາສະເໜີຄັດຄ້ານຄໍາພິພາກສາຂອງສານ, ຄູ່ຄວາມ ຫລືໄອຍະການປະຊາຊົນມີສິດຂໍລົບລ້າງ ຫລືສະເໜີຄັດຄ້ານໂດຍກົງຕໍ່ສານຂັ້ນລົບລ້າງ.

ຫລັງຈາກກໍານົດຂໍລົບລ້າງໄດ້ສິ້ນສຸດແລ້ວ ຖ້າສານຂັ້ນອຸທອນທີ່ໄດ້ຮັບຄໍາຮ້ອງຂໍລົບລ້າງ ຫລືຄໍາເໜີຄັດຄ້ານຫາກແກ່ຍາວເກີນກໍານົດເວລາ ໃນການສົ່ງສໍານວນຄະດີຂຶ້ນສານຂັ້ນລົບລ້າງ ຄູ່ຄວາມ ຫລືໄອຍະການປະຊາຊົນມີສິດສະເໜີຕໍ່ສານຂັ້ນລົບລ້າງ ເພື່ອທວງເອົາຄະດີດັ່ງກ່າວມາພິຈາລະນາ.

ສານຂັ້ນລົບລ້າງຕ້ອງພິຈາລະນາຄະດີພາຍໃນກໍານົດ ສອງເດືອນ ນັບແຕ່ມື້ໄດ້ຮັບສໍານວນຄະດີເປັນຕົ້ນໄປ.

ໃນກໍລະນີທີ່ມີຄໍາຮ້ອງຂໍລົບລ້າງ ຫລືຄໍາສະເໜີຄັດຄ້ານຄໍາພິພາກສານັ້ນ ສານຂັ້ນອຸທອນຕ້ອງແຈ້ງຄໍາຮ້ອງຂໍລົບລ້າງ ຫລືຄໍາສະເໜີຄັດຄ້ານໃຫ້ຄູ່ຄວາມອີກຝ່າຍໜຶ່ງຊາບ ເພື່ອໃຫ້ຜູ້ກ່ຽວເຮັດຄໍາແກ້ຄໍາຮ້ອງຂໍລົບລ້າງ ຫລືຄໍາສະເໜີຄັດຄ້ານ ຖ້າວ່າຈໍາເລີຍຫາກຖືກກັກຂັງກໍຕ້ອງແຈ້ງໃຫ້ຜູ້ກ່ຽວຊາບໂດຍຜ່ານເຈົ້າໜ້າທີ່ຄ້າຍຄຸມຂັງ.

ກ່ອນການພິຈາລະນາພິພາກສາຄະດີຢູ່ສານຂັ້ນລົບລ້າງນັ້ນ ຄູ່ຄວາມ ແລະໄອຍະການປະຊາຊົນ ມີສິດໃຫ້ຄໍາອະທິບາຍເປັນລາຍລັກອັກສອນ ເພື່ອໃຫ້ເຫດຜົນເພີ່ມເຕີມຕໍ່ຄໍາຮ້ອງຂໍລົບລ້າງ ຫລືຄໍາສະເໜີຄັດຄ້ານຂອງຕົນ, ໃຫ້ຂໍ້ສັງເກດກ່ຽວກັບຄໍາຮ້ອງຂໍລົບລ້າງຂອງອີກຝ່າຍໜຶ່ງ ຫລືຄໍາສະເໜີຄັດຄ້ານຂອງໄອຍະການປະຊາຊົນ.

## ມາດຕາ 98 ການພິຈາລະນາຄໍາຮ້ອງຂໍລົບລ້າງແລະຄໍາສະເໜີຄັດຄ້ານ ໃນສານຂັ້ນລົບລ້າງ

ສານຂັ້ນລົບລ້າງພິຈາລະນາຄໍາຮ້ອງຂໍລົບລ້າງ ແລະຄໍາສະເໜີຄັດຄ້ານໃນທີ່ປະຊຸມສານໂດຍມີໄອຍະການປະຊາຊົນສູງສຸດເຂົ້າຮ່ວມນໍາເພື່ອຖະແຫລງ.

ໃນກໍລະນີທີ່ຈໍາເປັນສານຂັ້ນລົບລ້າງຈະຮຽກເອົາຜູ້ຖືກຕັດສິນ ແລະບຸກຄົນອື່ນທີ່ກ່ຽວຂ້ອງໃນຄະດີມາຮ່ວມໃນທີ່ປະຊຸມສານກໍໄດ້.

ພາຍຫລັງທີ່ໄດ້ເປີດປະຊຸມສານແລ້ວ ປະທານສານ ຫລືຄະນະສານຜູ້ຮັບຜິດຊອບຄະດີຈະລາຍງານສະພາບຂອງຄະດີ, ລາຍງານກ່ຽວກັບຄໍາສັ່ງ, ຄໍາຊີ້ຂາດ ຫລືຄໍາພິພາກສາ, ເນື້ອໃນຄໍາຮ້ອງຂໍລົບລ້າງ ຫລືຄໍາສະເໜີຄັດຄ້ານ ພ້ອມດ້ວຍຄໍາເຫັນຂອງຕົນກ່ຽວກັບຄະດີນັ້ນ. ຕໍ່ຈາກນັ້ນຄະນະສານຜູ້ອື່ນ, ໄອຍະການປະຊາຊົນສູງສຸດ ມີສິດຖາມຜູ້ຮັບຜິດຊອບລາຍງານຄະດີ ແລະບຸກຄົນອື່ນທີ່ກ່ຽວຂ້ອງໃນຄະດີ ມີສິດສະເໜີ ແລະໃຫ້ຄໍາເຫັນຂອງຕົນຕໍ່ທີ່ປະຊຸມສານກ່ຽວກັບຄະດີນັ້ນ.

ພາຍຫລັງທີ່ໄອຍະການປະຊາຊົນສູງສຸດໄດ້ຖະແຫລງແລ້ວ ປະທານຄະນະສານກໍາກ່າວປິດປະຊຸມສານຊົ່ວຄາວ ເພື່ອພິຈາລະນາພິພາກສາຄະດີໃນຫ້ອງປະຊຸມລັບ ແລ້ວນໍາເອົາຄໍາພິພາກສາອອກມາອ່ານຕໍ່ທີ່ປະຊຸມສານ.

### ມາດຕາ 99 ປະເພດຄໍາພິພາກສາຂອງສານຂັ້ນລົບລ້າງ

ປະເພດຄໍາພິພາກສາຂອງສານຂັ້ນລົບລ້າງມີ ດັ່ງນີ້:

1. ບໍ່ຮັບພິຈາລະນາຄໍາຮ້ອງຂໍລົບລ້າງ ຫລືຄໍາສະເໜີຄັດຄ້ານ ຖ້າຄູ່ຄວາມ ຫລື ໄອຍະການປະຊາຊົນ ຫາກປະຕິບັດບໍ່ຖືກຕ້ອງຕາມລະບຽບການຂໍລົບລ້າງ ຫລືການສະເໜີຄັດຄ້ານ;
2. ຍົກເລີກຄໍາຮ້ອງຂໍລົບລ້າງ ຫລືຄໍາສະເໜີຄັດຄ້ານ ແລ້ວພິພາກສາຢັ້ງຢືນເອົາຕາມຄໍາສັ່ງ, ຄໍາຊີ້ຂາດ ຫຼືຄໍາພິພາກສາຂອງສານຂັ້ນອຸທອນທັງໝົດ;
3. ປ່ຽນແປງຄໍາສັ່ງ, ຄໍາຊີ້ຂາດຫຼືຄໍາພິພາກສາຂອງສານຂັ້ນອຸທອນບາງສ່ວນ ຫລືທັງໝົດທີ່ ມີການລະເມີດກົດໝາຍ;
4. ລົບລ້າງຄໍາສັ່ງ, ຄໍາຊີ້ຂາດ ຫຼືຄໍາພິພາກສາຂອງສານຂັ້ນອຸທອນ ທັງໝົດໂດຍບໍ່ສົ່ງຄະດີຄືນໃຫ້ສານຂັ້ນອຸທອນພິຈາລະນາແລ້ວໃຫ້ຈໍາເລີຍພົ້ນຂໍ້ກ່າວຫາ;
5. ລົບລ້າງຄໍາສັ່ງ, ຄໍາຊີ້ຂາດ ຫລືຄໍາພິພາກສາຂອງສານຂັ້ນອຸທອນບາງສ່ວນ ຫລືທັງໝົດ ແລ້ວສົ່ງຄະດີໄປຍັງສານຂັ້ນອຸທອນຄະນະໃໝ່ ຫລືຄະນະເກົ່າໃນກໍລະນີທີ່ສານອຸທອນຄະນະເກົ່າບໍ່ທັນໄດ້ພິຈາລະນາຄໍາຮ້ອງຂໍໃດໜຶ່ງ;

### ມາດຕາ 100 ສາເຫດທີ່ພາໃຫ້ມີການລົບລ້າງ ຫລືປ່ຽນແປງຄໍາສັ່ງ, ຄໍາຊີ້ຂາດ ແລະຄໍາພິພາກສາຂອງສານຂັ້ນອຸທອນ

ສານຂັ້ນລົບລ້າງ ມີສິດລົບລ້າງ ຫລືປ່ຽນແປງ ຄໍາສັ່ງ, ຄໍາຊີ້ຂາດ ຫລືຄໍາພິພາກສາຂອງ ສານຂັ້ນອຸທອນບາງສ່ວນ ຫລືທັງໝົດ ເມື່ອມີສາເຫດອັນໃດອັນໜຶ່ງທີ່ໄດ້ກໍານົດໄວ້ໃນ ຂໍ້ 3 ແລະ ຂໍ້ 4 ມາດຕາ 93 ຂອງກົດໝາຍສະບັບນີ້.

### ມາດຕາ 101 ຂອບເຂດສິດໃນການພິຈາລະນາຄະດີຢູ່ສານຂັ້ນລົບລ້າງ

ໃນການພິຈາລະນາຄໍາຮ້ອງຂໍລົບລ້າງ ແລະຄໍາສະເໜີຄັດຄ້ານນັ້ນ ສານຂັ້ນລົບລ້າງມີໜ້າທີ່ພິຈາລະນາບັນຫາທີ່ໄດ້ຍົກຂຶ້ນໃນຄໍາຮ້ອງຂໍລົບລ້າງ ຫລືຄໍາສະເໜີຄັດຄ້ານທາງດ້ານກົດໝາຍເທົ່ານັ້ນ ແລະຈະບໍ່ໄດ້ທໍາການໄຕ່ສວນກ່ຽວກັບເຫດການຕ່າງໆຂອງຄະດີນັ້ນອີກ.

ຖ້າວ່າໃນຄະດີນັ້ນຫາກມີຜູ້ຖືກພິພາກສາລົງໂທດຫລາຍຄົນ ແຕ່ຄຳຮ້ອງຂໍລົບລ້າງ ຫລືຄຳສະເໜີຄັດຄ້ານ ພົດພຽງແຕ່ກ່ຽວຂ້ອງເຖິງຜູ້ຖືກພິພາກສາຜູ້ໃດຜູ້ໜຶ່ງ ຫລືຈຳນວນໜຶ່ງເທົ່ານັ້ນ ສານກໍຕ້ອງພິຈາລະນາຄະດີກ່ຽວກັບພວກທີ່ຖືກພິພາກສາລົງໂທດທັງໝົດໃນຄະດີດຽວກັນ ເຖິງວ່າຄຳຮ້ອງຂໍລົບລ້າງ ຫລືຄຳສະເໜີຄັດຄ້ານນັ້ນ ບໍ່ໄດ້ກ່ຽວຂ້ອງເຖິງພວກກ່ຽວກໍຕາມ.

ໃນກໍລະນີທີ່ເຫັນວ່າສານຂັ້ນອຸທອນ ຫາກໄດ້ພິພາກສາໃຫ້ຈຳເລີຍພົ້ນຂໍ້ກ່າວຫາ ໂດຍບໍ່ຖືກຕ້ອງ ຫລືຫາກເຫັນວ່າການວາງໂທດໃສ່ຈຳເລີຍ ບໍ່ສອດຄ່ອງກັບການກະທຳຜິດຕົວຈິງນັ້ນ ສານຂັ້ນລົບລ້າງຕ້ອງລົບລ້າງຄຳພິພາກສາ ແລ້ວສົ່ງສຳນວນຄະດີໃຫ້ສານຂັ້ນອຸທອນທີ່ກ່ຽວຂ້ອງພິຈາລະນາຄືນໃໝ່.

### ມາດຕາ 102 ການພິຈາລະນາຄະດີຄືນໃໝ່ຂອງສານຂັ້ນອຸທອນ

ພາຍຫລັງທີ່ສານຂັ້ນລົບລ້າງ ຫາກໄດ້ລົບລ້າງຄຳພິພາກສາແລ້ວສົ່ງໃຫ້ສານຂັ້ນອຸທອນພິພາກສາຄືນໃໝ່ນັ້ນ ການພິຈາລະນາຄະດີໃຫ້ປະຕິບັດຕາມລະບຽບການ ທີ່ໄດ້ກຳນົດໄວ້ໃນມາດຕາ 90 ຂອງກົດໝາຍສະບັບນີ້.

ໃນກໍລະນີທີ່ຄຳພິພາກສາຂອງສານຂັ້ນອຸທອນຄະນະໃໝ່ ຫາກໄດ້ລົງຄຳພິພາກສາບໍ່ກົງກັບຄຳພິພາກສາຂອງສານຂັ້ນລົບລ້າງນັ້ນ ຖ້າຫາກຈຳເລີຍບໍ່ໄດ້ຂໍລົບລ້າງ ແລ້ວກໍໃຫ້ໄອຍະການປະຊາຊົນສູງສຸດສະເໜີຄັດຄ້ານຂຶ້ນສານປະຊາຊົນສູງສຸດໂດຍໜ້າທີ່.

ໃນການພິຈາລະນາຄະດີຄືນໃໝ່ນັ້ນ ຖ້າຫາກສານຂັ້ນລົບລ້າງ ຫາກໄດ້ພິພາກສາຄືເກົ່າ ແລະສົ່ງຄະດີຄືນໃຫ້ສານຂັ້ນອຸທອນເປັນເທື່ອທີ່ສອງແລ້ວ ສານຂັ້ນອຸທອນຄະນະໃໝ່ນັ້ນຕ້ອງໄດ້ປະຕິບັດຕາມຄຳພິພາກສາຂອງສານຂັ້ນລົບລ້າງນັ້ນຢ່າງເດັດຂາດ.

## ພາກທີ VIII ການປະຕິບັດຄຳຕັດສິນຂອງສານ

### ມາດຕາ 103 ຄຳຕັດສິນຂອງສານທີ່ຈະຕ້ອງປະຕິບັດ

ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະຄຳພິພາກສາຂອງສານທີ່ຈະຕ້ອງປະຕິບັດມີ:

1. ຄຳສັ່ງ, ຄຳຊີ້ຂາດ ແລະຄຳຕັດສິນຂອງສານປະຊາຊົນເມືອງ, ເທດສະບານທີ່ໃຊ້ໄດ້ຢ່າງເດັດຂາດ;
2. ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນຂອງສານຂັ້ນຕົ້ນ ທີ່ຈະຕ້ອງປະຕິບັດພາງ;
3. ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນຂັ້ນຕົ້ນ ແລະຄຳພິພາກສາຂັ້ນອຸທອນຂອງສານປະຊາຊົນແຂວງ, ນະຄອນ ທີ່ໃຊ້ໄດ້ຢ່າງເດັດຂາດ;
4. ຄຳສັ່ງ, ຄຳຊີ້ຂາດ ແລະຄຳພິພາກສາຂອງສານອຸທອນທີ່ໃຊ້ໄດ້ຢ່າງເດັດຂາດ;
5. ຄຳສັ່ງ, ຄຳຊີ້ຂາດ ແລະຄຳພິພາກສາຂອງສານປະຊາຊົນສູງສຸດ.

### ມາດຕາ 104 ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ມີ:

1. ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານຂອງພະແນກຍຸຕິທຳແຂວງ, ນະຄອນ ແລະໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂອງຫ້ອງການຍຸຕິທຳເມືອງ, ເທດສະບານກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ, ການປັບໃໝ, ການຮິບຊັບ ແລະໂທດດັດສ້າງໂດຍບໍ່ຕັດອິດສະລະພາບໃນຄະດີອາຍາ;
2. ຄ້າຍດັດສ້າງ ກ່ຽວກັບໂທດຕັດອິດສະລະພາບ ຊຶ່ງລາຍລະອຽດຈະມີລະບຽບການສະເພາະກຳນົດຕ່າງຫາກ.

ສ່ວນການປະຕິບັດ ຄຳສັ່ງ, ຄຳຊີ້ຂາດ ແລະຄຳພິພາກສາຂອງສານທະຫານທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ແມ່ນພະນັກງານປະຕິບັດຄຳຕັດສິນຂອງສານທະຫານ ຈະເປັນຜູ້ຮັບຜິດຊອບ ຊຶ່ງລາຍລະອຽດຈະມີລະບຽບການສະເພາະກຳນົດຕ່າງຫາກ.

## ມາດຕາ 105 ການປ່ອຍຕົວນັກໂທດ

ເມື່ອຜູ້ກະທຳຜິດຫາກໄດ້ປະຕິບັດໂທດຕັດອິດສະລະພາບຄົບຕາມກຳນົດ ທີ່ສານຕັດສິນແລ້ວ ເຈົ້າໜ້າທີ່ຄ້າຍດັດສ້າງຕ້ອງປ່ອຍຕົວຜູ້ກ່ຽວ, ຖ້າຜູ້ກ່ຽວຫາກຍັງບໍ່ທັນໄດ້ຖືກປ່ອຍຕົວນັ້ນ ໄອຍະການປະຊາຊົນຕ້ອງອອກຄຳສັ່ງປ່ອຍຕົວໃນທັນໃດ.

ການປ່ອຍຕົວນັກໂທດກ່ອນກຳນົດໂດຍມີເງື່ອນໄຂ ແມ່ນໃຫ້ປະຕິບັດຕາມມາດຕາ 47 ຂອງກົດໝາຍອາຍາ.

ການປ່ອຍຕົວດ້ວຍການໃຫ້ອະໄພຍະໂທດຂອງປະທານປະເທດ ເນື່ອງໃນວັນສຳຄັນຕ່າງໆຂອງຊາດນັ້ນ ໃຫ້ປະຕິບັດຕາມລະບຽບກ່ຽວກັບການໃຫ້ອະໄພຍະໂທດ.

ການປ່ອຍຕົວດ້ວຍການໃຫ້ນິລະໂທດກຳໃຫ້ປະຕິບັດຕາມມະຕິຕົກລົງຂອງສະພາແຫ່ງຊາດ.

ການປ່ອຍຕົວຕາມກໍລະນີຕ່າງໆທີ່ກ່າວມາເທິງນັ້ນ ຕ້ອງປະຕິບັດໃນທັນໃດ ເຖິງວ່າໂຈດທາງແພ່ງຈະຂໍອຸທອນ, ຂໍລົບລ້າງ ຫລືຜູ້ກະທຳຜິດ ຍັງບໍ່ທັນໄດ້ໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼືຄ່າປັບໃໝກໍຕາມ. ສຳລັບການໃຊ້ແທນຄ່າເສັຍຫາຍທາງແພ່ງ ຫລືຄ່າປັບໃໝນັ້ນ ມອບໃຫ້ຫ້ອງການ, ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຈັດຕັ້ງປະຕິບັດຕໍ່ໄປ.

## ມາດຕາ 106 ວິທີການຈັດຕັ້ງປະຕິບັດການປ່ອຍຕົວ

ການປ່ອຍຕົວໃຫ້ປະຕິບັດດັ່ງນີ້:

1. ພາຍຫຼັງທີ່ນັກໂທດໄດ້ປະຕິບັດໂທດຢ່າງຄົບຖ້ວນຕາມຄຳຕັດສິນຂອງສານ, ໄດ້ຮັບການປ່ອຍຕົວກ່ອນກຳນົດ ຫລືໄດ້ຮັບການປ່ອຍຕົວຕາມຄຳສັ່ງຂອງໄອຍະການປະຊາຊົນແລ້ວ ຄະນະຮັບຜິດຊອບຄ້າຍດັດສ້າງຕ້ອງກະກຽມ ແລະນຳເອົາບຸກຄົນທີ່ຈະຖືກປ່ອຍຕົວນັ້ນ ມາສຶກສາອົບຮົມພ້ອມທັງຂຽນໃບປະຕິຍານຕົນ. ໃນເວລາປ່ອຍຕົວນັ້ນໃຫ້ເຊີນອົງການປົກຄອງບ້ານ ແລະແຈ້ງໃຫ້ຄອບຄົວ ຫລືຍາດພີ່ນ້ອງຂອງຜູ້ກ່ຽວເຂົ້າຮ່ວມນຳ ແລະມອບໃຫ້ອົງການປົກຄອງບ້ານສືບຕໍ່ສຶກສາອົບຮົມ;

2. ເຈົ້າໜ້າທີ່ຜູ້ຮັບຜິດຊອບຮັກສາວັດຖຸສິ່ງຂອງຕິດຕົວທີ່ຖືກຕ້ອງຕາມກົດໝາຍຂອງຜູ້ຖືກປ່ອຍຕົວ ຕ້ອງໄດ້ມອບສິ່ງຂອງດັ່ງກ່າວຄືນໃຫ້ຜູ້ກ່ຽວຢ່າງຄົບຖ້ວນ ແລະໃນສະພາບເດີມ ໂດຍໃຫ້ເຮັດບົດບັນທຶກມອບຮັບຢ່າງຄັກແນ່. ໃນກໍລະນີທີ່ການສິ່ງວັດຖຸສິ່ງຂອງນັ້ນ ຫາກບໍ່ຄົບຖ້ວນ ແລະບໍ່ຢູ່ໃນສະພາບເດີມແລ້ວ ເຈົ້າໜ້າທີ່ຜູ້ຮັກສາຈະມີຄວາມຮັບຜິດຊອບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 64 ຂອງກົດໝາຍສະບັບນີ້;
3. ໃນກໍລະນີທີ່ຜູ້ຖືກປ່ອຍຕົວ ຫາກບໍ່ມີຄອບຄົວ ຫລືຍາດພີ່ນ້ອງມາຮັບເອົາ ຫລືບໍ່ມີເງື່ອນໄຂຈະກັບບ້ານດ້ວຍຕົນເອງ ຄະນະຮັບຜິດຊອບຄ້າຍດັດສ້າງຕ້ອງຈັດຫາຄ່າກິນ ແລະຄ່າເດີນທາງ ຕາມເງື່ອນໄຂອັນເໝາະສົມໃຫ້ຜູ້ກ່ຽວ ພ້ອມທັງມີເອກະສານມອບໃຫ້ອົງການປົກຄອງບ້ານຢ່າງຄັກແນ່;
4. ໃນການປ່ອຍຕົວນັ້ນ ຄະນະຮັບຜິດຊອບຄ້າຍດັດສ້າງຕ້ອງເຮັດບົດບັນທຶກການປ່ອຍຕົວຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.
5. ໃນກໍລະນີການປ່ອຍຕົວນັກໂທດ ຊຶ່ງເປັນຄົນຕ່າງປະເທດ ທີ່ຍັງບໍ່ທັນໄດ້ໃຊ້ແທນຄ່າເສຍຫາຍທາງແພ່ງນັ້ນ ຕ້ອງມີມາດຕະການຈຳກັດບໍ່ອະນຸຍາດໃຫ້ອອກຈາກປະເທດລາວ ຈົນກວ່າຈະໃຊ້ແທນຄ່າເສຍຫາຍຄົບຕາມຈຳນວນ.

### ມາດຕາ 107 ການຈັດຕັ້ງປະຕິບັດໂທດປະຫານຊີວິດ

ເມື່ອຄຳຕັດສິນປະຫານຊີວິດໃຊ້ໄດ້ເດັດຂາດແລ້ວ ເພື່ອກວດກາຄວາມຖືກຕ້ອງຂອງຄຳຕັດສິນດັ່ງກ່າວ ປະທານສານປະຊາຊົນສູງສຸດຈະອອກຄຳສັ່ງຊີ້ຂາດ ກ່ຽວກັບການຈັດຕັ້ງປະຫານຊີວິດ. ຖ້າຄຳຊີ້ຂາດຂອງປະທານສານປະຊາຊົນສູງສຸດ ຫາກຢັ້ງຢືນເອົາການປະຫານຊີວິດຕາມຄຳຕັດສິນຂອງສານແລ້ວ ຜູ້ຖືກຕັດສິນປະຫານຊີວິດ ມີສິດຮ້ອງຂໍອະໄພຍະໂທດໄປຍັງປະທານປະເທດ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນລົງຄຳຊີ້ຂາດ ຫລືວັນຮັບຊາບຄຳຊີ້ຂາດເປັນຕົ້ນໄປ.

ການຈັດຕັ້ງປະຕິບັດໂທດປະຫານຊີວິດຈະດຳເນີນໄດ້ ພາຍຫລັງໜຶ່ງປີ ນັບແຕ່ວັນປະທານປະເທດອອກຄຳຕົກລົງບໍ່ໃຫ້ອະໄພຍະໂທດເປັນຕົ້ນໄປ ຫລືນັບແຕ່ວັນສານປະຊາຊົນສູງສຸດອອກຄຳຊີ້ຂາດເປັນຕົ້ນໄປ ໃນກໍລະນີທີ່ບໍ່ມີການຂໍອະໄພຍະໂທດ;

ການຈັດຕັ້ງປະຕິບັດໂທດປະຫານຊີວິດ ມີລະບຽບການສະເພາະຕ່າງຫາກ.

## ພາກທີ IX ການຮື້ຟື້ນຄະດີ

### ມາດຕາ 108 ການຮັບເອົາຄະດີທີ່ຖືກຮື້ຟື້ນມາພິຈາລະນາ

ຄຳຕັດສິນ ຫລືຄຳພິພາກສາຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ສາມາດຮື້ຟື້ນໄດ້.

ມີແຕ່ສານປະຊາຊົນສູງສຸດເທົ່ານັ້ນ ຈຶ່ງມີສິດອຳນາດໃນການພິຈາລະນາຄະດີເປັນຂັ້ນຮື້ຟື້ນ.

ສານປະຊາຊົນສູງສຸດຈະຮັບເອົາຄະດີອາຍາ ມາພິຈາລະນາເປັນຂັ້ນຮື້ຟື້ນໄດ້ ກໍຕໍ່ເມື່ອມີຄໍາສະເໜີຂອງໄອຍະການປະຊາຊົນສູງສຸດ ບົນພື້ນຖານຂໍ້ມູນຫລັກຖານໃໝ່ເທົ່ານັ້ນ.

ການຮື້ຟື້ນຄະດີ ແມ່ນດໍາເນີນຕາມຄໍາຮ້ອງຂໍຂອງຄູ່ຄວາມ ຫລືໂດຍໜ້າທີ່ຂອງໄອຍະການປະຊາຊົນສູງສຸດ. ການຮື້ຟື້ນຄະດີໂດຍໜ້າທີ່ຂອງໄອຍະການປະຊາຊົນສູງສຸດ ແມ່ນເພື່ອຄວາມຖືກຕ້ອງຕາມກົດໝາຍ.

## ມາດຕາ 109 ສາເຫດທີ່ພາໃຫ້ມີການຮື້ຟື້ນຄະດີ

ສາເຫດທີ່ພາໃຫ້ມີການຮື້ຟື້ນຄະດີໃນກໍລະນີທີ່ໄດ້ພົບເຫັນຂໍ້ມູນ ຫລືຫລັກຖານໃໝ່ມີດັ່ງນີ້:

1. ພະຍານໃນຄະດີໄດ້ໃຫ້ການເທັດ, ຜູ້ຊ່ຽວຊານໄດ້ໃຫ້ຄໍາເຫັນເທັດ, ມີການແປພາສາເທັດ ຫລືການໃຊ້ຫລັກຖານປອມ ຊຶ່ງພາໃຫ້ການຕັດສິນຄະດີມີຄວາມຜິດພາດ;
2. ຜູ້ພິພາກສາ, ໄອຍະການປະຊາຊົນ, ພະນັກງານສອບສວນ ຫລືເຈົ້າໜ້າທີ່ສືບສວນ-ສອບສວນໄດ້ເຂົ້າຂ້າງອອກຂາ ຊຶ່ງພາໃຫ້ການຕັດສິນຄະດີມີຄວາມຜິດພາດ;
3. ເຫດການອື່ນໆທີ່ຊີ້ບອກເຖິງຄວາມຜິດ ຫລືຄວາມບໍລິສຸດຂອງຜູ້ຖືກຕັດສິນຊຶ່ງສານບໍ່ໄດ້ຮູ້ໃນເວລາລົງຄໍາຕັດສິນ ຫລືຄໍາພິພາກສານັ້ນ.

## ມາດຕາ 110 ກໍານົດເວລາຮື້ຟື້ນຄະດີ

ການຮື້ຟື້ນຄະດີໃນກໍລະນີທີ່ໄດ້ພົບເຫັນຂໍ້ມູນ ຫລືຫລັກຖານໃໝ່ ຊຶ່ງມີຈຸດປະສົງຢາກເຮັດໃຫ້ຄວາມຮັບຜິດຊອບທາງອາຍາຂອງຜູ້ຖືກຕັດສິນໜັກຂຶ້ນນັ້ນ ຈະດໍາເນີນໄດ້ແຕ່ພາຍໃນກໍານົດໜຶ່ງປີເທົ່ານັ້ນ ນັບແຕ່ວັນທີ່ຄໍາຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດເປັນຕົ້ນໄປ. ສ່ວນການຮື້ຟື້ນຄະດີ ເພື່ອເຮັດໃຫ້ຄວາມຮັບຜິດຊອບທາງອາຍາຂອງຜູ້ຖືກຕັດສິນເບົາລົງ ຫລືຕົກໄປນັ້ນ ຈະດໍາເນີນໄດ້ໂດຍບໍ່ມີກໍານົດເວລາ.

ການເສຍຊີວິດຂອງຜູ້ຖືກຕັດສິນ ຈະບໍ່ເປັນອຸປະສັກໃຫ້ແກ່ການຮື້ຟື້ນຄະດີ ເພື່ອຈຸດປະສົງຢາກຊອກຫາຄວາມຈິງ ກ່ຽວກັບການກ່າວຫາໃສ່ຜູ້ກ່ຽວ.

## ມາດຕາ 111 ການສືບສວນ-ສອບສວນຄະດີອາຍາໃນກໍລະນີທີ່ພົບເຫັນສະພາບການ ຫລືຫຼັກຖານໃໝ່

ບຸກຄົນ ຫລືການຈັດຕັ້ງໃດທີ່ໄດ້ພົບເຫັນສະພາບການ ຫລືຫຼັກຖານໃໝ່ ກ່ຽວກັບຄະດີຊຶ່ງມີຄໍາຊີ້ຂາດ, ຄໍາຕັດສິນ ຫລືຄໍາພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ຕ້ອງຍື່ນຄໍາຮ້ອງຂອງຕົນ ຫລືແຈ້ງຕໍ່ໄອຍະການປະຊາຊົນແຂວງ, ນະຄອນ.

ໃນເມື່ອມີສາເຫດໃດໜຶ່ງ ທີ່ກໍານົດໄວ້ໃນມາດຕາ 109 ຂອງກົດໝາຍສະບັບນີ້ແລ້ວ ໄອຍະການປະຊາຊົນຕ້ອງອອກຄໍາສັ່ງເປີດການສືບສວນ-ສອບສວນ ກ່ຽວກັບການພົບເຫັນສະພາບການ ຫລືຫຼັກຖານໃໝ່.

ໃນກໍລະນີທີ່ໄອຍະການປະຊາຊົນຫາກເຫັນວ່າ ບໍ່ມີເຫດຜົນໃນການຮື້ຟື້ນຄະດີຄືນໃໝ່ນັ້ນ ໄອຍະການປະຊາຊົນຕ້ອງອອກຄຳສັ່ງບໍ່ໃຫ້ເປີດການສືບສວນ-ສອບສວນ. ຄຳສັ່ງບໍ່ໃຫ້ເປີດການສືບສວນ-ສອບສວນຂອງໄອຍະການປະຊາຊົນນັ້ນ ຕ້ອງແຈ້ງໃຫ້ບຸກຄົນ ຫລືອົງການຈັດຕັ້ງທີ່ກ່ຽວຂ້ອງຊາບ ແລ້ວຜູ້ກ່ຽວກໍມີສິດຂໍລົບລ້າງຄຳສັ່ງດັ່ງກ່າວຕໍ່ໄອຍະການປະຊາຊົນຂັ້ນເທິງ.

### ມາດຕາ 112 ການເຄື່ອນໄຫວຂອງໄອຍະການປະຊາຊົນໃນການຮື້ຟື້ນຄະດີ

ພາຍຫຼັງທີ່ການສືບສວນ-ສອບສວນຄະດີ ເນື່ອງຈາກການພົບເຫັນສະພາບການ ຫລືຫຼັກຖານໃໝ່ໄດ້ສິ້ນສຸດແລ້ວ ຖ້າຫາກເຫັນວ່າມີເຫດຜົນພຽງພໍໃນການຮື້ຟື້ນຄະດີນັ້ນ ໄອຍະການປະຊາຊົນຕ້ອງສົ່ງສຳນວນຄະດີ ພ້ອມດ້ວຍເອກະສານຕ່າງໆຂອງການສືບສວນ-ສອບສວນ ແລະຄຳຖະແຫຼງຂອງຕົນໄປໃຫ້ໄອຍະການປະຊາຊົນສູງສຸດ ເພື່ອສະເໜີຮື້ຟື້ນຄະດີນັ້ນຕໍ່ສານປະຊາຊົນສູງສຸດ. ແຕ່ຖ້າຫາກເຫັນວ່າບໍ່ມີເຫດຜົນພຽງພໍໃນການຮື້ຟື້ນຄະດີແລ້ວ ໄອຍະການປະຊາຊົນຕ້ອງອອກຄຳສັ່ງຊັດມ້ຽນຄະດີ ແລ້ວແຈ້ງຄຳສັ່ງດັ່ງກ່າວໃຫ້ບຸກຄົນ ຫລືການຈັດຕັ້ງທີ່ກ່ຽວຂ້ອງຊາບ.

### ມາດຕາ 113 ສິດອຳນາດຂອງສານປະຊາຊົນໃນການພິຈາລະນາການຮື້ຟື້ນຄະດີຄືນໃໝ່

ໃນການພິຈາລະນາການຮື້ຟື້ນຄະດີຄືນໃໝ່ ສານປະຊາຊົນສູງສຸດມີສິດອຳນາດດັ່ງນີ້:

1. ຍົກເລີກຄຳສະເໜີຂອງໄອຍະການປະຊາຊົນສູງສຸດ;
2. ລົບລ້າງຄຳຕັດສິນ ຫລືຄຳພິພາກສາ ແລ້ວໃຫ້ຈຳເລີຍພົ້ນຂໍ້ກ່າວຫາ;
3. ລົບລ້າງຄຳຕັດສິນ ຫຼືຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແລ້ວສົ່ງສຳນວນຄະດີຄືນໃຫ້ສານຂັ້ນຕົ້ນຄະນະໃໝ່ພິຈາລະນາ.

   ການພິຈາລະນາຄະດີຢູ່ສານຂັ້ນຕົ້ນຄະນະໃໝ່ ໃຫ້ປະຕິບັດຕາມລະບຽບການທົ່ວໄປຂອງການດຳເນີນຄະດີຢູ່ສານຂັ້ນຕົ້ນ.

## ພາກທີ X ມາດຕະການ ກ່ຽວກັບການປິ່ນປົວ

### ມາດຕາ 114 ການນຳໃຊ້ມາດຕະການປິ່ນປົວ

ໃນເວລາດຳເນີນການສືບສວນ-ສອບສວນ ຫລືໃນເວລາດຳເນີນຄະດີຢູ່ສານ ຫລືໃນເວລາປະຕິບັດໂທດ ໄອຍະການປະຊາຊົນ ຫລືສານປະຊາຊົນມີສິດນຳໃຊ້ມາດຕະການປິ່ນປົວຕໍ່ຜູ້ຖືກກັກຂັງພາງ, ຜູ້ຖືກປະຕິບັດໂທດ ທີ່ເປັນບ້າ, ເສັຍຈິດ, ເຈັບເປັນໜັກ ຫລືເປັນພະຍາດຕິດແປດ, ຕິດເຫຼົ້າ ຫລືຢາເສບຕິດ ໂດຍມີການຢັ້ງຢືນຈາກຄະນະແພດ ດ້ວຍການສົ່ງໄປປິ່ນປົວທີ່ໂຮງໝໍ ຫລືສະຖານທີ່ປິ່ນປົວສະເພາະ. ພາຍຫລັງທີ່ໄດ້ປິ່ນປົວດີແລ້ວ ຕ້ອງນຳເອົາຜູ້ກ່ຽວມາດຳເນີນຄະດີ ຫລືນຳມາປະຕິບັດໂທດຕໍ່ ຖ້າຫາກວ່າຍັງບໍ່ທັນໝົດອາຍຸຄວາມໃນການຮ້ອງຟ້ອງ ຫລືຍັງບໍ່ທັນໝົດກຳນົດເວລາໃນການປະຕິບັດໂທດ.

ກຳນົດເວລາການປິ່ນປົວ ໃຫ້ນັບເຂົ້າໃນກຳນົດເວລາການປະຕິບັດໂທດ.

### ມາດຕາ 115 ການອະນຸຍາດໃຫ້ອອກປິ່ນປົວໃນກໍລະນີຮີບດ່ວນ

ໃນກໍລະນີຜູ້ຖືກຫາ, ຈຳເລີຍ ຜູ້ປະຕິບັດໂທດຫາກເຈັບເປັນຢ່າງກະທັນຫັນ ແລະແພດປະຈຳສະຖານທີ່ກັກຂັງບໍ່ສາມາດຈະປິ່ນປົວໄດ້ ເຈົ້າໜ້າທີ່ຮັບຜິດຊອບຄ້າຍຄຸມຂັງຕ້ອງນຳຜູ້ເຈັບເປັນໄປປິ່ນປົວທີ່ໂຮງໝໍຂອງລັດ ແລ້ວລາຍງານໃຫ້ໄອຍະການປະຊາຊົນ ຫລືສານປະຊາຊົນຊາບ.

### ມາດຕາ 116 ການຄຸ້ມຄອງປ້ອງກັນຜູ້ທີ່ຖືກປິ່ນປົວ

ຜູ້ຖືກຫາ, ຈຳເລີຍ ຫລືນັກໂທດທີ່ຖືກນຳໄປປິ່ນປົວນັ້ນ ຕ້ອງໃຫ້ໄປປິ່ນປົວຢູ່ໂຮງໝໍ ຫລືສະຖານທີ່ປິ່ນປົວສະເພາະຂອງລັດເທົ່ານັ້ນ.

ການຄຸ້ມຄອງປ້ອງກັນຜູ້ທີ່ຖືກປິ່ນປົວ ແມ່ນຄວາມຮັບຜິດຊອບຂອງເຈົ້າໜ້າທີ່ຕຳຫຼວດ ເພື່ອບໍ່ໃຫ້ຜູ້ກ່ຽວໂຕນໜີຈາກການດຳເນີນຄະດີ ຫລືການປະຕິບັດໂທດ. ຖ້າເຈົ້າໜ້າທີ່ຫາກເຮັດໃຫ້ຜູ້ຖືກຫາ ຫລືນັກໂທດທີ່ເອົາໄປປິ່ນປົວນັ້ນໂຕນໜີ ຈະໄດ້ຮັບຜິດຊອບທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 161 ຂອງກົດໝາຍອາຍາ.

ການໃຊ້ຈ່າຍເຂົ້າໃນການປິ່ນປົວ ແມ່ນຄວາມຮັບຜິດຊອບຂອງລັດ.

## ພາກທີ XI ການຮ່ວມມືສາກົນ ກ່ຽວກັບການດຳເນີນຄະດີອາຍາ

### ມາດຕາ 117 ຫຼັກການໃນການຮ່ວມມືສາກົນ ກ່ຽວກັບການດຳເນີນຄະດີອາຍາ

ການຮ່ວມມືສາກົນໃນການດຳເນີນຄະດີອາຍາລະຫວ່າງອົງການທີ່ມີສິດອຳນາດດຳເນີນຄະດີອາຍາຂອງ ສ.ປ.ປ.ລາວ ແລະຂອງຕ່າງປະເທດ ຕ້ອງປະຕິບັດບົນຫຼັກການເຄົາລົບຄວາມເປັນເອກະລາດ, ອຳນາດອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງຊາດ, ບໍ່ແຊກແຊງເຂົ້າໃນວຽກງານພາຍໃນຂອງກັນ, ສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ, ສອດຄ່ອງກັບລັດຖະທຳມະນູນແຫ່ງ ສ.ປ.ປ.ລາວ ແລະຫຼັກການພື້ນຖານຂອງກົດໝາຍສາກົນ.

### ມາດຕາ 118 ການຮ່ວມມືສາກົນໃນການດຳເນີນຄະດີອາຍາ

ການຮ່ວມມືສາກົນໃນການດຳເນີນຄະດີອາຍາ ຕ້ອງດຳເນີນໃຫ້ສອດຄ່ອງກັບສັນຍາທີ່ ສ.ປ.ປ.ລາວໄດ້ເຊັນກັບຕ່າງປະເທດ ຫລືສົນທິສັນຍາສາກົນທີ່ ສ.ປ.ປ.ລາວ ເຂົ້າຮ່ວມເປັນພາຄີ ແລະຕາມກົດໝາຍຂອງ ສ.ປ.ປ.ລາວ.

ໃນກໍລະນີທີ່ ສ.ປ.ປ.ລາວ ບໍ່ທັນໄດ້ເຊັນສັນຍາ ຫລືບໍ່ທັນໄດ້ເຂົ້າຮ່ວມເປັນພາຄີໃນສົນທິສັນຍາສາກົນທີ່ພົວພັນເຖິງການດຳເນີນຄະດີອາຍານັ້ນ ຕ້ອງໃຫ້ດຳເນີນຕາມຫຼັກການຮ່ວມມືຊ່ວຍເຫຼືອຊຶ່ງກັນ ແລະກັນ ແຕ່ບໍ່ໃຫ້ຂັດກັບກົດໝາຍຂອງ ສ.ປ.ປ.ລາວ.

### ມາດຕາ 119 ການປະຕິບັດການຊ່ວຍເຫຼືອທາງດ້ານຍຸຕິທຳ

ໃນການປະຕິບັດການຊ່ວຍເຫຼືອທາງດ້ານຍຸຕິທຳ, ອົງການທີ່ມີສິດອຳນາດໃນການດຳເນີນຄະດີອາຍາຂອງ ສ.ປ.ປ.ລາວ ຕ້ອງປະຕິບັດຕາມສັນຍາທີ່ ສ.ປ.ປ.ລາວ ໄດ້ເຊັນກັບຕ່າງປະເທດ

ຫລືສົນທິສັນຍາທີ່ ສ.ປ.ປ.ລາວ ໄດ້ເຂົ້າຮ່ວມເປັນພາຄີ ແລະຕ້ອງໃຫ້ສອດຄ່ອງກັບກົດໝາຍສະບັບນີ້.

ການຊ່ວຍເຫຼືອທາງດ້ານຍຸຕິທຳ ອາດຈະແນໃສ່ການສົ່ງຜູ້ຮ້າຍຂ້າມແດນ, ການແລກປ່ຽນນັກໂທດ, ການຍຶດ ຫລືການອາຍັດຊັບຂອງຜູ້ຖືກຫາ ຫລືຈຳເລີຍ, ການປະຕິບັດຄຳຕັດສິນຂອງສານ, ການຮ່ວມມືກັນຕ້ານອາດຊະຍາກຳຂ້າມຊາດຕາມຊາຍແດນ ແລະອື່ນໆ.

### ມາດຕາ 120 ການປະຕິເສດໃນການຊ່ວຍເຫຼືອທາງດ້ານຍຸຕິທຳ

ອົງການທີ່ມີສິດອຳນາດໃນການດຳເນີນຄະດີອາຍາຂອງ ສ.ປ.ປ.ລາວ ອາດຈະປະຕິເສດໃນການຊ່ວຍເຫຼືອທາງດ້ານຍຸຕິທຳ ໃນກໍລະນີດັ່ງນີ້:

1. ການສະເໜີຊ່ວຍເຫຼືອທາງດ້ານຍຸຕິທຳທີ່ບໍ່ສອດຄ່ອງກັບສັນຍາທີ່ ສ.ປ.ປ.ລາວ ໄດ້ເຊັນກັບຕ່າງປະເທດ, ສົນທິສັນຍາສາກົນທີ່ ສ.ປ.ປ.ລາວ ໄດ້ເຂົ້າຮ່ວມເປັນພາຄີ ແລະກົດໝາຍຂອງ ສ.ປ.ປ.ລາວ;
2. ການປະຕິບັດການຊ່ວຍເຫຼືອທາງດ້ານຍຸຕິທຳ ທີ່ຈະເປັນຜົນກະທົບຕໍ່ອຳນາດອະທິປະໄຕ, ຄວາມສະຫງົບ ແລະຄວາມໝັ້ນຄົງຂອງຊາດ ຫຼືຜົນປະໂຫຍດອັນສຳຄັນຂອງ ສ.ປ.ປ.ລາວ.

## ພາກທີ XII ບົດບັນຍັດສຸດທ້າຍ

### ມາດຕາ 121 ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສ.ປ.ປ.ລາວ ເປັນຜູ້ອອກລະບຽບການຈັດຕັ້ງປະຕິບັດກົດໝາຍສະບັບນີ້.

ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະພາກສ່ວນທີ່ກ່ຽວຂ້ອງອື່ນໆເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້ຢ່າງເຂັ້ມງວດ.

### ມາດຕາ 122 ຜົນສັກສິດ

ກົດໝາຍສະບັບນີ້ມີຜົນສັກສິດ ນັບແຕ່ວັນປະທານປະເທດແຫ່ງ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ປ່ຽນແທນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບເລກທີ 30 / ສປສ ລົງວັນທີ 23 ທັນວາ 1989.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ